ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ

ຄະນະໂຄສະນາອົບຮົມສູນກາງພັກ ເລກທີ____/ຄອສພ

ນະຄອນຫຼວງວຽງຈັນ, ວັນທີ ____/__/2018

# ບົດແນະນຳ
# ຂອງຄະນະໂຄສະນາອົບຮົມສູນກາງພັກ
# ກ່ຽວກັບການນຳໃຊ້ເອກະສານສຶກສາອົບຮົມການເມືອງ-ແນວຄິດ ເພື່ອກະກຽມ ດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນສຳລັບສະມາຊິກພັກ-ພະນັກງານຫຼັກແຫຼ່ງ

**ເຖິງ:** ຄະນະພັກບັນດາກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງ, ຄະນະພັກແຂວງ, ເມືອງ, ນະຄອນ ແລະ ຮາກ ຖານພັກໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການນຳໃຊ້ເອກະສານ ແລະ ຈັດຕັ້ງສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະ ນັກງານຫຼັກແຫຼ່ງ.

- ປະຕິບັດຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 04/ຄລສພ, ລົງວັນທີ 07/05/ 2018 ວ່າດ້ວຍການກະກຽມດຳເນີນກອງປະຊຸມໃຫຍ່ ອົງຄະນະພັກກະຊວງ-ອົງການ, ແຂວງ, ນະຄອນຫຼວງ; ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ໃນຂອບເຂດທົ່ວປະເທດ ໄດ້ກຳນົດໄວ້ວ່າ ມອບໃຫ້ຄະນະ ໂຄສະນາອົບຮົມສູນກາງພັກ ກຳນົດເນື້ອໃນໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ແລະ ອອກບົດແນະນຳ ໃນການຈັດຕັ້ງເຜີຍແຜ່ຮ່ຳຮຽນເອກະສານສຳຄັນຕ່າງໆ. ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າຮຽບຮຽງ ເອກະສານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະນັກງານຫຼັກແຫຼ່ງຢູ່ບັນດາກະຊວງ- ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຮາກຖານໃຫ້ ສອດຄ່ອງກັບເນື້ອໃນຂອງຄຳສັ່ງແນະນຳດັ່ງກ່າວ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະ ໂຄສະນາອົບຮົມສູນກາງພັກ ແນະນຳບາງບັນຫາ ດັ່ງນີ້:

**I. ຈຸດປະສົງ-ລະດັບຄາດໝາຍ.**

- ແນໃສ່ຍົກລະດັບຄວາມຮັບຮູ້-ເຂົ້າໃຈຂອງສະມາຊິກພັກ ກ່ຽວກັບເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງ ທີ X ຂອງພັກ ໃຫ້ເລິກເຊິ່ງກວ່າເກົ່າ ໂດຍສະເພາະແມ່ນການເສີມຂະຫຍາຍມູນເຊື້ອ ແລະ ຄວາມສາມັກຄີເປັນ ເອກະພາບພາຍໃນພັກ; ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ; ຕັ້ງໜ້າຝຶກຝົນຫຼໍ່ ຫຼອມຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

- ບົນພື້ນຖານຄວາມຮັບຮູ້-ເຂົ້າໃຈດັ່ງກ່າວນັ້ນ ເຮັດໃຫ້ການຈັດຕັ້ງພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ ເພື່ອສືບຕໍ່ເຮັດສໍາເລັດໜ້າທີ່ການເມືອງ ໃນເງື່ອນໄຂປັດຈຸບັນໄດ້ເປັນຢ່າງດີ.

**II. ເປົ້າໝາຍສຶກສາອົບຮົມ.**

ສະມາຊິກພັກ-ພະນັກງານຫຼັກແຫຼ່ງ ເຮັດວຽກຢູ່ບັນດາກະຊວງ, ອົງການທຽບເທົ່າ, ອ້ອມຂ້າງສູນກາງ, ນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ແລະ ຮາກຖານ, ກຸ່ມບ້ານ, ບໍລິສັດ, ໂຮງງານ ແລະ ກົມກອງການຜະລິດ.

III. **ເນື້ອໃນ.**

1). ເສີມຂະຫຍາຍມູນເຊື້ອ ແລະ ຄວາມສາມັກຄີເປັນເອກະພາບພາຍໃນພັກ.

2). ຍົກສູງຄວາມສາມາດນໍາພາ ແລະ ຄວາມເປັນແບບຢ່າງນໍາໜ້າຂອງພັກ.

3). ຕັ້ງໜ້າຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ ແລະ ຄຸນສົມບັດສິນທໍາປະຕິວັດ.

IV. **ວິທີຈັດຕັ້ງປະຕິບັດ.**

- ໃຫ້ຄະນະພັກກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ແລະ ຄະນະພັກຮາກຖານ ແຕ່ລະບ່ອນເອົາເອກະສານນີ້ ຈັດຕັ້ງສຶກສາອົບຮົມສະມາຊິກພັກ-ພະນັກງານຫຼັກແຫຼ່ງ ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເລິກເຊິ່ງ ໂດຍອີງໃສ່ສະພາບຕົວຈິງຂອງແຕ່ລະບ່ອນ. ໝາຍຄວາມວ່າບ່ອນໃດມີສະມາຊິກພັກ-ພະນັກງານຫຼັກແຫຼ່ງຫຼາຍອາດຈັດຕັ້ງສຶກສາອົບຮົມເປັນຫຼາຍຊຸດ ຕາມຄວາມເໝາະສົມຂອງແຕ່ລະບ່ອນ.

- ກໍານົດເວລາຮຽນເອກະສານ 1 ວັນ.

- ພາຍຫຼັງຈັດຕັ້ງຮຽນສໍາເລັດ ລາຍງານໃຫ້ຄະນະໂຄສະນາອົບຮົມສູນກາງພັກຮັບຊາບ.

ດັ່ງນັ້ນ, ຈຶ່ງແນະນໍາມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫ້ອງໜ້າຄະນະໂຄສະນາອົບຮົມສູນກາງພັກ**

**ເອກະສານ**
**ສຶກສາອົບຮົມການເມືອງ-ແນວຄິດ ເພື່ອກະກຽມດຳເນີນກອງ**
**ປະຊຸມໃຫຍ່ຂອງພັກ 3 ຂັ້ນ ສຳລັບສະມາຊິກພັກ-ພະນັກງານຫຼັກແຫຼ່ງ**

# ບົດທີ 1
# ເສີມຂະຫຍາຍມູນເຊື້ອ ແລະ ຄວາມສາມັກຄີເປັນເອກະພາບພາຍໃນພັກ

## I. ການກຳເນີດ ແລະ ທາດແທ້ຂອງພັກປະຊາຊົນປະຕິວັດລາວ.

### 1. ການກຳເນີດຂອງພັກປະຊາຊົນປະຕິວັດລາວ.

ພັກປະຊາຊົນປະຕິວັດລາວ ກຳເນີດຈາກລັດທິຮັກຊາດທີ່ແທ້ຈິງຂອງປະຊາຊົນລາວບັນດາເຜົ່າ ຊຶ່ງມີຫຼາຍຂະບວນການຕໍ່ສູ້ທີ່ດຸເດືອດ ເຊັ່ນ: ຂະບວນການຕໍ່ສູ້ຂອງປະຊາຊົນ ຢູ່ແຂວງສະຫວັນນະເຂດ ແຕ່ປີ 1901-1903 ພາຍໃຕ້ການນຳພາຂອງພໍ່ກະດວດ; ຂະບວນການລຸກຮື້ຂຶ້ນດ້ວຍອາວຸດ ຂອງປະຊາຊົນພາກໃຕ້ ແຕ່ປີ 1901-1937 ພາຍໃຕ້ການນຳພາຂອງອົງແກ້ວ ແລະ ອົງກົມມະດຳ; ຂະບວນການຕໍ່ສູ້ຂອງປະຊາຊົນເຜົ່າລື້ຢູ່ເມືອງສິງ ແຕ່ປີ 1914-1918; ຂະບວນການຕໍ່ສູ້ຂອງປະຊາຊົນເຜົ່າຜູ້ໄທ ຢູ່ຊຳເໜືອໃນປີ 1916 ແລະ ຂະບວນການຕໍ່ສູ້ຂອງປະຊາຊົນເຜົ່າມົ້ງ ຢູ່ບັນດາແຂວງພາກເໜືອ ພາຍໃຕ້ການນຳພາຂອງເຈົ້າຟ້າປັດໄຈ ແຕ່ປີ 1918-1922 ແລະ ຂະບວນການຕໍ່ສູ້ອື່ນໆຢູ່ທ້ອງຖິ່ນຕ່າງໆ.

ປີ 1930 ປະທານ ໂຮ່ຈິມິນ ໄດ້ສ້າງຕັ້ງພັກກອມມູນິດອິນດູຈີນ, ເພິ່ນໄດ້ນຳເອົາລັດທິມາກ-ເລນິນ ແລະ ແນວທາງການປະຕິວັດເຂົ້າມາເຜີຍແຜ່ສຶກສາອົບຮົມພະນັກງານຮາກຖານຂອງລາວ. ປີ 1934 ຄະນະພັກແຄວ້ນລາວທີ່ຂຶ້ນກັບພັກກອມມູນິດອິນດູຈີນ ໄດ້ຮັບການສ້າງຕັ້ງຂຶ້ນຢູ່ດອນຊິງຊູ້ ນະຄອນຫຼວງວຽງຈັນ ເພື່ອນຳພາການປະຕິວັດລາວໂດຍກົງ.

ພາຍໃຕ້ການນຳພາຂອງພັກກອມມູນິດອິນດູຈີນ ຂະບວນການຕໍ່ສູ້ຂອງປະຊາຊົນ 3 ຊາດ ໄດ້ເຕີບໃຫຍ່ຂະຫຍາຍຕົວທາງດ້ານປະລິມານ ແລະ ຄຸນນະພາບ ແລະ ຮຽກຮ້ອງໃຫ້ມີພັກນຳພາຢູ່ແຕ່ລະປະເທດ. ສະນັ້ນ, ເພື່ອສືບທອດພາລະກິດຂອງພັກກອມມູນິດອິນດູຈີນ ມາໃນວັນທີ 22 ມີນາ ປີ 1955 ປະທານ ໄກສອນ ພົມວິຫານ ພ້ອມດ້ວຍໝູ່ຄະນະທີ່ເປັນສະມາຊິກພັກກອມມູນິດອິນດູຈີນໃນເວລານັ້ນ ໄດ້ຈັດຕັ້ງກອງປະຊຸມສ້າງຕັ້ງພັກຂຶ້ນ ໂດຍໃສ່ຊື່ວ່າ: **"ພັກປະຊາຊົນລາວ"** ຕໍ່ມາປ່ຽນຊື່ເປັນ **"ພັກປະຊາຊົນປະຕິວັດລາວ"** (ໃນກອງປະຊຸມໃຫຍ່ ຄັ້ງທີ II ຂອງພັກ ປີ 1972).

ປະທານ ໄກສອນ ພົມວິຫານ ໄດ້ຢືນຢັນແຕ່ຫົວທີວ່າ: "ພັກເຮົາ ໄດ້ດຳເນີດຂຶ້ນໂດຍການປະສານສົມທົບລະຫວ່າງລັດທິມາກ-ເລນິນ ກັບລັດທິຮັກຊາດອັນແທ້ຈິງ ແລະ ລັດທິສາກົນອັນຜ່ອງໃສ.

### 2. ທາດແທ້ຂອງພັກປະຊາຊົນປະຕິວັດລາວ.

- ພັກປະຊາຊົນປະຕິວັດລາວ ແມ່ນພັກຂອງຊົນຊັ້ນກຳມະກອນ, ເປັນຕົວແທນທີ່ຈິງຮັກພັກດີຕໍ່ສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນ, ຊາວຜູ້ອອກແຮງງານລາວທີ່ຮັກຊາດ ແລະ ຂອງຊາດລາວທັງໝົດ.
- ພັກປະຊາຊົນປະຕິວັດລາວ ຍຶດໝັ້ນລັດທິມາກ-ເລນິນ, ແນວຄິດ ໄກສອນ ພົມວິຫານ ແລະ ມູນເຊື້ອອັນດີງາມຂອງພັກ ເປັນພື້ນຖານທາງດ້ານແນວຄິດ, ທິດສະດີຂອງພັກ, ເປັນເຂັມຊີ້ທິດໃຫ້ແກ່ການຈັດຕັ້ງ ແລະ

ການເຄື່ອນໄຫວຂອງພັກ; ເສີມຂະຫຍາຍລັດທິຮັກຊາດອັນແທ້ຈິງ ສົມທົບກັບລັດທິສາກົນອັນຜ່ອງໃສຂອງຊົນຊັ້ນກຳມະກອນ; ຮັບເອົາສິ່ງຍອດຍິ່ງທາງດ້ານສະຕິປັນຍາທີ່ກ້າວໜ້າຂອງມວນມະນຸດ ເພື່ອກຳນົດແນວທາງ, ແຜນນະໂຍບາຍຂອງພັກ; ຍົກສູງຄວາມສາມາດ ແລະ ຄຸນນະພາບການນຳພາຂອງພັກ; ຕ້ານລະບອບຫຼາຍເຄົ້າ, ຫຼາຍພັກ, ຕ້ານລັດທິເອກະຊົນ ແລະ ລັດທິສວຍໂອກາດໃນທຸກຮູບແບບ.

## II. ມູນເຊື້ອຂອງພັກ ແລະ ຄວາມໝາຍ-ຄວາມສຳຄັນ ກ່ຽວກັບຄວາມສາມັກຄີເປັນເອກະພາບພາຍໃນພັກ.

### 1. ມູນເຊື້ອຂອງພັກ.

①. ພັກເຮົາ ມີຄວາມຈົງຮັກພັກດີ ແລະ ຍຶດໝັ້ນທິດສະດີມາກ-ເລນິນ ກໍຄືຈຸດໝາຍສັງຄົມນິຍົມຢ່າງໜັກແໜ້ນ; ບໍ່ຄຳພີຕາຍຕົວ ແຕ່ຫາກມີຄວາມເປັນເຈົ້າການປະດິດສ້າງໃນການໝູນໃຊ້ທິດສະດີ ແລະ ບົດຮຽນດ້ານຕ່າງໆເຂົ້າກັບເງື່ອນໄຂຕົວຈິງ ແລະ ສະພາບຈຸດພິເສດຂອງປະເທດຊາດ; ມີການສະຫຼຸບຖອດຖອນບົດຮຽນຈາກພຶດຕິກຳ ແລະ ປັບປຸງບູລະນະແນວທາງໃຫ້ສອດຄ່ອງ.

②. ພັກ ໄດ້ຍຶດໝັ້ນ ແລະ ປະຕິບັດບັນດາຫຼັກການພື້ນຖານດ້ານການຈັດຕັ້ງ ແລະ ເຄື່ອນໄຫວຂອງພັກຢ່າງຖືກຕ້ອງ ນັ້ນຄືຫຼັກການລວມສູນປະຊາທິປະໄຕ, ເວລາໃດກໍຖືສຳຄັນການເສີມຂະຫຍາຍຄວາມສາມັກຄີເປັນເອກະພາບ ບົນພື້ນຖານແນວທາງແຜນນະໂຍບາຍຂອງພັກ. ພັກນຳພາເປັນໝູ່ຄະນະ ບົນພື້ນຖານການແບ່ງງານ ແລະ ມອບໝາຍຄວາມຮັບຜິດຊອບໃຫ້ບຸກຄົນໃນໝູ່ຄະນະ, ຖືສຳຄັນໃນການເສີມຂະຫຍາຍປະຊາທິປະໄຕ ໄປຄຽງຄູ່ກັບການປະຕິບັດກົດລະບຽບຂອງພັກ ແລະ ລະບອບດຳເນີນຊີວິດການເມືອງ, ຕຳນິສິ່ງຂ່າວຊ່ວຍເຫຼືອກໍ່ສ້າງກັນ; ຕ້ານລັດທິອາດຍາສິດ, ເຈົ້າໂຄດ ແລະ ອະນາທິປະໄຕໃນພັກ.

③. ພັກເຮົາ ເວລາໃດກໍຍຶດໝັ້ນໃນທາດແທ້ຊົນຊັ້ນ ແລະ ມີຄວາມຈົງຮັກພັກດີຕໍ່ຜົນປະໂຫຍດລວມຂອງຊາດ, ຂອງປະຊາຊົນ; ຖືການສະໜັບສະໜູນຂອງປະຊາຊົນເປັນສິ່ງສຳຄັນ ແລະ ເປັນປັດໄຈຕັດສິນບົດບາດການນຳພາ ແລະ ກຳອຳນາດຂອງພັກ; ມີຄວາມເປັນເຈົ້າການປັບປຸງແບບແຜນວິທີນຳພາຂອງພັກ, ເຄື່ອນໄຫວຕິດແທດກັບປະຊາຊົນ, ເຄົາລົບສິດເປັນເຈົ້າຂອງປະຊາຊົນ, ເຮັດທຸກສິ່ງທຸກຢ່າງ ເພື່ອຄວາມຮັ່ງມີຜາສຸກຂອງປະຊາຊົນ ແລະ ຄວາມມັ່ງຄັ່ງເຂັ້ມແຂງຂອງປະເທດຊາດ.

④. ພັກເຮົາ ເວລາໃດກໍເຊີດຊູລັກສະນະການນຳໜ້າຂອງພັກ ແລະ ຄວາມເປັນແບບຢ່າງຂອງສະມາຊິກພັກ, ມີຄວາມເດັດຂາດ, ເຂັ້ມງວດໃນການກຳຈັດແກ້ໄຂປະກົດການຫຍໍ້ທໍ້ ທີ່ເຮັດໃຫ້ພັກເສື່ອມອິດທິພົນບົດບາດ ແລະ ຂາດຄວາມເຊື່ອໝັ້ນຈາກປະຊາຊົນ; ພັກເຮົາມີຄວາມເປັນເຈົ້າການປັບປຸງປ່ຽນແປງຕົນເອງຢູ່ສະເໝີ, ເອົາໃຈໃສ່ບຳລຸງສ້າງຖັນແຖວສະມາຊິກພັກ ໃຫ້ມີຄວາມເປັນແບບຢ່າງນຳໜ້າ, ເປັນກຳລັງແຮງສູ້ຮົບໃນທຸກຂົງເຂດວຽກງານທັງຂັ້ນສູນກາງ ແລະ ທ້ອງຖິ່ນຮາກຖານ, ຖືຄວາມສາມາດເປັນສິ່ງສຳຄັນ ແລະ ຖືຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ ເປັນສິ່ງຕັດສິນໃນການເລືອກເຟັ້ນ ແລະ ນຳໃຊ້ພະນັກງານ.

⑤. ໃນການເຄື່ອນໄຫວນຳພາຂອງຕົນນັ້ນ, ພັກເຮົາ ເວລາໃດກໍຍຶດໝັ້ນຈິດໃຈຊາດເອກະລາດເປັນເຈົ້າຕົນເອງ, ເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ, ຕັ້ງໜ້າເສີມຂະຫຍາຍກຳລັງພາຍໃນຊາດສົມທົບກັບການພົວພັນຮ່ວມມື ກັບພັກປະເທດເພື່ອນມິດຍຸດທະສາດ ແລະ ການຍາດແຍ່ງເອົາການສະໜັບສະໜູນຊ່ວຍເຫຼືອຈາກພາຍນອກຢ່າງມີຫຼັກການ ສ້າງເປັນກຳລັງແຮງສັງລວມເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ.

### 2. ຄວາມໝາຍ-ຄວາມສຳຄັນ ກ່ຽວກັບຄວາມສາມັກຄີເປັນເອກະພາບພາຍໃນພັກ.

- ຄວາມສາມັກຄີເປັນເອກະພາບພາຍໃນພັກ ແມ່ນເນື້ອໃນຕົ້ນຕໍອັນໜຶ່ງໃນການສ້າງພັກ ໃຫ້ມີຄວາມໜັກແໜ້ນທາງດ້ານການຈັດຕັ້ງ; ແມ່ນມູນເຊື້ອອັນດີງາມ ແລະ ບົດຮຽນອັນປະເສີດຂອງພັກເຮົາ ທັງເປັນຫຼັກແຫຼ່ງໃຫ້ແກ່ຄວາມສາມັກຄີທົ່ວປວງຊົນລາວທັງຊາດໃຫ້ແໜ້ນແຟ້ນ.

- ຄວາມສາມັກຄີເປັນເອກະພາບພາຍໃນພັກເປັນປັດໄຈສຳຄັນຄ້ຳປະກັນການຄົງຕົວ ແລະ ຂະຫຍາຍຕົວຂອງພັກເຮົາ.

**III. ທິດທາງ, ວິທີການເສີມຂະຫຍາຍມູນເຊື້ອຂອງພັກ ແລະ ຄວາມສາມັກຄີ ເປັນເອກະພາບພາຍໃນພັກ.**

**1. ທິດທາງເສີມຂະຫຍາຍມູນເຊື້ອຂອງພັກ.**

**①. ສືບຕໍ່ສ້າງ ແລະ ປັບປຸງພັກເຮົາ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ 5 ດ້ານ ຊຶ່ງແຕ່ລະດ້ານມີເນື້ອໃນ ດັ່ງນີ້:**

**1). ດ້ານການເມືອງ.**

- ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງຮໍ່າຮຽນ, ເຊື່ອມຊຶມແນວທາງ, ແຜນນະໂຍບາຍ, ມະຕິ, ຄໍາສັ່ງ, ກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງທົ່ວເຖິງ ແລະ ຄົບຖ້ວນ.

- ໜ່ວຍພັກ ຕ້ອງກໍາແໜ້ນສະພາວະຄວາມເປັນຈິງຂອງຮາກຖານຕົນ ເພື່ອຫັນແນວທາງ, ແຜນນະໂຍບາຍຂອງພັກ ແລະ ມະຕິຂອງຄະນະພັກຂັ້ນເທິງເປັນແຜນການຂອງຕົນ ໃຫ້ສອດຄ່ອງກັບຄວາມຮັບຜິດຊອບ ແລະ ໜ້າທີ່ການເມືອງຂອງຕົນ ພ້ອມທັງຊີ້ນໍາ-ນໍາພາຈັດຕັ້ງປະຕິບັດໃຫ້ເປັນຈິງ ແລະ ມີປະສິດທິຜົນສູງ.

- ສ້າງສະມາຊິກພັກ ໃຫ້ມີຄຸນທາດການເມືອງໜັກແໜ້ນ, ມີຄຸນສົມບັດສິນທໍາປະຕິວັດທີ່ຖືກຕ້ອງ, ມີຄວາມຈົງຮັກພັກດີຕໍ່ອຸດົມການຂອງພັກ, ມີນໍ້າໃຈເສຍສະຫຼະ, ຮັບໃຊ້ຊາດ, ຮັບໃຊ້ປະຊາຊົນ ດ້ວຍຄວາມບໍລິສຸດໃຈ.

**2). ດ້ານແນວຄິດ.**

- ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງມີຄວາມເປັນເອກະພາບສູງກັບແນວທາງປ່ຽນໃໝ່ຂອງພັກ, ຍຶດໝັ້ນຈຸດໝາຍສັງຄົມນິຍົມຢ່າງສະເໝີຕົ້ນ, ສະເໝີປາຍ.

- ຈໍາແນກມິດ-ສັດຕູ ໄດ້ຢ່າງຈະແຈ້ງ, ບໍ່ຫວັ່ນໄຫວຄອນແຄນຕໍ່ສະພາບການຕ່າງໆທີ່ເກີດຂຶ້ນ, ເດັດດ່ຽວຕໍ່ສູ້ຕ້ານທຸກກົນອຸບາຍມ້າງເພທໍາລາຍຂອງສັດຕູ ແລະ ກຸ່ມຄົນບໍ່ດີ.

- ເປັນເຈົ້າການປົກປ້ອງແນວທາງ, ອຸດົມການຂອງພັກ, ເດັດດ່ຽວຕອບຕ້ານສິ່ງຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນຢູ່ພາຍໃນພັກ ແລະ ໃນສັງຄົມ, ຕ້ານແນວຄິດສວຍໂອກາດ, ສວຍໃຊ້ໜ້າທີ່ຕໍາແໜ່ງ, ພະຍາດອາດຍາສິດ, ເອກະຊົນ , ສໍ້ລາດບັງຫຼວງ, ຫຼົ້ນກິນຟູມເຟືອຍ ແລະ ຂາດຄວາມຮັບຜິດຊອບຕໍ່ໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.

- ພາຍໃນພັກ ຕ້ອງຮັກສາໄດ້ຄວາມສາມັກຄີເປັນເອກະພາບສູງ, ຕ້ານແນວຄິດຫຼາຍພັກ, ຫຼາຍເຄົ້າ, ຈຸ້ມເຈື້ອພັກພວກ ແລະ ກຸ່ມກ້ອນຢູ່ໃນການຈັດຕັ້ງພັກ.

**3). ດ້ານການຈັດຕັ້ງ.**

- ຍຶດໝັ້ນ ແລະ ປະຕິບັດ 5 ຫຼັກການ, 3 ທິດນໍາ ໃນການກໍ່ສ້າງ ແລະ ປັບປຸງພັກຢ່າງເຂັ້ມງວດ; ການດໍາເນີນຊີວິດການເມືອງຂອງໜ່ວຍພັກ ຕ້ອງຮັບປະກັນ ແລະ ເສີມຂະຫຍາຍໄດ້ລັກສະນະນໍາພາ, ລັກສະນະສຶກສາອົບຮົມ ແລະ ລັກສະນະຕໍ່ສູ້ພາຍໃນພັກໃຫ້ໄດ້.

- ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງມີສະຕິເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ, ເປັນແບບຢ່າງທີ່ດີໃນການເຄື່ອນໄຫວ, ດຳລົງຊີວິດດ້ວຍຄວາມປອດໃສ, ບໍ່ໃຫ້ມີປະກົດການຫຍໍ້ທໍ້ຢູ່ພາຍໃນໜ່ວຍພັກ ຫຼື ຖ້າມີ ກໍຕ້ອງເດັດຂາດແກ້ໄຂໃຫ້ທັນການ.

- ຄຸ້ມຄອງ, ຕີລາຄາຄຸນນະພາບຂອງສະມາຊິກພັກ ແລະ ໜ່ວຍພັກເປັນປົກກະຕິ, ປະຕິບັດການຍ້ອງຍໍສະມາຊິກພັກຜູ້ທີ່ດີເດັ່ນຢ່າງຖືກຕ້ອງ; ດຳເນີນມາດຕະການທາງດ້ານວິໄນ ຕໍ່ຜູ້ລະເມີດກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດຢ່າງເຂັ້ມງວດ.

- ການຂະຫຍາຍມະຫາຊົນເຂົ້າພັກ ຕ້ອງຖືຄຸນນະພາບເປັນຫຼັກ ບົນພື້ນຖານປະຕິບັດຕາມມາດຕະຖານ, ເງື່ອນໄຂ, ບາດກ້າວ, ຂັ້ນຕອນຂອງການຂະຫຍາຍພັກ ທີ່ໄດ້ກຳນົດໄວ້ໃນກົດລະບຽບພັກ ຢ່າງເຂັ້ມງວດ.

- ການປະກອບບຸກຄະລາກອນເຂົ້າໃນຄະນະໜ່ວຍພັກ ຕ້ອງຮັບປະກັນຄວາມຖືກຕ້ອງຕາມມາດຕະຖານ, ເງື່ອນໄຂທີ່ໄດ້ກຳນົດໄວ້ໃນກົດລະບຽບຂອງພັກ ຢ່າງຄົບຖ້ວນ.

### 4). ດ້ານແບບແຜນການນຳພາ.

- ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງຍຶດໝັ້ນປະຕິບັດຫຼັກການລວມສູນປະຊາທິປະໄຕ ຢ່າງເຂັ້ມງວດນຳພາເປັນໝູ່ຄະນະ, ແບ່ງວຽກງານໃຫ້ບຸກຄົນຮັບຜິດຊອບ, ສຽງສ່ວນໜ້ອຍຂຶ້ນກັບສຽງສ່ວນຫຼາຍ, ຂັ້ນລຸ່ມປະຕິບັດຕາມຂັ້ນເທິງ.

- ການຄົ້ນຄວ້າຕົກລົງບັນຫາສຳຄັນຍຸດທະສາດ ຕ້ອງເປັນໝູ່ຄະນະ, ເວົ້າ ແລະ ປະຕິບັດຕາມມະຕິ, ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ, ເຮັດວຽກມີແຜນການ, ມີໂຄງການ, ມີການຊຸກຍູ້, ຕິດຕາມ, ກວດກາ ແລະ ສະຫຼຸບຖອດຖອນບົດຮຽນ; ປະຕິບັດລະບອບປະຊຸມ ແລະ ລາຍງານສ່ອງແສງເປັນປົກກະຕິ.

- ປະສານສົມທົບລະຫວ່າງການນຳພາຂອງພັກ ກັບການເສີມຂະຫຍາຍບົດບາດ, ໜ້າທີ່, ສິດ, ການຄຸ້ມຄອງຂອງອົງການປົກຄອງ ແລະ ຄວາມເປັນເຈົ້າການຂອງອົງການຈັດຕັ້ງມະຫາຊົນ ຢ່າງກົມກຽວ.

- ຍຶດໝັ້ນ ແລະ ເສີມຂະຫຍາຍແບບແຜນນຳພາ ທີ່ເປັນມູນເຊື້ອອັນດີງາມຂອງພັກ, ແບບແຜນນຳພາຕິດແທດຮາກຖານ, ແທດກັບຕົວຈິງ, ມີປະຊາທິປະໄຕ, ເປັນເຈົ້າການຕ້ານພະຍາດອາດຍາສິດ, ລັດທິເອກະຊົນ, ສໍ້ລາດບັງຫຼວງ ແລະ ເຮັດວຽກແບບຜິວເຜີນ.

### 5). ນຳພາປະຕິບັດໜ້າທີ່ການເມືອງ.

- ຄະນະໜ່ວຍພັກ, ສະມາຊິກພັກ ຕ້ອງປະຕິບັດໜ້າທີ່ການເມືອງຂອງຕົນ ໃຫ້ມີປະສິດທິພາບສູງໃນການນຳພາດ້ານການເມືອງ, ແນວຄິດ, ການຈັດຕັ້ງ, ວິຊາສະເພາະ, ການພັດທະນາເສດຖະກິດ, ວັດທະນະທຳ-ສັງຄົມ, ປະຕິບັດນະໂຍບາຍຊົນເຜົ່າ ແລະ ນະໂຍບາຍການຕ່າງປະເທດຂອງພັກ ຢູ່ໃນຂອບເຂດການນຳພາຂອງໜ່ວຍພັກຕົນ.

- ນຳພາແກ້ໄຂຄວາມທຸກຍາກຂອງປະຊາຊົນ ເພື່ອສ້າງບ້ານໃຫ້ກາຍເປັນບ້ານພັດທະນາ ເຮັດໃຫ້ຊີວິດການເປັນຢູ່ຂອງສະມາຊິກພັກ, ພະນັກງານ ແລະ ປະຊາຊົນລາວບັນດາເຜົ່າ ໄດ້ຮັບການປັບປຸງນັບມື້ດີຂຶ້ນ, ຄອບຄົວທຸກຍາກໄດ້ຮັບການແກ້ໄຂ.

- ນຳພາປັບປຸງບູລະນະອົງການປົກຄອງ, ອົງການແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນ ແລະ ອົງການຈັດຕັ້ງສັງຄົມອື່ນໆ ທີ່ຢູ່ໃນຂອບເຂດການນຳພາຂອງຕົນ ໃຫ້ເຄື່ອນໄຫວຕາມພາລະບົດບາດຂອງແຕ່ລະອົງການໄດ້ດີ, ສ້າງໃຫ້ອົງການເຫຼົ່ານັ້ນມີຄວາມເຂັ້ມແຂງ, ເປັນກຳລັງແຮງໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆ ຢູ່ຂັ້ນຮາກຖານໃຫ້ມີຜົນສຳເລັດ.

- ນຳພາວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ເຮັດໃຫ້ສຳນັກງານ-ອົງການ, ກົມກອງ, ບ້ານມີຄວາມສະຫງົບ, ປອດໄພ ແລະ ມີຄວາມເປັນລະບຽບຮຽບຮ້ອຍ.

**②. ສືບຕໍ່ຍູ້ແຮງ ພາລະກິດປ່ຽນແປງໃໝ່ຮອບດ້ານຢ່າງມີຫຼັກການຂອງພັກ ໃຫ້ຖືກຕ້ອງ ແລະ ແຂງແຮງກວ່າເກົ່າ** ໂດຍສະເພາະແມ່ນດ້ານເສດຖະກິດ ເພື່ອເຮັດໃຫ້ການປະຕິບັດຍຸດທະສາດຫັນເປັນປະເທດອຸດສາຫະກຳ, ທັນສະໄໝໃຫ້ເປັນຈິງເທື່ອລະກ້າວ.

✱ 6 ຫຼັກການປ່ຽນແປງໃໝ່ຂອງພັກ ມີດັ່ງນີ້:

- ຫຼັກການທີ 1: ຢຶດໝັ້ນຈຸດໝາຍສັງຄົມນິຍົມ.
- ຫຼັກການທີ 2: ຢຶດໝັ້ນ ແລະ ໝູນໃຊ້ລັດທິມາກ-ເລນິນຢ່າງປະດິດສ້າງ, ສອດຄ່ອງກັບຈຸດພິເສດຂອງປະເທດເຮົາ.
- ຫຼັກການທີ 3: ຢຶດໝັ້ນໃນການນຳພາຂອງພັກ, ເພີ່ມທະວີຄວາມສາມັກຄີເປັນເອກະພາບພາຍໃນພັກບົນພື້ນຖານຫຼັກການລວມສູນປະຊາທິປະໄຕ ແລະ ແນວທາງຂອງພັກ.
- ຫຼັກການທີ 4: ເສີມຂະຫຍາຍປະຊາທິປະໄຕ ແລະ ສິດເປັນຂອງປະຊາຊົນບັນດາເຜົ່າ, ສ້າງກຳລັງສາມັກຄີທົ່ວປວງຊົນ ແລະ ເປັນປຶກແຜ່ນຂອງຊາດລາວເອກະພາບ.
- ຫຼັກການທີ 5: ເພີ່ມທະວີຄວາມສັກສິດຂອງລະບົບອຳນາດປະຊາທິປະໄຕປະຊາຊົນ, ອີງໃສ່ກຳລັງແຮງຂອງປະຊາຊົນ ແລະ ເພື່ອປະຊາຊົນ, ຕ້ານປະກົດການອາດຍາສິດທຸກຮູບແບບ.
- ຫຼັກການທີ 6: ເຊີດຊູນ້ຳໃຈເອກະພາບ ເປັນເຈົ້າຕົນເອງສົມທົບກຳລັງແຮງຂອງຍຸກສະໄໝ.

**③. ຕັ້ງໜ້າປັບປຸງແບບແຜນນຳພາຂອງພັກ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງ ໃນໄລຍະປັດຈຸບັນ.**

ພັກເຮົາ ເປັນພັກກຳອຳນາດ. ສະນັ້ນ, ຢາກສືບຕໍ່ກຳອຳນາດໄດ້ມີຄວາມຈຳເປັນຕ້ອງໄດ້ປັບປຸງແບບແຜນການນຳພາ ຫຼື ແບບແຜນການກຳອຳນາດຂອງພັກ ໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງໜ້າທີ່ການເມືອງໃນເງື່ອນໄຂໃໝ່. ຢາກເຮັດໄດ້ແນວນັ້ນ, ຄະນະພັກທຸກຂັ້ນຕ້ອງເປັນເຈົ້າການປັບປຸງ, ປ່ຽນແປງໃໝ່ແບບແຜນການນຳພາຂອງຕົນຕາມທິດ ດັ່ງນີ້:

1). ຄະນະພັກແຕ່ລະຂັ້ນ ຕ້ອງສືບຕໍ່ຢຶດໝັ້ນ ແລະ ເສີມຂະຫຍາຍແບບແຜນການນຳພາທີ່ເປັນມູນເຊື້ອອັນດີງາມຂອງຕົນ ເປັນຕົ້ນແມ່ນການເຄື່ອນໄຫວນຳພາໂດຍຜ່ານແນວທາງ ແລະ ການຈັດຕັ້ງຂອງພັກ, ເອົາການຂົນຂວາຍປຸກລະດົມຊອນເຊື່ອສົມທົບກັບຄວາມເປັນແບບຢ່າງນຳໜ້າຂອງສະມາຊິກພັກ ແລະ ການຈັດຕັ້ງພັກແຕ່ລະຂັ້ນ.

2). ເພີ່ມທະວີແບບແຜນການນຳພາ ແລະ ວິທີເຮັດວຽກທີ່ມີວິທະຍາສາດ, ແທດຕົວຈິງ ແລະ ປະຊາທິປະໄຕ, ເອົາການເອົາງານ ແລະ ມີຄວາມຮັບຜິດຊອບສູງ ທັງມີຄວາມຕັ້ງໜ້າເປັນເຈົ້າການຕໍ່ສູ້ຕ້ານ ແລະ ຈຳກັດແກ້ໄຂພະຍາດອາດຍາສິດ, ການເຮັດວຽກແບບຜິວເຜີນ, ຂາດຄວາມຮັບຜິດຊອບ, ຕ້ານທັດສະນະແນວຄິດ ແລະ ການກະທຳທີ່ບໍ່ເຄົາລົບລະບຽບວິໄນ, ເອກາທິປະໄຕ.

3). ຄະນະພັກແຕ່ລະຂັ້ນ ຕ້ອງເອົາໃຈໃສ່ສ້າງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ຕິດພັນກັບການສ້າງລັດໃຫ້ເຂັ້ມແຂງ, ຮັບປະກັນປະຕິບັດຫຼັກການທີ່ວ່າ ພັກບໍ່ປະການນຳພາລັດ, ແຕ່ບໍ່ເຮັດໜ້າທີ່ແທນລັດ; ພະນັກງານ, ສະມາຊິກພັກທຸກຄົນບໍ່ວ່າຢູ່ໃນຖານະຕຳແໜ່ງຂັ້ນໃດ ກໍຕ້ອງເຄື່ອນໄຫວພາຍໃຕ້ກົດລະບຽບຂອງພັກ ແລະ ກົດໝາຍຂອງລັດ.

4). ປ່ຽນແປງໃໝ່ແບບແຜນການນໍາພາຂອງພັກ ຕໍ່ແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ, ເຄົາລົບລະບຽບ, ຫຼັກການເຄື່ອນໄຫວຂອງແນວລາວສ້າງຊາດ ແລະ ອົງການຈັດຕັ້ງມະຫາຊົນ ເພື່ອສ້າງເງື່ອນໄຂໃຫ້ອົງການຈັດຕັ້ງດັ່ງກ່າວ ປະກອບສ່ວນເຂົ້າໃນການພັດທະນາເສດຖະກິດ, ວັດທະນະທໍາ-ສັງຄົມຂອງຊາດ; ປະຕິບັດລະບອບນໍາພາລວມສູນເປັນເອກະພາບຂອງໝູ່ຄະນະ ໄປພ້ອມກັບການເສີມຂະຫຍາຍຈິດໃຈຄວາມເປັນເຈົ້າການ, ປະດິດສ້າງ ແລະ ຄວາມຮັບຜິດຊອບຂອງແຕ່ລະບຸກຄົນ, ໂດຍສະເພາະແມ່ນ ຄວາມຮັບຜິດຊອບຂອງຜູ້ເປັນຫົວໜ້າ. ເສີມຂະຫຍາຍບົດບາດ, ຄວາມຮັບຜິດຊອບຂອງບັນດາການຈັດຕັ້ງພັກ, ກໍາມະການໃນຄະນະພັກ, ສະມາຊິກພັກ ໃນການເຄື່ອນໄຫວວຽກງານຂອງອົງການລັດ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນ.

5). ປ່ຽນແປງໃໝ່ແບບແຜນວິທີເຮັດວຽກ ຂອງອົງການຈັດຕັ້ງຂອງພັກ ແຕ່ສູນກາງລົງຮອດທ້ອງຖິ່ນ ໂດຍການຫັນມະຕິເປັນແຜນການ, ໂຄງການຂອງທຸກຂະແໜງການຢູ່ສູນກາງ ແລະ ທ້ອງຖິ່ນ ຕາມໜ້າທີ່ການເມືອງ ແລະ ຄວາມຮັບຜິດຊອບຂອງແຕ່ລະຂະແໜງການ ແລະ ສອດຄ່ອງກັບທ່າແຮງ ແລະ ຈຸດພິເສດຂອງແຕ່ລະທ້ອງຖິ່ນ; ມີການຕິດຕາມກວດກາ ແລະ ສະຫຼຸບຖອດຖອນບົດຮຽນໃນການຈັດຕັ້ງປະຕິບັດແຕ່ລະໄລຍະ; ເຄົາລົບ ແລະ ປະຕິບັດຫຼັກການລວມສູນປະຊາທິປະໄຕຂອງພັກຢ່າງເຄັ່ງຄັດ, ແກ້ໄຂຄວາມຫຍຸ້ງຍາກຂອງລະບອບລະບຽບການທີ່ບໍ່ສອດຄ່ອງ, ຫຼຸດຜ່ອນການປະຊຸມ, ເວົ້າໄປພ້ອມກັບເຮັດຕົວຈິງ ແລະ ເຮັດຢ່າງມີປະສິດທິຜົນສູງ.

6). ຄົ້ນຄວ້າກໍານົດກົນໄກ, ລະບຽບການກ່ຽວກັບການເສີມຂະຫຍາຍປະຊາທິປະໄຕ ແລະ ປະກອບຄວາມເຫັນໃຫ້ການນໍາແຕ່ລະຂັ້ນດ້ວຍຫຼາຍຮູບການ, ແຕ່ລະໄລຍະໃຫ້ມີການທາບທາມລົງຄະແນນສຽງຄວາມໄວ້ວາງໃຈຕໍ່ບຸກຄົນການນໍາພັກ-ລັດ, ອົງການຈັດຕັ້ງການເມືອງ, ສັງຄົມແຕ່ລະຂັ້ນ ເພື່ອເຮັດໃຫ້ພາຍໃນພັກປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນ ຮັບໃຊ້ຜົນປະໂຫຍດຂອງປະເທດຊາດ ແລະ ປະຊາຊົນຢ່າງແທ້ຈິງ.

**④. ສູ້ຊົນຈັດຕັ້ງປະຕິບັດຄາດໝາຍໃຫຍ່ ທີ່ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ແລະ ແຜນພັດທະນາເສດຖະກິດ-ສັງຄົມແຫ່ງຊາດ 5 ປີຄັ້ງ VIII ໃຫ້ເປັນຈິງ.**

- **ຄາດໝາຍໃຫຍ່ທີ 1:** ຢຶດໝັ້ນ ແລະ ເສີມຂະຫຍາຍແນວທາງປ່ຽນແປງໃໝ່ຮອບດ້ານ ແລະ ມີຫຼັກການຂອງພັກໃຫ້ເລິກເຊິ່ງເຖິງຖອງ ດ້ວຍການສືບຕໍ່ບຸກທະລຸທັງ 4 ດ້ານ ຢ່າງແຂງແຮງ, ຕໍ່ເນື່ອງ ແລະ ເປັນຈິງ.

- **ຄາດໝາຍໃຫຍ່ທີ 2:** ປັບປຸງ, ກໍ່ສ້າງພັກໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ເຂັ້ມແຂງ ແລະ ປອດໃສທາງດ້ານການຈັດຕັ້ງ ແລະ ແບບແຜນການນໍາພາ, ມີຄວາມສາມາດນໍາພາສູງຂຶ້ນ ເພື່ອເປັນກອງນໍາໜ້າ ແລະ ເປັນແກນນໍາທີ່ໝັ້ນຄົງໃນລະບົບການເມືອງປະຊາທິປະໄຕປະຊາຊົນ.

- **ຄາດໝາຍໃຫຍ່ທີ 3:** ບູລະນະລະບົບອໍານາດແຫ່ງລັດ ກໍຄື ການຄຸ້ມຄອງບໍລິຫານຕາມທິດສ້າງລັດປະຊາທິປະໄຕ ປະຊາຊົນ ທີ່ປົກຄອງດ້ວຍກົດໝາຍ ໃຫ້ມີຄວາມສັກສິດຕິດພັນກັບການເສີມຂະຫຍາຍສິດເປັນເຈົ້າຂອງປະຊາຊົນ, ສ້າງເງື່ອນໄຂສະດວກ ແລະ ສະພາບແວດລ້ອມອັນອໍານວຍໃຫ້ແກ່ການທໍາມາຫາກິນຂອງພົນລະເມືອງ ເພື່ອສ້າງຄວາມຮັ່ງມີໃຫ້ແກ່ຄອບຄົວ ແລະ ປະເທດຊາດ, ປະຕິບັດຄວາມສະເໝີພາບກ່ຽວກັບບົດບາດຍິງ-ຊາຍ, ຮັບປະກັນສິດສະເໝີພາບຕໍ່ໜ້າກົດໝາຍ ແລະ ມີຄວາມເຊື່ອໝັ້ນຕໍ່ການນໍາພາຂອງພັກ ແລະ ອະນາຄົດອັນສົດໃສຂອງປະເທດຊາດ.

- **ຄາດໝາຍໃຫຍ່ທີ 4:** ປະຕິບັດແນວທາງປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ທົ່ວປວງຊົນຮອບດ້ານ, ຮັບປະກັນສະຖຽນລະພາບທາງການເມືອງ, ຄວາມສະຫງົບ ແລະ ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມຢ່າງໜັກແໜ້ນ.

- **ຄາດໝາຍໃຫຍ່ທີ 5:** ເສີມຂະຫຍາຍກຳລັງແຮງຂອງບັນດາພາກສ່ວນເສດຖະກິດ ກໍຄື ຊັ້ນຄົນຕ່າງໆເຂົ້າໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດຢ່າງຕັ້ງໜ້າ, ເຮັດໃຫ້ເສດຖະກິດແຫ່ງຊາດຂະຫຍາຍຕົວໄປຕາມທິດພັດທະນາແບບຍືນຍົງຢ່າງຕໍ່ເນື່ອງ, ເສດຖະກິດມະຫາພາກມີຄວາມໝັ້ນທ່ຽງ ແລະ ໜັກແໜ້ນ.

- **ຄາດໝາຍໃຫຍ່ທີ 6:** ປີ 2020 ສາມາດແກ້ໄຂຄວາມທຸກຍາກຂອງປະຊາຊົນ, ປະເທດເຮົາຈະຫຼຸດພົ້ນອອກຈາກຄວາມດ້ອຍພັດທະນາ ໂດຍມີລວມຍອດມູນຄ່າຜະລິດຕະພັນພາຍໃນ ສະເລ່ຍຕໍ່ຫົວຄົນໃຫ້ບັນລຸປະມານ 3.190 ໂດລາສະຫະລັດ, ໂຄງປະກອບເສດຖະກິດແຫ່ງຊາດມີການຫັນປ່ຽນໄປຕາມທິດຫັນເປັນອຸດສາຫະກຳ, ທັນສະໄໝ ແລະ ມີຄວາມຍືນຍົງ, ມີປັດໄຈ ແລະ ເງື່ອນໄຂອັນເປັນພື້ນຖານທີ່ໜັກແໜ້ນສົມຄວນ ໃຫ້ແກ່ການເຊື່ອມໂຍງເສດຖະກິດກັບພາກພື້ນ ແລະ ສາກົນ.

- **ຄາດໝາຍໃຫຍ່ທີ 7:** ການພົວພັນ ແລະ ຮ່ວມມືກັບສາກົນສືບຕໍ່ເປີດກວ້າງອອກ ບົນພື້ນຖານຄວາມເປັນເຈົ້າການ ແລະ ເສີມຂະຫຍາຍບົດບາດການເປັນຄູ່ຮ່ວມມືຂອງປະເທດເຮົາ ກັບເພື່ອນມິດໃນພາກພື້ນ ແລະ ສາກົນຢ່າງຕັ້ງໜ້າ.

**⑤. ພະນັກງານ, ສະມາຊິກພັກທຸກສະຫາຍ ຕ້ອງຕັ້ງໜ້າກໍ່ສ້າງ ແລະ ປັບປຸງຕົນເອງໃຫ້ເຂັ້ມແຂງຮອບດ້ານ; ເອົາໃຈໃສ່ຍົກລະດັບຄວາມຮູ້-ຄວາມສາມາດຂອງຕົນ ໃນທຸກດ້ານໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການຂອງວຽກງານ, ອັນສຳຄັນຕ້ອງຍົກສູງຄວາມເປັນແບບຢ່າງນຳໜ້າຢ່າງບໍ່ຢຸດຢັ້ງ.**

ພະນັກງານ-ສະມາຊິກພັກທຸກສະຫາຍ ຕ້ອງເອົາໃຈໃສ່ຝຶກຝົນຫຼໍ່ຫຼອມຕົນເອງ, ເສີມຂະຫຍາຍນ້ຳໃຈຮັບຜິດຊອບ, ຄວາມເປັນເຈົ້າການໃນໜ້າທີ່ວຽກງານທີ່ໄດ້ມອບໝາຍ; ຍຶດໝັ້ນຫຼັກການກໍ່ສ້າງ ແລະ ປັບປຸງຕົນເອງ, ເປັນເຈົ້າການໃນການປະຕິບັດຂໍ້ຫ້າມຂອງສະມາຊິກພັກຢ່າງເຂັ້ມງວດ; ສະມາຊິກພັກ-ພະນັກງານຕ້ອງຮັກສາທາດແທ້ປະຕິວັດ, ຄວາມໜັກແໜ້ນທາງດ້ານອຸດົມການ, ສະຕິຕໍ່ການຈັດຕັ້ງ ແລະ ລະບຽບວິໄນ, ມີສະຕິເຄົາລົບກົດໝາຍ; ກ້າຫານຕໍ່ສູ້ປະກົດການຫຍໍ້ທໍ້, ມີຄວາມອົດທົນຜ່ານຜ່າອຸປະສັກ ແລະ ຄວາມຫຍຸ້ງຍາກ, ເອົາໃຈໃສ່ຮ່ຳຮຽນສະແຫວງຫາຄວາມກ້າວໜ້າ, ມີຄວາມເປັນແບບຢ່າງນຳໜ້າໃນການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍດ້ວຍຜົນສຳເລັດສູງ; ດຳລົງຊີວິດປອດໃສ, ດຸໝັ່ນ, ປະຢັດ, ສັດຊື່ ແລະ ທ່ຽງທຳ, ບໍ່ສວຍໃຊ້ໜ້າທີ່ຕຳແໜ່ງເພື່ອຜົນປະໂຫຍດໃຫ້ແກ່ຕົນເອງ.

**2. ວິທີການເສີມຂະຫຍາຍຄວາມສາມັກຄີເປັນເອກະພາບພາຍໃນພັກ.**

**①. ສະກັດກັ້ນບັນດາປະກົດການແບ່ງພັກ, ແຍກພວກ, ລັດທິເອກະຊົນ ແລະ ລັດທິສວຍໂອກາດ ຢ່າງເດັດຂາດ.**

ພັກປະຊາຊົນປະຕິວັດລາວ ເປັນພັກໜຶ່ງ, ພັກດຽວກຳອຳນາດຢູ່ປະເທດເຮົາ, ມີຄວາມຮັບຜິດຊອບຕໍ່ຊາຕາກຳຂອງປະເທດຊາດ, ມີບົດບາດນຳພາທົ່ວສັງຄົມ. ນັບແຕ່ມື້ກຳເນີດເປັນຕົ້ນມາ ພັກເຮົາມີຄວາມເດັດຂາດຕໍ່ກັບແນວຄິດ ແລະ ການກະທຳທີ່ເປັນການແບ່ງພັກ, ແຍກພວກ, ລັດທິເອກະຊົນ ແລະ ລັດທິສວຍໂອກາດຢ່າງເດັດຂາດ. ໃນກົດລະບຽບຂອງພັກເຮົາສະໄໝທີ X ໝວດທີ I ມາດຕາ 6 ໄດ້ລະບຸໜຶ່ງໃນ 9 ຂໍ້ຫ້າມສຳລັບສະມາ

ຊິກພັກ ວ່າ: ຫ້າມກໍ່ພັກ, ແຍກພວກ, ແບ່ງແຍກຄວາມສາມັກຄີພາຍໃນພັກ ແລະ ຄວາມສາມັກຄີບັນດາເຜົ່າ.

ຄະນະທຸກຂັ້ນ, ທຸກຮາກຖານຕ້ອງມີຄວາມເປັນເຈົ້າການເດັດຂາດແກ້ໄຂບັນຫາລັດທິເອກະຊົນ ເພາະວ່າ ລັດທິດັ່ງກ່າວ ຖ້າແຊກຊຶມເຂົ້າພາຍໃນພັກຈະມີສັດຕູຮຸກຮານພັກເຮົາ; ຖ້າແກ້ໄຂບໍ່ຕົກກໍຈະກໍ່ໃຫ້ເກີດພະຍາດອາດຍາສິດ (ລັດທິອາດຍາສິດ); ລັດທິອາດຍາສິດຈະພາໄປເຖິງລັດທິສວຍໂອກາດ ແລະ ລັດທິສວຍໂອກາດຈະກໍ່ໃຫ້ເກີດລັດທິແກ້ລັດທິເອກະຊົນ; ລັດທິອາດຍາສິດ ແລະ ລັດທິແກ້ ທັງໝົດນັ້ນລ້ວນແຕ່ເປັນສັດຕູອັນຕະລາຍຕໍ່ກັບຄວາມໝັ້ນຄົງຂອງພັກເຮົາ. ລັດທິເອກະຊົນ ແມ່ນຕົ້ນກຳເນີດພະຍາດອັນຕະລາຍໃນຖັນແຖວພະນັກງານ, ສະມາຊິກພັກ, ໃນນັ້ນ ເຮັດໃຫ້ການຈັດຕັ້ງພັກ, ລັດ ແລະ ອົງການຈັດຕັ້ງມະຫາຊົນບໍ່ມີຄວາມສະຫງົບ, ປອດໃສ, ບໍ່ເຄົາລົບນັບຖືກົດໝາຍ, ລະບຽບການຕ່າງໆ ແລະ ກໍ່ໃຫ້ເກີດສິ່ງຫຍໍ້ທໍ້ຕ່າງໆ ຊຶ່ງເຮັດໃຫ້ມະຫາຊົນຂາດຄວາມເຊື່ອໝັ້ນຕໍ່ພັກ. ລັດທິເອກະຊົນຈະສະແດງອອກຫຼາຍຮູບແບບ ເຊັ່ນ: ແນວຄິດຄັບແຄບ, ແນວຄິດພາກ ສ່ວນ, ສ່ວນຕົວ, ທ້ອງຖິ່ນ, ແນວຄິດເສລີ, ບໍ່ມີລະບຽບວິໄນ, ບໍ່ນັບຖືການຈັດຕັ້ງ, ແນວຄິດມັກໃຫຍ່ໃຝ່ສູງ, ມັກຊື່ສຽງ, ແຍ່ງຊີງຖານະຕໍາແໜ່ງ, ແນວຄິດຢາກໄດ້ສິດ ແລະ ຜົນປະໂຫຍດພິເສດ…

**②. ປະຕິບັດປະຊາທິປະໄຕ ພາຍໃນພັກຢ່າງຖືກຕ້ອງ ແລະ ກວ້າງຂວາງ, ດຳເນີນການຕິຊົມຕົນເອງ ແລະ ຕິຊົມກັນຢ່າງແຂງແຮງ, ເປັນປະຈຳ.**

ພວກເຮົາຕ້ອງເຂົ້າໃຈໃຫ້ຖືກຕ້ອງວ່າ ປະຊາທິປະໄຕພາຍໃນພັກ ເນື້ອແທ້ແມ່ນສິດເປັນເຈົ້າຂອງສະມາຊິກພັກທຸກສະຫາຍ; ແມ່ນການເຂົ້າຮ່ວມຢ່າງຕັ້ງໜ້າຂອງສະມາຊິກພັກທັງໝົດ ໃນການຄຸ້ມຄອງວຽກງານຂອງພັກໂດຍກົງ ຫຼື ໂດຍຜ່ານບັນດາຜູ້ແທນຂອງເຂົາເຈົ້າ ເຂົ້າໃນການກຳນົດແນວທາງແຜນນະໂຍບາຍ, ການສ້າງຕັ້ງອົງການນຳຂອງພັກ. ປະຊາທິປະໄຕພາຍໃນພັກ ເປັນສິ່ງຈຳກັດແກ້ໄຂປະກົດການຫຍໍ້ທໍ້ພາຍໃນພັກ ໃຫ້ໝົດໄປເທື່ອລະກ້າວ ທັງເປັນສິ່ງຄໍ້າປະກັນຄວາມມີຊີວິດຊີວາຂອງພັກ ທັງເປັນປັດໄຈຮັບປະກັນຄວາມສາມັກຄີເປັນເອກະພາບພາຍໃນພັກ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ກຳນົດໄວ້ວ່າ: ການເສີມຂະຫຍາຍປະຊາທິປະໄຕໃນການດຳເນີນຊີວິດພັກ ຢູ່ໃນການຈັດຕັ້ງພັກແຕ່ລະຂັ້ນ ແຕ່ສູນກາງຮອດທ້ອງຖິ່ນຮາກຖານ (ເລີ່ມແຕ່ການດຳເນີນຊີວິດຢູ່ໜ່ວຍພັກ, ຄະນະພັກຮາກຖານ, ຄະນະພັກແຕ່ລະຂັ້ນຈົນເຖິງຄະນະບໍລິຫານງານສູນກາງພັກ), ເປັນເຈົ້າການໃນການປະຕິບັດກົດລະບຽບຂອງພັກ, ປະຕິບັດຫຼັກການລວມສູນປະຊາທິປະໄຕ, ຕ້ານພະຍາດອາດຍາສິດ, ຜະເດັດການອ້າຍດຽວ, ການແບ່ງແຍກພາຍໃນພັກ, ເຮັດວຽກບໍ່ປະຕິບັດຕາມຫຼັກການ; ສະກັດກັ້ນການລະເມີດກົດລະບຽບຂອງພັກ, ລະເມີດປະຊາທິປະໄຕ, ບໍ່ເຄົາລົບລັດຖະທຳມະນູນ ແລະ ກົດໝາຍຂອງລັດ.

ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດໄດ້ຖືສຳຄັນ ແລະ ເອົາໃຈໃສ່ສ້າງ ແລະ ປັບປຸງຕົນເອງໂດຍຖືເອົາການຕິຊົມຕົນເອງ ແລະ ຕິຊົມກັນ ເປັນກົດເກນແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງພັກ. ໃນເອກະສານຊີ້ແຈງອະທິບາຍມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ໄດ້ກຳນົດໄວ້ວ່າ: “ການດຳເນີນຊີວິດພັກຢ່າງເຂັ້ມງວດ ແລະ ເປັນປະຈຳ, ປະຕິບັດຫຼັກການຕຳນິຕົນເອງ ແລະ ຕິຊົມ, ຊ່ວຍເຫຼືອກໍ່ສ້າງກັນໃຫ້ເປັນປົກກະຕິ ເພື່ອຈຳກັດແກ້ໄຂປະກົດການຫຍໍ້ທໍ້ຕ່າງໆພາຍໃນພັກ; ສືບຕໍ່ປະຕິບັດລະບອບການຕີລາຄາແບ່ງປະເພດພະນັກງານ-ສະມາຊິກພັກ ຢ່າງເປັນປົກກະຕິ; ປຸກລະດົມມະຫາຊົນເຂົ້າຮ່ວມໃນການຕິດຕາມກວດກາ ແລະ ປະກອບຄວາມເຫັນຕໍ່ສະມາຊິກພັກ; ມີມາດຕະການອັນເໝາະສົມ ແລະ ທັນການໃນການເອົາຜູ້ທີ່ເສື່ອມທາດຂາດຄຸນອອກຈາກຖັນແຖວຂອງພັກ.

### ③. ປະຕິບັດລະບຽບວິໄນຂອງພັກ ແລະ ຫຼັກການລວມສູນປະຊາທິປະໄຕຢ່າງເຄັ່ງຄັດ.

ການຈັດຕັ້ງພັກ ແມ່ນການຈັດຕັ້ງທີ່ມີລະບຽບວິໄນເຂັ້ມງວດ. ໃນພຶດຕິກຳຕົວຈິງໄດ້ພິສູດໃຫ້ເຫັນວ່າ: ການປະຕິບັດລະບຽບວິໄນຂອງພັກເຂັ້ມງວດເທົ່າໃດ ຍິ່ງເຮັດໃຫ້ການຈັດຕັ້ງພັກມີຄວາມເຂັ້ມແຂງ, ໜັກແໜ້ນເທົ່ານັ້ນ. ສະນັ້ນ, ຄະນະພັກແຕ່ລະຂັ້ນ, ແຕ່ລະໜ່ວຍພັກຕ້ອງດຳເນີນວຽກງານກວດກາເປັນປົກກະຕິ, ສະມາຊິກພັກທຸກສະຫາຍ ໂດຍບໍ່ຈຳແນກຖານະຕຳແໜ່ງຕ້ອງໄດ້ຮຽນຮູ້, ຄົບລົບ ແລະ ປະຕິບັດກົດລະບຽບຂອງພັກຢ່າງເຂັ້ມງວດ; ຜູ້ໃດລະເມີດ, ຜູ້ນັ້ນຖືກລົງວິໄນຢ່າງເຂັ້ມງວດ, ເດັດຂາດບໍ່ໃຫ້ມີການກະທຳໃດໆທີ່ເປັນການປົກປ້ອງ ຫຼື ປົກປິດເອົາກັນ. ອັນສຳຄັນທີ່ສຸດ ແມ່ນຕ້ອງປະຕິບັດຕາມຫຼັກການລວມສູນປະຊາທິປະໄຕ ຢ່າງເຂັ້ມງວດ ໂດຍມີການນຳພາເປັນໝູ່ຄະນະ, ມີການແບ່ງວຽກ, ແບ່ງຄວາມຮັບຜິດຊອບໃຫ້ບຸກຄົນຢ່າງຈະແຈ້ງ, ຂາດຕົວ; ບຸກຄົນຂຶ້ນກັບການຈັດຕັ້ງ, ຂັ້ນລຸ່ມຂຶ້ນກັບຂັ້ນເທິງ, ທົ່ວພັກຂຶ້ນກັບສູນກາງພັກ. ພວກເຮົາຕ້ອງເຂົ້າໃຈເປັນເອກະພາບນຳກັນວ່າ ການປະຕິບັດຫຼັກການລວມສູນປະຊາທິປະໄຕຢ່າງເຂັ້ມແຂງ ແມ່ນບັນຫາສຳຄັນ ເພື່ອເຮັດໃຫ້ຄວາມສາມັກຄີພາຍໃນມີຄວາມໜັກແໜ້ນ. ໃນການປະຕິບັດຫຼັກການລວມສູນປະຊາທິປະໄຕ ຕ້ອງສະແດງອອກຢ່າງຈະແຈ້ງເຖິງຄວາມເປັນເອກະພາບສອງດ້ານຄື: ລວມສູນໝາຍເຖິງທົ່ວພັກ ຕ້ອງປະຕິບັດແນວທາງການເມືອງ ແລະ ກົດລະບຽບອັນດຽວກັນ ຊຶ່ງສະມາຊິກພັກທຸກສະຫາຍ ຕ້ອງຄົ້ນຄວ້າເຊື່ອມຊຶມ ແລະ ປະຕິບັດ. ການລວມສູນແມ່ນເງື່ອນໄຂອັນຈຳເປັນໃຫ້ແກ່ການຄົງຕົວ ແລະ ການຂະຫຍາຍຕົວຂອງພັກ. ຖ້າຢູ່ພາຍໃນພັກບໍ່ມີປະຊາທິປະໄຕ, ພັກຈະບໍ່ມີຄວາມເຂັ້ມແຂງ, ໜັກແໜ້ນ ເພາະວ່າພັກປະຕິວັດມາກ-ເລນິນ ແມ່ນການຈັດຕັ້ງການ ເມືອງທີ່ຕື່ນຕົວສະໝັກໃຈຂອງສະມາຊິກພັກ (ກຳລັງແຮງຂອງພັກເຮົາແມ່ນມາຈາກລັກສະນະຕັ້ງໜ້າ, ຕື່ນຕົວ, ຫ້າວຫັນ, ສະໝັກໃຈຂອງສະມາ ຊິກພັກທັງໝົດ).

ພັກປະຊາຊົນປະຕິວັດລາວ ແມ່ນພັກປະຕິວັດມາກ-ເລນິນທີ່ແທ້ຈິງ, ເປັນຕົວແທນທີ່ຈິງຮັກພັກດີຕໍ່ສິດ ແລະ ຜົນປະໂຫຍດອັນຊອບທຳຂອງຊົນຊັ້ນກຳມະກອນ-ຊາວຜູ້ອອກແຮງງານລາວບັນດາເຜົ່າ; ພັກເຮົາບໍ່ວັດຖຸປະສົງອື່ນໃດ ນອກຈາກການນຳເອົາຄວາມຢູ່ດີ ກິນດີ ມາໃຫ້ປະຊາຊົນບັນດາເຜົ່າ, ນຳເອົາສັນຕິພາບ, ເອກະລາດ, ເອກະພາບ, ວັດທະນະຖາວອນ ມາໃຫ້ປະເທດຊາດ. ດ້ວຍທາດແທ້ ແລະ ວັດຖຸປະສົງດັ່ງກ່າວ, ພັກເຮົາຈຶ່ງສາມາດເຕົ້າໂຮມຄວາມສາມັກຄີປະຊາຊົນລາວບັນດາເຜົ່າຢ່າງກວ້າງຂວາງ ເຮັດສຳເລັດພາລະກຳປະຫວັດສາດທີ່ປະຊາຊົນມອບໝາຍໃຫ້ ແລະ ສ້າງໄດ້ມູນເຊື້ອອັນສະຫງ່າອົງອາດໄວ້ຫຼາຍຢ່າງ. ເພື່ອສືບຕໍ່ນຳພາປະຊາຊົນລາວທັງຊາດປະຕິບັດພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ໃນທ່າມກາງທີ່ມີຂໍ້ຫຍຸ້ງຍາກ ແລະ ສິ່ງທ້າທາຍຫຼາຍຢ່າງນີ້ຍິ່ງຮຽກຮ້ອງໃຫ້ພັກເຮົາເອົາໃຈໃສ່ເສີມຂະຫຍາຍມູນເຊື້ອອັນດີງາມຂອງຕົນ, ຖ້າພັກເຮົາຫາກຖືເບົາ ຫຼື ປະຕິເສດມູນເຊື້ອດັ່ງກ່າວ ກໍໝາຍຄວາມວ່າ ພັກປະຕິເສດຕົນເອງ, ຖ້າພັກປະຕິເສດຕົນເອງ, ມະຫາຊົນກໍປະຕິເສດພັກ, ພັກເຮົາ ກໍຈະບໍ່ມີກຳລັງແຮງ ແລະ ລົ້ມລະລາຍໃນທີ່ສຸດ.

# ບົດທີ 2
# ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ.

## I. ຄວາມຈຳເປັນ ແລະ ຄວາມຮຽກຮ້ອງຕ້ອງການໃນການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາ.

ນັບແຕ່ມື້ສ້າງຕັ້ງ ພັກເຮົາໄດ້ຮັບການມອບໝາຍໜ້າທີ່ ແລະ ຄວາມຮັບຜິດຊອບອັນໃຫຍ່ຫຼວງ ແລະ ໜັກໜ່ວງຈາກປະຊາຊົນລາວບັນດາເຜົ່າ ເພື່ອນຳພາປວງຊົນລາວທັງຊາດ ເຮັດສຳເລັດພາລະກຳປະຫວັດສາດແຕ່ລະໄລຍະ. ຕະຫຼອດ 60 ກວ່າປີແຫ່ງການນຳພາຂອງຕົນ, ພັກເຮົາຍາມໃດກໍຕັ້ງໜ້າປັບປຸງ ແລະ ກໍ່ສ້າງຕົນເອງໃຫ້ມີຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ ໂດຍຢຶດໝັ້ນຢູ່ໃນຫຼັກການ, ຈຸດໝາຍຍຸດທະສາດ ແລະ ອຸດົມການຂອງຕົນ. ພຶດຕິກຳຂອງການປະຕິວັດຢູ່ປະເທດເຮົາໄດ້ພິສູດໃຫ້ເຫັນວ່າ ການນຳພາຂອງພັກມີລັກສະນະເປັນກົດເກນ, ແມ່ນປັດໄຈຕັດສິນທຸກໄຊຊະນະຂອງການປະຕິວັດຢູ່ປະເທດເຮົາ. ໃນເງື່ອນໄຂໃໝ່ນີ້, ໃນຖານະເປັນພັກກຳອຳນາດ ເພື່ອສືບຕໍ່ນຳພາແກ້ໄຂຄວາມທຸກຍາກຂອງປະຊາຊົນ ເຮັດໃຫ້ປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ; ນຳພາການພັດທະນາປະເທດຊາດຕາມທິດຍືນຍົງສູ່ຈຸດໝາຍສັງຄົມນິຍົມ ຢ່າງໜັກແໜ້ນ ໃນທ່າມກາງທີ່ສະພາບການພາຍໃນປະເທດ, ພາກພື້ນ ແລະ ສາກົນທີ່ມີທັງກາລະໂອກາດ, ຂໍ້ສະດວກ, ຂໍ້ຫຍຸ້ງ ຍາກ ແລະ ສິ່ງທົດສອບ, ທ້າທາຍຫຼາຍປະການນີ້ ການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນຄວາມຈຳເປັນພາວະວິໄສ, ເປັນບັນຫາພື້ນຖານ ແລະ ບັນຫາຮີບດ່ວນຂອງການກໍ່ສ້າງພັກໃນເງື່ອນໄຂປັດຈຸບັນ.

### 1. ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນບັນຫາພື້ນຖານຂອງການກໍ່ສ້າງພັກກຳອຳນາດ.

ປັດຈຸບັນ, ພັກເຮົາເປັນພັກກຳອຳນາດມີຄວາມຮັບຜິດຊອບຕໍ່ທົ່ວສັງຄົມ ແລະ ຕັດສິນຊາຕາກຳຂອງປະເທດຊາດ, ພັກເຮົາຈະສາມາດຮັບປະກັນໃຫ້ປະເທດຊາດຂອງພວກເຮົາ ຂະຫຍາຍຕົວກ້າວຂຶ້ນຕາມທິດທາງເຮັດໃຫ້ປະຊາຊົນຮັ່ງມີ-ຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ມີປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ໄດ້ຫຼືບໍ່ນັ້ນ ບັນຫາທີ່ເປັນພື້ນຖານກ່ອນໝູ່ໝົດ (ບັນຫາທີ່ຕ້ອງໄດ້ເຮັດກ່ອນໝູ່). ແມ່ນຂຶ້ນກັບວ່າ, ພັກເຮົາຈະຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າໃຫ້ທຽມທັນກັບຄວາມຮຽກຮ້ອງຕ້ອງການຂອງການພັດທະນາ ແລະ ສົມຄູ່ກັບພາລະກຳປະຫວັດສາດໃນໄລຍະໃໝ່ ຫຼື ບໍ່.

ການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນບັນຫາພື້ນຖານທີ່ສຸດຕໍ່ການນຳພາຂອງພັກເຮົາໃນໄລຍະໃໝ່, ຖ້າພັກຢາກກຳອຳນາດໄດ້ຢ່າງຍາວນານ, ພັກຕ້ອງເພີ່ມທະວີບົດບາດການນຳພາ, ປັບປຸງ ແລະ ປົວແປງພາຍໃນພັກໃຫ້ມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນຢູ່ສະເໝີ ເພື່ອສາມາດຮັບປະກັນບົດບາດເປັນກອງນຳໜ້າຂອງຊົນຊັ້ນກຳມະກອນ, ເປັນຕົວແທນແຫ່ງຜົນປະໂຫຍດຂອງຊາວຜູ້ອອກແຮງງານ ແລະ ປວງຊົນລາວທັງຊາດຢ່າງແທ້ຈິງ.

### 2. ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກ ແມ່ນປັດໄຈຕັດສິນໄຊຊະນະຂອງພາລະກິດປະຕິວັດຢູ່ປະເທດເຮົາ.

ພັກການເມືອງ ເວົ້າລວມ ເມື່ອສ້າງຕັ້ງຂຶ້ນແລ້ວມີບົດບາດ, ໜ້າທີ່ນຳພາ, ພັກເຮົານັບແຕ່ມື້ສ້າງຕັ້ງຂຶ້ນໄດ້

ຢືນຢັນວ່າ: ການນຳພາຂອງພັກເປັນປັດໄຈຕັດສິນກວ່າໝູ່ຕໍ່ໄຊຊະນະ ຫຼື ປະລາໄຊຂອງການປະຕິວັດຢູ່ປະເທດເຮົາ. ພຶດຕິກຳແຫ່ງການນຳພາຂອງພັກເຮົາໄດ້ພິສູດໃຫ້ເຫັນຢ່າງຈະແຈ້ງວ່າ: ໃນພາລະກິດຕໍ່ສູ້ປົດປ່ອຍຊາດ, ໃນສະໄໝນັ້ນເຖິງວ່າມີສະມາຊິກພັກບໍ່ຫຼາຍ, ແຕ່ມີຄວາມສາມາດ ແລະ ຄວາມເປັນແບບຢ່າງໃນການນຳພາ. ສະນັ້ນ, ເຖິງວ່າພາລະກິດຕໍ່ສູ້ປົດປ່ອຍຊາດຈະຍືດເຍື້ອ, ຍາວນານ, ຫຍຸ້ງຍາກສັບສົນເທົ່າໃດກໍຕາມ ສຸດທ້າຍກໍໄດ້ຮັບໄຊຊະນະຢ່າງສົມບູນ. ກ້າວສູ່ໄລຍະໃໝ່ຂອງການປະຕິວັດ, ພັກເຮົາໄດ້ສືບຕໍ່ນຳພາປວງຊົນລາວທັງຊາດປະຕິບັດ 2 ໜ້າທີ່ຍຸດທະສາດ ຄື: ປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ; ນຳພາດຳເນີນພາລະກິດປ່ຽນແປງໃໝ່ ໂດຍສະເພາະໃນຊຸມປີຜ່ານມາ ພັກເຮົາໄດ້ນຳພາຈັດຕັ້ງປະຕິບັດມະຕິກອງປະຊຸມໃຫຍ່ ຄັ້ງທີ IX ຂອງພັກ ໄດ້ຮັບຜົນສຳເລັດທີ່ເປັນພື້ນຖານໃຫຍ່ຫຼວງຫຼາຍດ້ານ, ແຕ່ຄຽງຄູ່ກັນນັ້ນ ກໍມີຂໍ້ບົກຜ່ອງຈຳນວນບໍ່ໜ້ອຍ ຊຶ່ງເປັນສິ່ງທ້າທາຍ, ທົດສອບຕໍ່ຄວາມສາມາດນຳພາ ແລະ ບົດບາດກຳອຳນາດຂອງພັກເຮົາ. ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ກຳນົດບາດກ້າວເດີນ ທີ່ເປັນບາດລ້ຽວສຳຄັນແຫ່ງການສືບຕໍ່ນຳພາທົ່ວພັກ, ທົ່ວປວງຊົນພາປະເທດຊາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາຕາມຄາດໝາຍທີ່ດຳນົດໄວ້. ບັນດາຈຸດໝາຍ ແລະ ຄາດໝາຍສູ້ຊົນທີ່ພັກວາງອອກແມ່ນສຳຄັນໃຫຍ່ຫຼວງ, ແຕ່ໜັກໜ່ວງ ແລະ ຫຍຸ້ງຍາກ. ຍ້ອນແນວນັ້ນ ຈຶ່ງຮຽກຮ້ອງໃຫ້ພັກເຮົາຕ້ອງປັບປຸງຕົນເອງ, ດ້ວຍການຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງຕົນໃຫ້ທຽບທັນກັບຄວາມເລັ່ງທວງຂອງການພັດທະນາ ແລະ ໜ້າທີ່ການເມືອງໃນໄລຍະໃໝ່.

ເມື່ອເວົ້າເຖິງການກໍ່ສ້າງ ແລະ ປັບປຸງພັກແບບໃໝ່-ພັກກຳອຳນາດ ທີ່ເປັນຕົວແທນສິດຜົນປະໂຫຍດຂອງຊົນຊັ້ນກຳມະກອນ ແລະ ຊາວຜູ້ອອກແຮງງານ ທ່ານ ເລນິນ ໄດ້ເນັ້ນໜັກວ່າ: ພັກຕ້ອງມີສະຕິປັນຍາ, ກຽດສັກສີແຫ່ງຍຸກສະໄໝ. ໃນເອກະສານຂອງປະຊຸມໃຫຍ່ ຄັ້ງທີ X ພັກຂອງ ໄດ້ຢໍ້າວ່າ: ໃນໄລຍະໃໝ່ນີ້, ກ່ອນອື່ນໝົດພັກເຮົາຕ້ອງມີສະຕິປັນຍາ, ຄວາມຮູ້ທີ່ທັນກັບຍຸກສະໄໝ, ມີຄວາມສາມາດໃນການຄົ້ນຄວ້າ, ສ້າງບັນດາໂຄງການການເມືອງ, ແນວທາງນະໂຍບາຍຍຸດທະສາດ.

### 3. ຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາແມ່ນບັນຫາຮີບດ່ວນຂອງການກໍ່ສ້າງພັກໃນເງື່ອນໄຂປັດຈຸບັນ.

ໃນຊຸມປີຜ່ານມາ ເຖິງວ່າພັກໄດ້ຕັ້ງໜ້າປັບປຸງຕົນເອງຢ່າງບໍ່ຢຸດຢັ້ງ ເພື່ອນຳພາປະເທດຊາດເຮົາກ້າວຂຶ້ນດ້ວຍຖ່ວງທ່າອັນໜັກແໜ້ນກໍຕາມ, ແຕ່ຢູ່ພາຍໃນພັກຂອງພວກເຮົາ ກໍຍັງມີຫຼາຍບັນຫາທີ່ຕ້ອງໄດ້ສຸມໃສ່ແກ້ໄຂຢ່າງຮີບດ່ວນ, ເປັນຕົ້ນຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດ, ແບບແຜນວິທີການເຮັດວຽກ ແລະ ແບບແຜນດຳລົງຊີວິດ, ນໍ້າໃຈຮັບໃຊ້ຊາດຮັບໃຊ້ປະຊາຊົນ ແລະ ຄວາມເສຍສະຫຼະເພື່ອສ່ວນລວມຂອງສະມາຊິກພັກ, ພະນັກງານຈຳນວນບໍ່ໜ້ອຍໄດ້ມີການເສື່ອມຖອຍ, ເກີດມີພະຍາດອາດຍາສິດ, ຫ່າງເຫີນຈາກປະຊາຊົນ, ມີແນວຄິດຈຸ້ມເຈື້ອເຊື້ອສາຍ, ພັກພວກ, ມີການສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອສະແຫວງຫາຜົນປະໂຫຍດສ່ວນຕົວທີ່ປະກົດໃຫ້ເຫັນຢູ່ຫຼາຍຂັ້ນ, ປະກົດການສໍ້ລາດບັງຫຼວງມີລັກສະນະແຜ່ລາມທົ່ວໄປ ແລະ ຍັງບໍ່ທັນໄດ້ຮັບການແກ້ໄຂຢ່າງເດັດຂາດເຂັ້ມງວດ. ບັນດາປະກົດການຫຍໍ້ທໍ້ເຫຼົ່ານັ້ນ ມີລັກສະນະຮ້າຍແຮງຂຶ້ນຊັກໄຊ້ ແລະ ແຜ່ລາມກວ້າງອອກ, ມີຄວາມສະຫຼັບສັບຊ້ອນ, ແກ້ໄຂໄດ້ຍາກຊຶ່ງໄດ້ເປັນ ແລະ ພວມເປັນບັນຫາທ້າທາຍຕໍ່ພັກ ແລະ ກະທົບໂດຍກົງໃສ່ຄວາມເຊື່ອໝັ້ນ ແລະ ສັດທາຂອງປະຊາຊົນຕໍ່ພັກເຮົາ. ຍ້ອນແນວນັ້ນ, ສະມາຊິກພັກທຸກສະຫາຍຕ້ອງໄດ້ຮີບຮ້ອນຕັ້ງໜ້າຍົກລະດັບຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າທີ່ດີໃນການນຳພາຂອງຕົນໃຫ້ສົມຄູ່ກັບຄວາມຮຽກຮ້ອງຕ້ອງການພັດທະນາ ແລະ ໜ້າທີ່ການເມືອງໃນເງື່ອນໄຂປັດຈຸບັນ.

**II. ທິດທາງຍົກສູງຄວາມສາມາດນຳພາ ແລະ ຄວາມເປັນແບບຢ່າງນຳໜ້າຂອງພັກເຮົາໃນຕໍ່ໜ້າ.**

**1. ທິດທາງຍົກສູງຄວາມສາມາດນຳພາຂອງພັກ.**

**①. ຍົກສູງຄວາມສາມາດໃນການກຳນົດແນວທາງ ບົນພື້ນຖານກຳແໜ້ນທິດສະດີມາກ-ເລນິນ ແລະ ທິດສະດີກ້າວໜ້າອື່ນໆ, ຮັບຮູ້ບັນດາກົດເກນ ແລະ ໝູນໃຊ້ຢ່າງສອດຄ່ອງ, ເພີ່ມທະວີການຄົ້ນຄວ້າທິດສະດີ, ສະຫຼຸບພຶດຕິກຳ ແລະ ໃຫ້ຄຳຕອບຕໍ່ບັນຫາຕ່າງໆທີ່ພຶດຕິກຳການປະຕິວັດຕັ້ງຂຶ້ນຢ່າງທັນການ.**

- ການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳຂອງພັກ ແມ່ນເພື່ອສືບຕໍ່ບຸກທະລຸທາງດ້ານຈິນຕະນາການທິດສະດີ ແນໃສ່ສ້າງພື້ນຖານໃນການຍົກສູງສະຕິປັນຍາ, ຄວາມສາມາດນຳພາຂອງພັກ ແລະ ຄວາມສາມາດໃນການຫັນທິດສະດີເປັນແນວທາງ-ແຜນນະໂຍບາຍຂອງພັກ ໃຫ້ສອດຄ່ອງກັບສະພາບແວດລ້ອມພາຍນອກ ແລະ ເງື່ອນໄຂຂອງປະເທດເຮົາ. ດັ່ງນັ້ນ, ຕ້ອງດຳເນີນການສະຫຼຸບຕີລາຄາວຽກງານຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳ ເພື່ອສືບຕໍ່ປັບປຸງ, ເພີ່ມເຕີມບັນດາເນື້ອໃນໃນການຄົ້ນຄວ້າ ໂດຍສະເພາະແມ່ນບັນຫາທີ່ພົວພັນເຖິງຄວາມສາມາດກຳແໜ້ນລັກສະນະຂອງການປະຕິວັດຢູ່ປະເທດເຮົາ ໃນໄລຍະໃໝ່ ຫຼື ກຳນົດທິດທາງໃນບາດກ້າວໃໝ່ແຫ່ງການສ້າງປະຖົມປັດໄຈກ້າວຂຶ້ນສັງຄົມນິຍົມ. ຕ້ອງສືບຕໍ່ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດໂຄງການຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳຕາມຫົວຂໍ້ໃຫຍ່ລະດັບຊາດ ໃຫ້ສຳເລັດຕາມຄາດໝາຍ.

- ຈັດວາງ, ສັບຊ້ອນບຸກຄະລາກອນ ໄປພ້ອມກັບການປັບປຸງການຈັດຕັ້ງຂອງພາກສ່ວນເຮັດວຽກງານຄົ້ນຄວ້າທິດສະດີ ແລະ ສະຫຼຸບພຶດຕິກຳໃຫ້ກະທັດລັດ, ສົມເຫດ, ສົມຜົນ ແລະ ມີປະສິດທິຜົນສູງເປັນຕົ້ນແມ່ນສະຖາບັນວິທະຍາສາດສັງຄົມແຫ່ງຊາດ, ສະພາວິທະຍາສາດສັງຄົມແຫ່ງຊາດ, ບັນດາສະຖາບັນຄົ້ນຄວ້າຂອງກະຊວງ-ອົງການ, ສະພາວິທະຍາສາດສະຖາບັນການເມືອງ ແລະ ການປົກຄອງແຫ່ງຊາດ.

**②. ຍົກສູງຄວາມສາມາດໃນການຫັນແນວທາງ, ແຜນນະໂຍບາຍຂອງພັກ ໃຫ້ກາຍເປັນທິດທາງ, ແຜນການ ແລະ ລະບຽບກົດໝາຍຕ່າງໆ ທີ່ສ່ອງແສງເຖິງຜົນປະໂຫຍດ, ເຈດຈຳນົງ ແລະ ຄວາມມຸ່ງມາດປາຖະໜາ ຂອງປະຊາຊົນຢ່າງຖືກຕ້ອງ, ຄົບຖ້ວນ ແລະ ຊີ້ນຳການ ຈັດຕັ້ງປະຕິບັດໃຫ້ເປັນຈິງ.**

ສິ່ງສຳຄັນໃນການຫັນແນວທາງ ຕ້ອງຢຶດໝັ້ນລັກສະນະປະຕິວັດ ແລະ ລັກສະນະວິທະຍາສາດຂອງທິດສະດີມາກ-ເລນິນ ແລະ ຫຼີກເວັ້ນພຶດຕິກຳທີ່ຖືລັດທິມາກ-ເລນິນເປັນຄຳພີຕາຍຕົວ.

- ຄະນະພັກແຕ່ລະຂັ້ນຕ້ອງເພີ່ມທະວີຄວາມຮັບຜິດຊອບໃນການຊີ້ນຳ-ນຳພາການຄົ້ນຄວ້າ, ກຳແໜ້ນແນວທາງ-ນະໂຍບາຍຂອງພັກ ແລະ ຫັນເປັນແຜນການ ແລະ ໂຄງການຂອງຂັ້ນຕົນ, ທັງຈັດຕັ້ງປະຕິບັດໃຫ້ເປັນຈິງ.

- ການຈັດຕັ້ງພັກແຕ່ລະຂັ້ນ ຕ້ອງເປັນເຈົ້າການປັບປຸງປ່ຽນແປງພຶດຕິກຳນຳພາທີ່ບໍ່ຖືກຕ້ອງ ບໍ່ສອດຄ່ອງກັບແນວທາງ ເພື່ອເຮັດໃຫ້ແນວທາງນະໂຍບາຍຂອງພັກນັບມື້ເປັນຮູບປະທຳ, ນຳເອົາຜົນປະໂຫຍດຕົວຈິງມາໃຫ້ແກ່ປະຊາຊົນ ແລະ ໄດ້ຮັບການສະໜັບສະໜູນຈາກປະຊາຊົນຢ່າງກວ້າງຂວາງ.

**③. ຍົກສູງຄວາມສາມາດຊີ້ນຳ-ນຳພາ ການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກໃຫ້ເປັນຈິງ ເພື່ອນຳເອົາຜົນປະໂຫຍດສູງສຸດມາໃຫ້ປະເທດຊາດ ແລະ ປະ**

**ຊາຊົນ.**

ພັກເຮົາກຳເນີດຈາກຂະບວນການຕໍ່ສູ້ຂອງປະຊາຊົນ, ເຕີບໃຫຍ່ຂະຫຍາຍຕົວ ຍ້ອນມີການສະໜັບສະໜູນຂອງມະຫາຊົນ. ສະນັ້ນ, ພັກເຮົາຕ້ອງຕໍ່ສູ້ເພື່ອຜົນປະໂຫຍດຂອງມະຫາຊົນ, ຖືມະຫາຊົນເປັນກົກ, ເປັນກຳລັງແຮງຊະນະເລີດຂອງພັກ; ສະມາຊິກພັກ, ຄະນະພັກແຕ່ລະຂັ້ນ ຕ້ອງໃກ້ຊິດຕິດແທດ ແລະ ກຳແໜ້ນແນວຄິດຈິດໃຈຂອງມະຫາຊົນ, ເປັນເຈົ້າການນຳເອົາແນວທາງຂອງພັກໄປຊີ້ແຈ້ງອະທິບາຍຊວນເຊື່ອມະຫາຊົນ ພ້ອມທັງນຳເອົາຄວາມຂັດຂ້ອງໝອງໃຈ, ຄວາມມຸ່ງມາດປາຖະໜາຂອງປະຊາຊົນສ່ອງແສງໃຫ້ພັກຮັບຮູ້ ແລະ ນຳພາປະຊາຊົນໃຫ້ມີຄວາມຕື່ນຕົວ, ຫ້າວຫັນເປັນເຈົ້າການຈັດຕັ້ງປະຕິບັດແນວທາງຂອງພັກ ໃຫ້ເປັນຈິງ.

- ຄະນະພັກແຕ່ລະຂັ້ນ ຕ້ອງສືບຕໍ່ປົດໝັ້ນ ແລະ ເສີມຂະຫຍາຍແບບແຜນນຳພາທີ່ຖືກຕ້ອງ ແລະ ເປັນມູນເຊື້ອອັນດີງາມຂອງພັກ, ໂຄສະນາອົບຮົມຂວາຍປຸກລະດົມຊວນເຊື່ອມະຫາຊົນ ຈັດຕັ້ງປະຕິບັດແນວທາງນະໂຍບາຍຂອງພັກ, ນຳເອົາຜົນປະໂຫຍດຕົວຈິງມາໃຫ້ແກ່ປະເທດຊາດ ແລະ ປະຊາຊົນ.

**④. ຍົກສູງຄວາມສາມາດໃນການຕິດຕາມ, ກວດກາ, ກະຕຸກຊຸກຍູ້ການເຄື່ອນໄຫວຂອງທົ່ວລະບົບການເມືອງໃນການຈັດຕັ້ງປະຕິບັດແນວທາງຂອງພັກ.**

- ຄະນະພັກແຕ່ລະຂັ້ນຕ້ອງເພີ່ມທະວີການນຳພາ-ຊີ້ນຳ ແລະ ຈັດຕັ້ງປະຕິບັດວຽກງານຕິດຕາມ, ກວດກາຕາມຫຼັກການຂອງພັກ ແລະ ກົດໝາຍຂອງລັດ; ຄົ້ນຄວ້າວາງລະບອບ, ລະບຽບການ, ກົນໄກການຕິດຕາມ, ກວດກາໃຫ້ຄົບຖ້ວນ ແລະ ຮັດກຸມ, ໃນນັ້ນ ລວມທັງກົນໄກໃຫ້ຂັ້ນລຸ່ມ, ແນວລາວສ້າງຊາດ ແລະ ບັນດາອົງການຈັດຕັ້ງມະຫາຊົນໄດ້ຕິດຕາມ, ກວດກາການຈັດຕັ້ງພັກ, ສະມາຊິກພັກໃນການປະຕິບັດລະບຽບ, ມະຕິຄຳສັ່ງຂອງພັກ, ຕິດຕາມ, ກວດກາບັນດາອົງການອຳນາດລັດໃນການປະຕິບັດກົດໝາຍ, ລະບຽບການຕ່າງໆ ແລະ ການແກ້ໄຂປະກົດການຫຍໍ້ທໍ້, ການສໍ້ລາດບັງຫຼວງທີ່ເກີດຂຶ້ນໃນກົງຈັກການຈັດຕັ້ງ, ຖືເອົາການສະກັດກັ້ນ ແລະ ແກ້ໄຂການສໍ້ລາດບັງຫຼວງ ເປັນຄວາມຮັບຜິດຊອບຂອງຄະນະພັກທຸກຂັ້ນ, ຂອງທຸກການຈັດຕັ້ງ.

- ສ້າງເງື່ອນໄຂໃຫ້ສື່ມວນຊົນ ແລະ ປະຊາຊົນໄດ້ເຂົ້າຮ່ວມວຽກງານຕິດຕາມ, ກວດກາການເຄື່ອນໄຫວປະຕິບັດໜ້າທີ່ ແລະ ການດຳລົງຊີວິດຂອງພະນັກງານ, ສະມາຊິກພັກ.

- ເພີ່ມທະວີຄວາມຮັດຜິດຊອບຂອງຄະນະພັກ ແລະ ການນຳທຸກຂັ້ນຕໍ່ການແກ້ໄຂຜົນຂອງການກວດກາໃຫ້ທັນການ, ເຂັ້ມງວດ, ສັກສິດຕາມກົດລະບຽບຂອງພັກ, ກົດໝາຍ ແລະ ລະບຽບການຕ່າງໆຂອງລັດ.

- ເພີ່ມຄວາມເອົາໃຈໃສ່ຕໍ່ການປັບປຸງກົງຈັກການຈັດຕັ້ງຄະນະກວດກາແຕ່ລະຂັ້ນ, ແຕ່ລະຂະແໜງການ ແລະ ກໍ່ສ້າງ, ບຳລຸງພະນັກງານກວດກາໃຫ້ຮັບປະກັນທັງທາງດ້ານປະລິມານ ແລະ ຄຸນນະພາບພ້ອມທັງສ້າງເງື່ອນໄຂໃຫ້ຄະນະກວດກາແຕ່ລະຂັ້ນ ປະຕິບັດພາລະບົດບາດຂອງຕົນມີປະສິດທິພາບສູງ.

**⑤. ເພີ່ມຄວາມສາມາດໃນການຄົ້ນເຫັນ ແລະ ຕໍ່ສູ້ຕ້ານ, ກຳຈັດປັດເປົ່າປະກົດການຫຍໍ້ທໍ້ພາຍໃນພັກຢ່າງທັນການ ແລະ ຕ້ານກົນອຸບາຍຫັນປ່ຽນໂດຍສັນຕິ ຂອງອິທິກຳລັງປໍລະປັກ.**

- ຄະນະພັກທຸກຂັ້ນ, ພະນັກງານ-ສະມາຊິກພັກທຸກຄົນ ຕ້ອງເຊີດຊູຈິດໃຈຮັກຊາດ, ຮັກລະບອບປະຊາທິປະໄຕປະຊາຊົນ ດ້ວຍການຕັ້ງໜ້າຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ, ຄຸນສົມບັດສິນທຳປະຕິວັດໃຫ້ມີຄວາມໜັກແໜ້ນ. ເຮັດໃຫ້ພະນັກງານ-ສະມາຊິກພັກມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ປະຊາຊົນ, ເດັດດ່ຽວຕອບຕ້ານທຸກກົນອຸບາຍທຳລາຍມ້າງເພຂອງອິທິກຳລັງປໍລະປັກ ແລະ ພວກຄົນບໍ່ດີ; ສະກັດກັ້ນ ແລະ ຕ້ານກັບປະກົດການຫຍໍ້ທໍ້ຕ່າງໆ ທີ່ເກີດຂຶ້ນພາຍໃນພັກຢ່າງເດັດຂາດ, ທັນການ ເພື່ອບໍ່ໃຫ້ພະນັກງານ, ສະມາຊິກ

ພັກຜູ້ໃດຢູ່ນອກ ຫຼື ຢູ່ເໜືອກົດໝາຍ.

- ຄະນະພັກທຸກຂັ້ນ, ສະມາຊິກພັກທຸກຄົນ ຕ້ອງເປັນແບບຢ່າງນໍາໜ້າໃນການສະກັດກັ້ນ ແລະ ແກ້ໄຂປະກົດການຫຍໍ້ທໍ້ຕ່າງໆພາຍໃນພັກ ໂດຍເລີ່ມຈາກການສໍາຫຼວດກວດກາຕົນເອງ, ຕໍານິກໍ່ສ້າງຊ່ວຍເຫຼືອຊຶ່ງກັນ ແລະ ກັນ ດ້ວຍຄວາມຈິງໃຈ; ຫາກມີສິ່ງຫຍໍ້ທໍ້ເກີດຂຶ້ນຕ້ອງມີຄວາມຕື່ນຕົວເປັນເຈົ້າການແກ້ໄຂຢ່າງເດັດຂາດ; ເອົາໃຈໃສ່ຕິດຕາມ, ກວດກາຂົງເຂດຄວາມຮັບຜິດຊອບຂອງຕົນຢ່າງເປັນປະຈໍາ, ຫາກເຫັນສິ່ງຫຍໍ້ທໍ້ເກີດຂຶ້ນຕ້ອງມີຄວາມເດັດຂາດ, ເຂັ້ມງວດໃນການແກ້ໄຂຕາມທິດນໍາ ບັນຫາຫຍໍ້ທໍ້ເກີດຂຶ້ນຢູ່ບ່ອນໃດ ແມ່ນຄະນະພັກບ່ອນນັ້ນເປັນເຈົ້າການແກ້ໄຂຫຼີກເວັ້ນການປົກປ້ອງ ຫຼື ປົກປິດສິ່ງຫຍໍ້ທໍ້ດັ່ງກ່າວ.

**2. ທິດທາງຍົກສູງລັກສະນະນໍາໜ້າຂອງພັກ.**

- ຄວາມເປັນແບບຢ່າງນໍາໜ້າທີ່ດີຂອງພັກ ແມ່ນພື້ນຖານທີ່ດີໃຫ້ແກ່ການນໍາພາຂອງພັກ ທັງແມ່ນແວ່ນແຍງອັນໃສແຈ້ງ ແລະ ເປັນແຮງດຶງດູດເອົາຄວາມເຊື່ອໝັ້ນຂອງມະຫາຊົນຢ່າງກວ້າງຂວາງ. ສະນັ້ນ, ສະມາຊິກພັກທຸກສະຫາຍ ຕ້ອງຕັ້ງໜ້າຍົກສູງຄວາມເປັນແບບຢ່າງນໍາໜ້າຂອງຕົນ ຊຶ່ງສະແດງອອກໃນ 4 ດ້ານ ດັ່ງນີ້:

**①. ເປັນແບບຢ່າງນໍາໜ້າ ໃນການປັບປຸງບູລະນະແນວທາງ, ແຜນນະໂຍບາຍຂອງພັກໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງ ແລະ ການປ່ຽນແປງຂອງສະພາບແວດລ້ອມພາຍນອກ.**

ການສ້າງຄວາມສາມາດ ແລະ ລັກສະນະນໍາໜ້າຂອງພັກ, ກ່ອນອື່ນໝົດ ຕ້ອງເລີ່ມຈາກການວາງແນວທາງເພື່ອຮັບໃຊ້ປະຊາຊົນໃຫ້ຖືກຕ້ອງ ແລະ ສອດຄ່ອງຢູ່ສະເໝີ; ເພາະວ່າຖ້າພັກວາງແນວທາງການເມືອງອອກຜິດພາດແລ້ວ ບໍ່ສະເພາະແຕ່ຈະພາໃຫ້ລັກສະນະນໍາໜ້າຂອງພັກຫຼຸດລົງ, ຍິ່ງໄປກວ່ານັ້ນ ກໍຈະພາໃຫ້ເກີດໄພອັນຕະລາຍຕໍ່ບົດບາດກໍາອໍານາດຂອງພັກນໍາອີກ.

ການຄົ້ນຄວ້າປັບປຸງ ແລະ ວາງແນວທາງໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບການຕົວຈິງ ແມ່ນການເສີມຂະຫຍາຍ ແລະ ຍົກລະດັບສະຕິປັນຍາຂອງພັກໃຫ້ທັນກັບຍຸກສະໄໝ, ຍົກລະດັບຄວາມສາມາດໃນການກໍາແໜ້ນ, ວິໄຈສະພາບຄວາມເປັນຈິງ, ທ່າແຮງບົ່ມຊ້ອນຂອງປະເທດ ແລະ ທ້ອງຖິ່ນຮາກຖານ ເພື່ອກໍານົດທິດທາງໜ້າທີ່ ແລະ ມາດຕະການຈັດຕັ້ງປະຕິບັດຢູ່ຂັ້ນຕົນໃຫ້ມີປະສິດທິຜົນສູງ; ເປັນເຈົ້າການຕື່ນຕົວປັບປຸງປ່ຽນແປງສິ່ງທີ່ບໍ່ຖືກຕ້ອງ, ບໍ່ສອດຄ່ອງກັບແນວທາງແຜນນະໂຍບາຍຂອງພັກ ແລະ ເຮັດໃຫ້ແນວທາງຂອງພັກນັບມື້ໄດ້ຮັບການຈັດຕັ້ງປະຕິບັດໃຫ້ເປັນຈິງ ແລະ ໃຫ້ປະຊາຊົນສະໜັບສະໜູນຢ່າງກວ້າງຂວາງ.

**②. ເປັນແບບຢ່າງນໍາໜ້າ ໃນການຍົກສູງຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບໃນການຈັດຕັ້ງປະຕິບັດແນວທາງ ໃຫ້ມີຜົນສໍາເລັດ ໂດຍຖືເອົາການຕອບສະໜອງຜົນປະໂຫຍດຂອງປະຊາຊົນເປັນຈຸດເລີ່ມຕົ້ນ.**

- ຄວາມເຂັ້ມແຂງ, ໜັກແໜ້ນຂອງພັກບໍ່ແມ່ນພຽງແຕ່ຕ້ອງວາງແນວທາງ, ແຜນນະໂຍບາຍໃຫ້ຖືກຕ້ອງ, ສອດຄ່ອງກັບສະພາບຄວາມເປັນຈິງຂອງປະເທດ, ຖືກກັບຄວາມມຸ່ງມາດປາຖະໜາ ຂອງປະຊາຊົນ ແລະ ຈຸດພິເສດຂອງຍຸກສະໄໝເທົ່ານັ້ນ, ຫາກຍັງຂຶ້ນກັບຄວາມສາມາດ ກໍຄື ຄວາມເປັນເຈົ້າການ ແລະ ຄວາມຮັບຜິດຊອບຂອງພັກ ໃນການນໍາພາປະຊາຊົນຈັດຕັ້ງປະຕິບັດແນວທາງຂອງພັກໃຫ້ເປັນຈິງ. ແນວທາງຖືກຕ້ອງຢູ່ໃນໜ້າເຈ້ຍຊື່ໆ, ຫາກບໍ່ໄດ້ຮັບການຈັດຕັ້ງປະຕິບັດກໍບໍ່ມີຄວາມໝາຍຫຍັງ. ສະນັ້ນ, ການຈັດຕັ້ງພັກແຕ່ລະຂັ້ນ ຕ້ອງຍົກສູງຄວາມຮັບຜິດຊອບໃນການນໍາພາຂອງຕົນ, ສູ້ຊົນນໍາພາ ແລະ ຈັດຕັ້ງປະຕິບັດບັນດາຄາດໝາຍທີ່ກອງປະຊຸມໃຫຍ່ຂອງພັກ ແລະ ບັນດາຄາດໝາຍຂອງແຕ່ລະອົງຄະນະພັກວາງອອກໃຫ້ເປັນຈິງ ໂດຍສະເພາະແມ່ນສຸມໃສ່

ນຳພາການແກ້ໄຂຄວາມທຸກຍາກຂອງປະຊາຊົນ, ບັນລຸເປົ້າໝາຍການພັດທະນາທີ່ຍືນຍົງ ແລະ ນຳພາປະເທດຊາດຫຼຸດພົ້ນຈາກສະຖານະພາບດ້ອຍພັດທະນາໃນປີ 2020.

- ພະນັກງານ-ສະມາຊິກພັກທຸກຄົນ ຕ້ອງເປັນແບບຢ່າງຫ້າວຫັນອຸທິດເຫື່ອແຮງ ແລະ ສະຕິປັນຍາຂອງຕົນເຂົ້າໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ນັບມື້ຈະເລີນກ້າວໜ້າ ແລະ ມີຄວາມເປັນຫ່ວງເປັນໄຍນຳຄວາມສຸກ-ທຸກຂອງປະຊາຊົນ. ໃນການປະຕິບັດໜ້າທີ່ວຽກງານບໍ່ວ່າຈະຢູ່ໃນຕຳແໜ່ງໃດກໍຕາມ ເມື່ອໄດ້ຮັບມອບໝາຍວຽກງານຈາກການຈັດຕັ້ງ ເຖິງວ່າຈະເປັນວຽກໃຫຍ່, ວຽກນ້ອຍ, ວຽກຫຍຸ້ງຍາກສັບສົນປານໃດກໍຕາມ ຕ້ອງຕັ້ງໜ້າປະຕິບັດດ້ວຍຈິດໃຈສູ້ຊົນ, ບຸກບືນ, ກ້າຄິດ, ກ້າເຮັດ, ກ້າຮັບຜິດຮັບຊອບ, ເວົ້າຕ້ອງໄປຄຽງຄູ່ກັບການປະຕິບັດ ແລະ ຕ້ອງເຮັດທຸກສິ່ງທຸກຢ່າງ ເພື່ອນຳເອົາຄວາມຢູ່ດີ, ກິນດີມາໃຫ້ປະຊາຊົນ ແລະ ນຳເອົາຄວາມມັ່ງຄັ່ງເຂັ້ມແຂງມາໃຫ້ປະເທດຊາດ.

**③. ເປັນແບບຢ່າງນຳໜ້າໃນການກຳຈັດ ແລະ ແກ້ໄຂຂໍ້ບົກຜ່ອງຂອງຕົນ, ກໍ່ສ້າງປັບປຸງພັກດ້ວຍຄວາມເປັນເຈົ້າການ.**

ໃນການດຳລົງຊີວິດກໍຄືການເຮັດວຽກ, ພະນັກງານ-ສະມາຊິກພັກທຸກສະຫາຍ ຕ້ອງເຂົ້າໃຈສະເໝີວ່າ: ຈຸດດີ ແລະ ຈຸດອ່ອນ ແມ່ນຄູ່ມາດຕະເກນອັນໜຶ່ງ, ເພາະວ່າຢູ່ໃນໂລກນີ້ບໍ່ມີສິ່ງໃດສົມບູນແບບຢ່າງເດັດຖານ. ບັນຫາສຳຄັນຢູ່ບ່ອນວ່າພວກເຮົາຈະຕີລາຄາການນຳພາອັນດີ, ອັນອ່ອນຖືກຕ້ອງກັບຄວາມເປັນຈິງ ຫຼື ບໍ່ ແລະ ຈະເສີມຂະຫຍາຍຈຸດດີ ແລະ ມີຄວາມຕັດສິນໃຈເປັນເຈົ້າການປັບປຸງແກ້ໄຂຈຸດອ່ອນ-ຂໍ້ບົກຜ່ອງ ຫຼື ບໍ່ ເພື່ອເຮັດໃຫ້ພັກປອດໃສ, ເຂັ້ມແຂງ, ໜັກແໜ້ນ. ສະນັ້ນ, ເພື່ອຍົກສູງຄວາມເປັນແບບຢ່າງນຳໜ້າໃນການກຳຈັດ ແລະ ແກ້ໄຂຂໍ້ບົກຜ່ອງຂອງຕົນ, ກ່ອນອື່ນໝົດ, ສະມາຊິກພັກທຸກສະຫາຍ ຕ້ອງເຂົ້າໃຈວ່າການຍົກສູງຄວາມສາມາດນຳພາຂອງພັກ ຕ້ອງໄປຄຽງຄູ່ກັບການຍົກສູງຄວາມເປັນແບບຢ່າງນຳໜ້າຕໍ່ສູ້ຂອງສະມາຊິກພັກ, ເດັດດ່ຽວແກ້ໄຂປະກົດການຫຍໍ້ທໍ້ທີ່ເກີດຂຶ້ນຢູ່ໃນການຈັດຕັ້ງຂອງພັກ-ລັດ ກໍຄືໃນຖັນແຖວສະມາຊິກພັກ, ພະນັກງານຢ່າງທັນການ ເຮັດໄດ້ແນວນັ້ນ ຈຶ່ງຮັບປະກັນໃຫ້ພັກມີຄວາມປອດໃສ, ເຂັ້ມແຂງ ແລະ ໜັກແໜ້ນຢູ່ສະເໝີ.

- ເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງພັກໃຫ້ມີຄວາມໜັກແໜ້ນທາງດ້ານການເມືອງ-ແນວຄິດ, ປອດໃສ, ເຂັ້ມແຂງທາງດ້ານການຈັດຕັ້ງ, ມີແບບແຜນການນຳພາ ແລະ ວິທີເຮັດວຽກຖືກຕ້ອງແທດຕົວຈິງ.

- ສະມາຊິກພັກແຕ່ລະສະຫາຍ ຕ້ອງເຊີດຊູຄວາມເປັນເຈົ້າການປະກອບສ່ວນເຂົ້າໃນການປັບປຸງກົງຈັກການຈັດຕັ້ງພັກແຕ່ລະຂັ້ນ ໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນ ບົນພື້ນຖານປະຕິບັດຫຼັກການລວມສູນປະຊາທິປະໄຕໃຫ້ຖືກຕ້ອງ ແລະ ເຂັ້ມງວດ, ປັບປຸງພາລະບົດບາດ, ໜ້າທີ່ຂອງການຈັດຕັ້ງພັກຢູ່ບັນດາກະຊວງ-ອົງການຂັ້ນສູນກາງ ແລະ ທ້ອງຖິ່ນຮາກຖານ, ປັບປຸງຄຸນນະພາບບັນດາອົງການ ແລະ ບຸກຄະລາກອນທີ່ເປັນເສນາທິການຂອງພັກ ແລະ ລັດ; ເສີມຂະຫຍາຍປະຊາທິປະໄຕໃນການດຳເນີນຊີວິດພັກຢູ່ໃນການຈັດຕັ້ງພັກແຕ່ລະຂັ້ນ; ປັບປຸງການຈັດຕັ້ງຮາກຖານພັກຕິດພັນກັບການສ້າງຄວາມປອດໃສ, ເຂັ້ມແຂງ, ໜັກແໜ້ນ, ຍົກສູງຄຸນນະພາບຂອງສະມາຊິກພັກ ແລະ ເພີ່ມທະວີວຽກງານຄຸ້ມຄອງສະມາຊິກພັກ ແລະ ຂະຫຍາຍພັກ, ສ້າງແບບແຜນດຳລົງຊີວິດທີ່ປອດໃສ, ເປັນເຈົ້າການເຮັດວຽກຢ່າງປະດິດສ້າງ ແລະ ຍົກສູງຄວາມຮັບຜິດຊອບຂອງສະມາຊິກພັກ ຕໍ່ການປະຕິບັດໜ້າທີ່ວຽກງານທີ່ໄດ້ຮັບມອບໝາຍ.

**④. ເປັນແບບຢ່າງນຳໜ້າໃນການເຄົາລົບລັດຖະທຳມະນູນ ແລະ ກົດໝາຍ, ມີຄວາມເຂັ້ມງວດໃນການປະຕິບັດກົດລະບຽບ ແລະ ຂໍ້ຫ້າມຕ່າງໆຂອງພັກ.**

- ພັກມີບົດບາດໃນການຄົ້ນຄວ້າ ແລະ ກຳນົດແນວທາງຂອງພັກ, ຊີ້ນຳຄົ້ນຄວ້າລະບຽບກົດໝາຍຂອງ

ລັດ. ສະນັ້ນ, ຄະນະພັກທຸກຂັ້ນ, ສະມາຊິກພັກທຸກສະຫາຍ ຕ້ອງເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລັດຖະທຳມະນູນ, ກົດໝາຍ ແລະ ລະບຽບການຕ່າງໆຢ່າງເຂັ້ມງວດ, ບໍ່ສວຍໃຊ້ກົດໝາຍ ແລະ ໜ້າທີ່ຕຳແໜ່ງຂອງຕົນ ເພື່ອຫາຜົນປະໂຫຍດແບບບໍ່ຖືກຕ້ອງໃຫ້ແກ່ຕົນເອງ.

- ເຄົາລົບສິດເສລີພາບຂອງພົນລະເມືອງ, ໂຄສະນາ, ປຸກລະດົມປະຊາຊົນຊັ້ນຄົນຕ່າງໆໃຫ້ຮັບຮູ້-ເຂົ້າໃຈ ແລະ ມີສະຕິເຄົາລົບປະຕິບັດລະບຽບກົດໝາຍ ແລະ ລະບຽບການຕ່າງໆທີ່ລັດປະກາດໃຊ້ ໃຫ້ຖືກຕ້ອງ, ເຂັ້ມງວດ.

- ເປັນແບບຢ່າງນຳໜ້າປະກອບສ່ວນເຂົ້າໃນການປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ; ເປັນເຈົ້າການປະກອບສ່ວນເຂົ້າໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພໃນສັງຄົມ.

# ບົດທີ 3
# ຕັ້ງໜ້າຝຶກຝົນຫຼໍ່ຫຼອມຄຸນທາດ
# ການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ

## I. ຄວາມໝາຍ, ຄວາມສາຄັນຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

### 1. ຄວາມໝາຍ ແລະ ຄວາມສຳຄັນຂອງຄຸນທາດການເມືອງ.

**①. ຄວາມໝາຍຂອງຄຸນທາດການເມືອງ.**

- ຄຸນທາດການເມືອງແມ່ນອົງປະກອບອັນໜຶ່ງທີ່ສຳຄັນ ຢູ່ໃນຄຸນນະພາບຂອງສະມາຊິກພັກແຕ່ລະສະຫາຍ, ແມ່ນມາດຖານແຖວໜ້າ, ແມ່ນຄວາມຮຽກຮ້ອງຕ້ອງການອັນເປັນພື້ນຖານທີ່ຂາດບໍ່ໄດ້ທັງເປັນພື້ນຖານໃຫ້ແກ່ການຝຶກຝົນຫຼໍ່ຫຼອມຄຸນສົມບັດສິນທຳປະຕິວັດ ແລະ ການເຄື່ອນໄຫວປະຕິບັດໜ້າທີ່ວຽກງານປະຈຳວັນຂອງພະນັກງານ-ສະມາຊິກພັກ.

- ເນື້ອແທ້ຂອງຄຸນທາດການເມືອງ ແມ່ນໝາຍເຖິງທັດສະນະຫຼັກໝັ້ນຊົນຊັ້ນ, ທັດສະນະມິດ-ສັດຕູ ແລະ ຄວາມເດັດດ່ຽວໜຽວແໜ້ນຕໍ່ອຸດົມການສັງຄົມນິຍົມ.

**②. ຄວາມສຳຄັນຂອງຄຸນທາດການເມືອງ.**

- ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດໄດ້ຖືສຳຄັນ ແລະ ເອົາໃຈໃສ່ສ້າງຖັນແຖວພະນັກງານ-ສະມາຊິກພັກ ໃຫ້ມີຄຸນທາດການເມືອງທີ່ໜັກແໜ້ນ.

- ການປະຕິວັດຂະຫຍາຍຕົວເທົ່າໃດຍິ່ງຮຽກຮ້ອງໃຫ້ພະນັກງານ-ສະມາຊິກພັກ ມີຄວາມໜັກແໜ້ນດ້ານຄຸນທາດການເມືອງເພື່ອຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກໃຫ້ເປັນຈິງ ເພາະວ່າພະນັກງານ-ສະມາຊິກພັກ ເປັນປັດໄຈຕັດສິນຜົນໄດ້, ຜົນເສຍໃນການຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ. ສະນັ້ນ, ປັດຈຸບັນ ເພື່ອສືບຕໍ່ນຳພາການປະຕິບັດສອງໜ້າທີ່ຍຸດທະສາດ ກໍຄື ນຳພາແກ້ໄຂຄວາມທຸກຍາກຂອງປະຊາຊົນ ແລະ ຄວາມດ້ອຍພັດທະນາຂອງປະເທດຊາດໃຫ້ບັນລຸຕາມຄາດໝາຍສູ້ຊົນທີ່ກຳນົດໄວ້, ການຝຶກຝົນຫຼໍ່ຫຼອມຕົນເອງໃຫ້ມີຄຸນທາດການເມືອງອັນໜັກແໜ້ນ ຈຶ່ງມີຄວາມສຳຄັນທີ່ສຸດ ແລະ ກາຍເປັນຄວາມຮຽກຮ້ອງຕ້ອງການພາວະວິໄສທັງເປັນພື້ນຖານ ແລະ ໜ້າທີ່ອັນຮີບດ່ວນຂອງສະມາຊິກພັກ ແຕ່ລະສະຫາຍ.

### 2. ຄວາມໝາຍ ແລະ ຄວາມສຳຄັນຂອງຄຸນສົມບັດສິນທຳປະຕິວັດ.

**①. ຄວາມໝາຍຂອງຄຸນສົມບັດສິນທຳປະຕິວັດ.**

- ຄຸນສົມບັດສິນທຳປະຕິວັດຂອງພະນັກງານ-ສະມາຊິກພັກ ແມ່ນອົງປະກອບໜຶ່ງທີ່ສຳຄັນຂອງຄຸນທາດການເມືອງ; ມັນແມ່ນອາລົມຈິດ, ແມ່ນແບບແຜນການເຄື່ອນໄຫວເຮັດວຽກ, ດຳລົງຊີວິດໃນສັງຄົມ ແລະ ໃນຄອບຄົວຂອງພະນັກງານ-ສະມາຊິກພັກຂອງແຕ່ລະສະຫາຍ.

- ຄຸນສົມບັດສິນທຳປະຕິວັດ ແມ່ນສິ່ງຕັດສິນຄວາມກ້າວໜ້າຂອງສະມາຊິກພັກ-ພະນັກງານ ແຕ່ລະສະຫາຍ.

**②. ຄວາມສຳຄັນຂອງຄຸນສົມບັດສິນທຳປະຕິວັດ.**

- ການຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຄຸນສົມບັດສິນທຳປະຕິວັດ ມີຄວາມສຳຄັນທີ່ສຸດ ຕໍ່ພະນັກງານ-ສະ

ມາຊິກພັກ. ພັກເຮົາ ຖືວ່າຄຸນສົມບັດເປັນຫຼັກ ແລະ ຄວາມສາມາດເປັນສິ່ງສໍາຄັນທີ່ຂາດບໍ່ໄດ້, ພະນັກງານນໍາພາຜູ້ໜຶ່ງ, ຖ້າມີແຕ່ຄຸນສົມບັດສິນທໍາປະຕິວັດ, ແຕ່ຂາດຄວາມຮູ້, ຄວາມສາມາດແມ່ນເຮັດວຽກຫຍັງກໍຍາກ; ກົງ ກັນຂ້າມ, ຖ້າມີແຕ່ຄວາມຮູ້, ຄວາມສາມາດເກັ່ງ, ແຕ່ຂາດຄຸນສົມບັດສິນທໍາປະຕິວັດ ແມ່ນບໍ່ສາມາດນໍາພາການປະຕິວັດໄດ້ ຫຼື ໃຊ້ບໍ່ໄດ້.

- ຄຸນສົມບັດສິນທໍາປະຕິວັດເນື້ອແທ້ ແມ່ນຄຸນນະພາບຂອງສະມາຊິກພັກ, ຖ້າຫາກສະມາຊິກພັກມີຄຸນນະພາບດີເປັນສ່ວນຫຼາຍ, ພັກກໍມີຄວາມເຂັ້ມແຂງສາມາດນໍາພາມະຫາຊົນໄດ້; ກົງກັນຂ້າມຖ້າມີສະມາຊິກພັກສ່ວນຫຼາຍຄຸນນະພາບບໍ່ດີ, ພັກກໍບໍ່ເຂັ້ມແຂງ ແລະ ບໍ່ສາມາດນໍາພາມະຫາຊົນໄດ້.

## II. ເນື້ອໃນຂອງຄຸນທາດການເມືອງ ແລະ ຄຸນສົມບັດສິນທໍາປະຕິວັດ.

### 1. ເນື້ອໃນຂອງຄຸນທາດການເມືອງ.

**①. ມີຄວາມເຊື່ອໝັ້ນຕໍ່ອຸດົມການສັງຄົມນິຍົມຢ່າງຕາຍໃຈ.**

ພະນັກງານ, ສະມາຊິກພັກຕ້ອງມີຄວາມເຊື່ອໝັ້ນຕໍ່ລັດທິສັງຄົມນິຍົມຢ່າງໜັກແໜ້ນ; ມີຄວາມຈົງຮັກພັກດີຕໍ່ພັກ, ຕໍ່ປະເທດຊາດ ແລະ ຕໍ່ລະບອບປະຊາທິປະໄຕຢ່າງໜັກແໜ້ນ; ມີຄວາມຕື່ນຕົວເປັນເຈົ້າການເສີມຂະຫຍາຍສິດເປັນເຈົ້າ, ມີມານະຈິດອົດທົນຜ່ານຜ່າຄວາມຫຍຸ້ງຍາກ ແລະ ມີນໍ້າໃຈເສຍສະຫຼະ ເພື່ອຄວາມຮັ່ງມີ-ຜາສຸກຂອງປະຊາຊົນລາວບັນດາເຜົ່າ ກໍຄື ເພື່ອຄວາມກ້າວໜ້າຂອງປະເທດຊາດ.

**②. ມີຫຼັກໝັ້ນມິດ-ສັດຕູອັນຈະແຈ້ງ.**

ພະນັກງານ-ສະມາຊິກພັກ ຕ້ອງເດັດດ່ຽວໜຽວແໜ້ນຕໍ່ສູ້ກັບກົນອຸບາຍມ້າງເພທໍາລາຍ ຂອງອິທິກໍາປໍລະປັກ ແລະ ກຸ່ມຄົນບໍ່ດີໃນທຸກຮູບແບບ ເພື່ອປົກປັກຮັກສາປະເທດຊາດ ແລະ ຄວາມໝັ້ນຄົງຂອງລະບອບປະຊາທິປະໄຕປະຊາຊົນ; ຕ້ອງເປັນເຈົ້າການສະກັດກັ້ນການຫັນປ່ຽນດ້ວຍຕົນເອງ ຢູ່ພາຍໃນຂອງພວກເຮົາ, ມີຄວາມສະດຸ້ງໄວ ແລະ ມີສະຕິລະວັງຕົວສູງ, ບໍ່ຫວັ່ນໄຫວຄອນແຄນຕໍ່ກົນອຸບາຍຫັນປ່ຽນໂດຍສັນຕິຂອງສັດຕູ; ຮູ້ປຸກລະດົມຈັດຕັ້ງນໍາພາມະຫາຊົນ, ໝູນໃຊ້ຮູບແບບ ແລະ ວິທີການຕໍ່ສູ້ທີ່ສອດຄ່ອງ, ເໝາະສົມເພື່ອຮັບປະກັນສະຖຽນລະພາບ ແລະ ຄວາມໝັ້ນຄົງຂອງປະເທດຊາດ.

**③. ມີຄວາມຮູ້ກ່ຽວກັບລັດທິມາກ-ເລນິນ ແລະ ແນວທາງນະໂຍບາຍຂອງພັກຢ່າງເລິກເຊິ່ງ.**

ພະນັກງານ-ສະມາຊິກພັກ ຕ້ອງຕັ້ງໜ້າຄົ້ນຄວ້າຮໍ່າຮຽນທິດສະດີມາກ-ເລນິນ, ຄົ້ນຄວ້າເຊື່ອມຊຶມ ແລະ ກໍາແໜ້ນແນວທາງ, ແຜນນະໂຍບາຍຂອງພັກ, ນະໂຍບາຍ, ລະບຽບກົດໝາຍຂອງລັດໃຫ້ເລິກເຊິ່ງ; ມີຄວາມສາມາດຫັນແນວທາງ, ແຜນນະໂຍບາຍຂອງພັກມາເປັນແຜນການ ແລະ ໂຄງການວຽກງານລະອຽດຂອງຄະນະພັກ, ຂອງຂະແໜງການ ແລະ ທ້ອງຖິ່ນຕົນ; ຮູ້ໂຄສະນາ-ປຸກລະດົມ ແລະ ຈັດຕັ້ງນໍາພາຂະບວນການປະຕິວັດດ້ວຍຈິດໃຈຮັກຊາດອັນແທ້ຈິງ, ເສີມຂະຫຍາຍຈິດໃຈເພິ່ງຕົນເອງ, ສ້າງຄວາມເຂັ້ມແຂງດ້ວຍຕົນເອງ ເພື່ອນໍາເອົາຄວາມຮັ່ງມີ-ຜາສຸກມາໃຫ້ປະເທດຊາດ ແລະ ປະຊາຊົນ; ຕ້ອງກໍາແໜ້ນແນວທາງການຕ່າງປະເທດ ແລະ ທິດທາງ, ຫຼັກການດ້ານການເປີດກວ້າງການພົວພັນຮ່ວມມື, ການເຊື່ອມໂຍງກັບພາກພື້ນ ແລະ ສາກົນຂອງພັກ, ຮູ້ຍາດແຍ່ງ, ກໍາແໜ້ນກາລະໂອກາດ ເພື່ອພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີບາດກ້າວຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

**④. ມີຄວາມຮັບຜິດຊອບຕໍ່ໜ້າທີ່, ວຽກງານທີ່ໄດ້ຮັບການມອບໝາຍສູງ.**

ພະນັກງານ - ສະມາຊິກພັກ ຕ້ອງຍົກສູງຄວາມຮັບຜິດຊອບການເມືອງ, ມີຄວາມຫ້າວຫັນເປັນເຈົ້າການ

ປະຕິບັດວຽກງານດ້ວຍຄວາມປະດິດສ້າງ, ມີຄວາມກ້າຫານຮັບຜິດຊອບຕໍ່ຜົນໄດ້, ຜົນເສຍໃນການປະຕິບັດໜ້າທີ່ວຽກງານ; ບໍ່ເລືອກວຽກ, ການຈັດຕັ້ງມອບໝາຍຫຍັງໃຫ້ ກໍຕ້ອງຕັດສິນໃຈເຮັດໃຫ້ສຳເລັດ ແລະ ເຮັດວຽກມີປະສິດທິຜົນສູງ.

**⑤. ມີຄວາມເຊື່ອໝັ້ນຕໍ່ກຳລັງແຮງ ແລະ ສະຕິປັນຍາ ຂອງມະຫາຊົນຢ່າງໜັກແໜ້ນ.**

ສະມາຊິກພັກ ຕ້ອງຮູ້ປຸກລະດົມຂົນຂວາຍ ແລະ ເສີມຂະຫຍາຍກຳລັງແຮງສັງລວມຂອງປະຊາຊົນບັນດາເຜົ່າ, ຊັ້ນຄົນຕ່າງໆ ແລະ ບັນດາພາກສ່ວນເສດຖະກິດ; ຮູ້ຂຸດຄົ້ນ ແລະ ນຳໃຊ້ທ່າແຮງກັບທີ່, ທັງທ່າແຮງດ້ານຊັບພະຍາກອນທຳມະຊາດ ແລະ ທ່າແຮງດ້ານກຳລັງຄົນເຂົ້າໃນແກ້ໄຂຄວາມທຸກຍາກ ແລະ ການພັດທະນາປະເທດຊາດ ເພື່ອບັນລຸອຸດົມການທີ່ພັກເຮົາກຳນົດໄວ້.

**⑥. ເຄົາລົບ ແລະ ປະຕິບັດກົດລະບຽບຂອງພັກ, ກົດໝາຍຂອງລັດຢ່າງເຂັ້ມງວດ.**

ພະນັກງານ, ສະມາຊິກພັກ ຈະຢູ່ໃນຖານະຕຳແໜ່ງໃດກໍຕາມ, ຕ້ອງເຄົາລົບ ແລະ ປະຕິບັດກົດໝາຍຢ່າງເຂັ້ມງວດ, ມີສະຕິຕໍ່ການຈັດຕັ້ງ, ມີລະບຽບວິໄນ, ເປັນການນຳຂັ້ນສູງເທົ່າໃດ ຍິ່ງຕ້ອງເປັນແບບຢ່າງທີ່ດີໃນການເຄົາລົບ ແລະ ປະຕິບັດລະບຽບກົດໝາຍ, ບໍ່ເຮັດໃນສິ່ງທີ່ລະເມີດລະບຽບກົດໝາຍ. ພະນັກງານ, ສະມາຊິກພັກຕ້ອງເອົາໃຈໃສ່ປົກປັກຮັກສາ ແລະ ທະນຸບຳລຸງຄວາມສາມັກຄີເປັນເອກະພາບພາຍໃນພັກ, ຕ້ອງສຶກສາອົບຮົມຄອບຄົວ ແລະ ຍາດພີ່ນ້ອງບໍ່ໃຫ້ກະທຳຜິດລະບຽບກົດໝາຍ.

**2. ເນື້ອໃນຂອງຄຸນສົມບັດສິນທຳປະຕິວັດ.**

**①. ມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ.**

ການມີນ້ຳໃຈເສຍສະຫຼະເພື່ອຊາດ, ເພື່ອສ່ວນລວມເນື້ອແທ້ກໍແມ່ນ ການສະແດງອອກຂອງໜ້າທີ່ການເມືອງອັນເປັນພື້ນຖານກວ່າໝູ່ຂອງຄຸນທາດການເມືອງ ເປັນຕົ້ນແມ່ນຄວາມອົດທົນສູ້ຊົນ ເພື່ອເຮັດໃຫ້ແນວທາງນະໂຍບາຍ ແລະ ອຸດົມຄະຕິຂອງພັກເປັນຈິງເທື່ອລະກ້າວຄື: ເຮັດໃຫ້ປະຊາຊົນຮັ່ງມີ-ຜາສຸກ, ປະເທດຊາດມັ່ງຄັ່ງເຂັ້ມແຂງ, ສັງຄົມສາມັກຄີປອງດອງ, ປະຊາທິປະໄຕ, ຍຸຕິທຳ ແລະ ສີວິໄລ ເທື່ອລະກ້າວ; ການເສຍສະຫຼະເພື່ອປະເທດຊາດ, ເພື່ອປະຊາຊົນໝາຍເຖິງ ການທຸ້ມເທສະຕິປັນຍາ ແລະ ກຳລັງແຮງຂອງຕົນ ເພື່ອຮັບໃຊ້ຊາດ ແລະ ປະຊາຊົນ ກໍຄື ຮັບໃຊ້ພາລະກິດຕໍ່ສູ້ປະຕິວັດໂດຍບໍ່ເລືອກວຽກ, ບໍ່ລັ່ງເລທໍ້ຖອຍຕໍ່ຄວາມຫຍຸ້ງຍາກໃດໆ; ພະນັກງານ, ສະມາຊິກພັກ ໂດຍສະເພາະແມ່ນພະນັກງານການນຳແຕ່ລະຂັ້ນ ຍິ່ງມີຖານະຕຳແໜ່ງ ແລະ ມີຄວາມຮັບຜິດຊອບສູງເທົ່າໃດຍິ່ງ ຕ້ອງມີຄວາມເສຍສະຫຼະສູງເທົ່ານັ້ນ; ການເສຍສະຫຼະເພື່ອຊາດ, ເພື່ອປະຊາຊົນ ຕ້ອງສະແດງອອກໃນການກະທຳ, ແຕ່ບໍ່ແມ່ນໃນຄຳເວົ້າຊື່ໆ ເປັນຕົ້ນແມ່ນການເສຍສະຫຼະເວລາ, ເສຍສະຫຼະເລືອດເນື້ອ, ເຫື່ອແຮງ ແລະ ສະຕິປັນຍາ, ເສຍສະຫຼະຄວາມສຸກສ່ວນຕົວ ເພື່ອປະຕິບັດໜ້າທີ່ດ້ວຍຄວາມຮັບຜິດຊອບສູງ, ສູ້ຊົນເຮັດຫຼ້ອນໜ້າທີ່ໂດຍບໍ່ຮຽກຮ້ອງ, ເລັ່ງທວງເອົາຜົນປະໂຫຍດໃດໆ ໃຫ້ຕົນນອກເໜືອຈາກນະໂຍບາຍລວມຂອງພັກ, ຂອງລັດໄດ້ກຳນົດໄວ້.

**②. ມີຄວາມດຸໝັ່ນ, ພາກພຽກ, ສັດຊື່, ປະຢັດ ແລະ ປອດໃສ.**

ເປັນພະນັກງານ, ສະມາຊິກພັກໂດຍສະເພາະຜູ້ທີ່ເປັນຫຼັກແຫຼ່ງນຳພາ, ຄຸ້ມຄອງຕ້ອງດຸໝັ່ນ, ປະຢັດ, ສັດຊື່ ແລະ ມີຄວາມປອດໃສ, ເປັນແບບຢ່າງທີ່ດີເພື່ອໃຫ້ຂັ້ນລຸ່ມ ແລະ ຜູ້ອື່ນໄດ້ຮຽນນຳ, ເພາະວ່າ "ຄວາມເປັນແບບຢ່າງທີ່ດີແມ່ນການນຳພາທີ່ດີ" ຫາກຂາດຄວາມເປັນແບບຢ່າງທີ່ດີ, ມະຫາຊົນກໍບໍ່ນັບຖື ແລະ ຂາດຄວາມເຊື່ອໝັ້ນ ຊຶ່ງສິ່ງຜົນສະທ້ອນທາງລົບໂດຍກົງ ຕໍ່ພາລະບົດບາດການນຳພາຂອງພັກ. ຄວາມເປັນແບບຢ່າງທີ່ດີ ຕ້ອງສະແດງ

ອອກທັງຄຳເວົ້າ ແລະ ການກະທຳ.

**- ດຸໝັ່ນ:** ແມ່ນເຮັດວຽກດ້ວຍຄວາມຕັ້ງໜ້າບຸກບືນ, ຕື່ນຕົວເປັນເຈົ້າການ; ຫາກບໍ່ແມ່ນໃຫ້ຜູ້ອື່ນມາບອກ, ມາສັ່ງຈິ່ງເຮັດ; ວຽກຍາກ ຫຼື ວຽກງ່າຍ ກໍຕ້ອງອົດທົນເຮັດໃຫ້ສຳເລັດມີປະສິດທິຜົນສູງ; ເຮັດໃຫ້ດີທີ່ສຸດ, ເຮັດໃຫ້ໄວ, ເຮັດໃຫ້ຖືກກົດໝາຍ ແລະ ມີຄວາມຮັບຜິດຊອບສູງ.

**- ພາກພຽນ:** ແມ່ນເຮັດວຽກດ້ວຍຄວາມມານະ, ອົດທົນໂດຍມີການຄົ້ນຄິດໝູນໃຊ້ຄວາມຮູ້, ຄວາມສາມາດເຂົ້າໃນວຽກງານໃຫ້ເກີດຜົນປະໂຫຍດສູງສຸດ, ເຮັດວຽກມີແຜນການ, ມີການຕິດຕາມ, ກວດກາເຫັນອັນດີ, ປັດໄຈໃໝ່ກໍເອົາໃຈໃສ່ເສີມຂະຫຍາຍ, ເຫັນຈຸດອ່ອນ, ຂໍ້ຄົງຄ້າງກໍພະຍາຍາມປັບປຸງແກ້ໄຂໃຫ້ດີຂຶ້ນ.

**- ປະຢັດ:** ແມ່ນການຮູ້ຈັກໃຊ້, ຮູ້ຈັກຈ່າຍຢ່າງສົມເຫດ, ສົມຜົນ ແລະ ເປັນປະໂຫຍດ, ບໍ່ຫຼິ້ນກິນຟຸມເຟືອຍ, ເສລີຊະຊາຍ, ຮູ້ຈັກປົກປັກຮັກສາບົວລະບັດສິ່ງຂອງສ່ວນຕົວ, ສ່ວນລວມເພື່ອໃຫ້ໃຊ້ໄດ້ດົນ; ປະຢັດຍັງໝາຍເຖິງການໃຊ້ຖືກກັບເປົ້າໝາຍ, ຖືກກັບຈຸດປະສົງ ແລະ ໃຊ້ໃຫ້ເກີດປະໂຫຍດແກ່ສ່ວນລວມຫຼາຍເທົ່າທີ່ຈະຫຼາຍໄດ້; ປະຢັດແມ່ນການບໍ່ຟຸມເຟືອຍ, ບໍ່ໃຊ້ຈ່າຍເກີນຖານະຕຳແໜ່ງ ແລະ ຖານະການເງິນຂອງຕົນ.

**- ສັດຊື່:** ແມ່ນການກະທຳທີ່ສອດຄ່ອງກັບຄຳເວົ້າ, ບໍ່ຕົວະ, ບໍ່ສໍ້ໂກງ; ບໍ່ສວຍໂອກາດຊອກຊ່ອງຫວ່າງ ແລະ ວິທີການ ເພື່ອລັກໂລບ, ຍັກຍອກເອົາຊັບສິນການຈັດຕັ້ງພັກ-ລັດ ແລະ ຂອງຜູ້ອື່ນມາເປັນຂອງຕົນເອງ.

**- ປອດໃສ:** ແມ່ນໝາຍເຖິງຈິດໃຈ ແລະ ການກະທຳທີ່ໃສສະອາດ, ບໍລິສຸດ, ຈິງໃຈຕໍ່ການຈັດຕັ້ງ ແລະ ຕໍ່ຄອບຄົວ; ປອດໃສ ຍັງໝາຍເຖິງການກະທຳທີ່ຖືກຕ້ອງຕາມລະບຽບກົດໝາຍ ແລະ ຮີດຄອງປະເພນີອັນດີງາມຂອງຊາດ.

### ③. ມີລະບຽບວິໄນ ແລະ ເຄົາລົບກົດໝາຍ.

ພະນັກງານ, ສະມາຊິກພັກ ຍິ່ງເປັນພະນັກງານການນຳສູງເທົ່າໃດຍິ່ງ ຕ້ອງເປັນຜູ້ນຳໜ້າທີ່ດີໃນການຮຽນຮູ້ກ່ຽວກັບກົດໝາຍ, ເຄົາລົບນັບຖືກົດໝາຍ, ປະຕິບັດ ແລະ ນຳໃຊ້ກົດໝາຍຢ່າງເຂັ້ມງວດ, ບໍ່ສວຍໃຊ້ ຫຼື ລະເມີດກົດໝາຍ, ກົດລະບຽບຕ່າງໆ ເພື່ອໃຫ້ຕົນເອງມີຄວາມສະດວກ, ມີຜົນປະໂຫຍດອັນຈະພາໃຫ້ປະຊາຊົນຂາດຄວາມເຊື່ອຖື.

- ການມີລະບຽບວິໄນ ແລະ ເຄົາລົບກົດໝາຍ ຍັງຕ້ອງສະແດງອອກໃນການເຄົາລົບສິດເສລີພາບຂອງພົນລະເມືອງ, ເປັນເຈົ້າການປະກອບສ່ວນປົກປ້ອງກົດໝາຍ ແລະ ຄວາມຍຸຕິທຳ, ປະກອບສ່ວນເຂົ້າໃນການຮັກສາຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍ ແລະ ຄວາມປອດໄພໃນສັງຄົມ.

### ④. ມີຄວາມສາມັກຄີເອື້ອເຟື້ອເພື່ອແຜ່.

ຄວາມສາມັກຄີເອື້ອເຟື້ອເພື່ອແຜ່ ສະແດງອອກໃນຄວາມເຄົາລົບນັບຖືຊຶ່ງກັນ ແລະ ກັນ, ຮັກແພງກັນ, ເຊື່ອໝັ້ນກັນ, ເຮັດວຽກນຳກັນດ້ວຍຄວາມເຂົ້າໃຈກັນ ແລະ ຊ່ວຍເຫຼືອກັນໃຫ້ມີຜົນສຳເລັດ, ມີຈິດໃຈເສຍສະຫຼະ ເພື່ອຜູ້ອື່ນດ້ວຍຄວາມບໍລິສຸດໃຈ, ບໍ່ຢ້ານລື່ນຢ້ານເຫຼືອ ແລະ ບໍ່ມີອະຄະຕິອິດສາບັງບຽດກັນ.

### ⑤. ມີຈິດໃຈຮັກຊາດອັນດູດດື່ມ.

ຈິດໃຈຮັກຊາດອັນດູດດື່ມ ແມ່ນການສະແດງອອກເຖິງລັດທິຮັກຊາດ, ແມ່ນຄວາມພາກພູມໃຈຕໍ່ຊາດ, ມີຄວາມເອກອ້າງທະນົງໃຈເປັນຄົນລາວ, ຄົນລາວມີຈິດໃຈອົງອາດກ້າຫານ, ຊາດລາວວິລະຊົນບໍ່ເຄີຍຍອມຈຳນົນໃຫ້ຊາດອື່ນເຂົ້າມາຄອບຄອງ, ມີເອກະລັກ, ມີຮີດຄອງປະເພນີອັນດີງາມ, ອັນໃດແມ່ນຂອງຄົນລາວເຮັດ, ອັນໃດແມ່ນຜະລິດຕະພັນທີ່ດີງາມຈາກສະຕິປັນຍາ, ເຫື່ອແຮງ ແລະ ທຶນຮອນຂອງຄົນລາວໃນຊາດຕ້ອງຕັ້ງໜ້າປົກປັກຮັກສາ ແລະ ສົ່ງເສີມ; ອັນໃດແມ່ນຜົນສຳເລັດ, ອັນໃດແມ່ນໄຊຊະນະທີ່ຄົນລາວຍາດມາໄດ້ກໍຕ້ອງມີຄວາມພາກ

ພູມໃຈ, ເອກອ້າງ, ຍ້ອງຍໍສັນລະເສີນ. ນ້ຳໃຈຮັກຊາດ ຍັງສະແດງອອກໃນການເປັນເຈົ້າການເຜີຍແຜ່ສິ່ງທີ່ດີງາມຂອງຊາດລາວຕໍ່ຕ່າງປະເທດ; ເອົາໃຈໃສ່ໃນການຄົ້ນຄວ້າປະດິດສ້າງ ເພື່ອຜະລິດວັດຖຸສິ່ງຂອງທີ່ມີຄຸນນະພາບ, ວິຈິດສວຍງາມ ເພື່ອສະແດງໃຫ້ຕ່າງຊາດເຫັນ. ພ້ອມກັນນັ້ນ, ກໍສະ ແດງອອກໃນການມີຈິດໃຈຮ່ວມມື, ແຂ່ງຂັນກັບຊາດອື່ນເພື່ອກຽດສັກສີ ແລະ ຊື່ສຽງຂອງຊາດຕົນ.

### ⑥. ມີຄວາມສຸພາບຮຽບຮ້ອຍ ແລະ ເຮັດແທ້ທຳຈິງ.

ເປັນພະນັກງານ, ສະມາຊິກພັກ ນອກຈາກມີຈັນຍາບັນ ແລະ ມີລະບຽບວິໄນແລ້ວຍັງຕ້ອງມີຄວາມສຸພາບຮຽບຮ້ອຍ, ສະຫງ່ຽມຄ່ຽມຄົມ, ບໍ່ອວດອົ່ງທະນົງຕົວ, ບໍ່ດູຖູກໝິ່ນປະໝາດຜູ້ອື່ນ; ພະນັກງານ, ສະມາຊິກພັກຢາກໄດ້ຮັບກຽດ, ຢາກໄດ້ການເຄົາລົບນັບຖືຈາກຜູ້ອື່ນກໍຕ້ອງມີທັດສະນະ ແລະ ການກະທຳໃຫ້ກຽດແກ່ຜູ້ອື່ນ, ເຄົາລົບນັບຖືເພື່ອນຮ່ວມງານ ແລະ ປະຊາຊົນ; ຕ້ອງເປັນຄົນເຮັດແທ້ທຳຈິງ, ເວົ້າແນວໃດຕ້ອງເຮັດຄືແນວນັ້ນ ແລະ ຕ້ອງເຮັດໃຫ້ດີທີ່ສຸດ, ບໍ່ອະນຸຍາດໃຫ້ເວົ້າແບບໜຶ່ງແລ້ວໄປເຮັດອີກແບບໜຶ່ງ, ບໍ່ດັ່ງນັ້ນກໍຈະຂາດຄວາມເປັນແບບຢ່າງທີ່ດີ, ຂາດລັກສະນະນຳໜ້າ ແລະ ຂາດຄວາມເຫຼື້ອມໃສສັດທາຈາກປະຊາຊົນ.

### ⑦. ບຸກບືນຮຽນຮູ້ ແລະ ພັດທະນາຕົນເອງ.

ພະນັກງານ, ສະມາຊິກພັກ ຕ້ອງສະແຫວງຫາ ແລະ ບຸກບືນຄົ້ນຄວ້າຮ່ຳຮຽນ ເພື່ອຍົກລະດັບຄວາມຮູ້ຂອງຕົນໃຫ້ສູງຂຶ້ນໃນທຸກດ້ານ ເຊັ່ນ: ຮຽນຮູ້ດ້ວຍຕົນເອງ, ຮຽນຮູ້ນຳໝູ່ຄູ່ເພື່ອນສະຫາຍ, ຮຽນຕາມຫຼັກການຕຳລາ, ຮຽນຮູ້ນຳວຽກງານຕົວຈິງ. ອັນສຳຄັນທີ່ສຸດ ແມ່ນຮຽນຮູ້ນຳຂະບວນການມະຫາຊົນ ແລະ ຮຽນແລ້ວຕ້ອງຮູ້ເຮັດ. ການຮຽນຮູ້ບໍ່ມີວັນສິ້ນສຸດ ທ່ານ ເລນິນ ເວົ້າວ່າ: **ຮຽນແລ້ວ, ຮຽນອີກ, ຮຽນເລື້ອຍໆໄປ'**ຈຶ່ງຈະສາມາດພັດທະນາຕົນເອງຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ ປະກອບສ່ວນພັດທະນາປະເທດຊາດ ໃຫ້ມັ່ງຄັ່ງເຂັ້ມແຂງໄດ້.

### III. ວິທີການຝຶກຝົນຫຼໍ່ຫຼອມຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດ.

ເພື່ອຝຶກຝົນຫຼໍ່ຫຼອມຕົນເອງ ໃຫ້ມີຄຸນທາດການເມືອງ ແລະ ຄຸນສົມບັດສິນທຳປະຕິວັດອັນໜັກແໜ້ນ, ພະນັກງານ-ສະມາຊິກພັກ ຕ້ອງເອົາໃຈໃສ່ບາງວິທີການຕົ້ນຕໍ ດັ່ງນີ້:

1. ອອກແຮງງານຄົ້ນຄວ້າຮ່ຳຮຽນລັດທິມາກ-ເລນິນເປັນປະຈຳ; ເອົາໃຈໃສ່ຄົ້ນຄວ້າເຊື່ອມຊຶມ ແລະ ກຳແໜ້ນແນວທາງ, ແຜນນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ; ເອົາໃຈໃສ່ຮ່ຳຮຽນຍົກລະດັບຄວາມຮູ້ດ້ານຕ່າງໆໃຫ້ສູງຂຶ້ນຢ່າງບໍ່ຢຸດຢັ້ງ.

2. ເຂົ້າຮ່ວມດຳເນີນຊີວິດ, ສຳຫຼວດກວດກາເປັນປົກກະຕິ ແລະ ເຂັ້ມງວດ ເພື່ອຊອກໃຫ້ເຫັນດ້ານຕັ້ງໜ້າແນໃສ່ປົກປັກຮັກສາ ແລະ ເສີມຂະຫຍາຍ, ພ້ອມກັນນັ້ນຕ້ອງຊອກໃຫ້ເຫັນຈຸດອ່ອນ, ຂໍ້ຄົງຄ້າງ ເພື່ອມີວິທີການປັບປຸງແກ້ໄຂຢ່າງເດັດຂາດ ແລະ ທັນການ.

3. ເອົາໃຈໃສ່ ປັບປຸງທັດສະນະມະຫາຊົນໃຫ້ໜັກແໜ້ນ ດ້ວຍການຕັ້ງໜ້າເຂົ້າຮ່ວມຂະບວນການຂອງມະຫາຊົນ ໂດຍຖືເອົາຂະບວນການມະຫາຊົນເປັນບ່ອນຝຶກຝົນຫຼໍ່ຫຼອມຕົນເອງ ແລະ ຖືເອົາມະຫາຊົນເປັນຜູ້ສ້າງພັກ.

- ສະມາຊິກພັກ ຕ້ອງດຳລົງຊີວິດ ແລະ ປະຕິບັດໜ້າທີ່ວຽກງານຕິດແທດກັບມະຫາຊົນ, ສະແດງຄວາມເຄົາລົບນັບຖືມະຫາຊົນ, ເຂົ້າໃຈຄວາມທຸກ-ສຸກ, ຄວາມຂັດຂ້ອງໝອງໃຈ ແລະ ຄວາມມຸ້ງມາດປາຖະໜາຂອງມະຫາຊົນ.

- ສະມາຊິກພັກ ຕັ້ງໜ້າຊອກຫາທຸກວິທີທາງ ເພື່ອນຳພາມະຫາຊົນຈັດຕັ້ງປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ ກໍຄື ປະຕິບັດໃຫ້ບັນລຸຈຸດໝາຍແຫ່ງຄວາມມຸ້ງມາດປາຖະໜາຂອງມະຫາຊົນ.

4. ເອົາໃຈໃສ່ປັບປຸງທັດສະນະຫຼັກໝັ້ນຊຶນຊັ້ນໃຫ້ໜັກແໜ້ນ ແລະ ຍົກສູງສະຕິລະວັງຕົວຢູ່ສະເໝີ ເພື່ອບໍ່ໃຫ້ມີຊ່ອງຫວ່າງໃຫ້ສັດຕູສວຍໃຊ້ ເພື່ອມ້າງເພທຳລາຍພວກເຮົາ.

5. ເອົາໃຈໃສ່ກໍ່ສ້າງ ແລະ ປັບປຸງພັກໃຫ້ປອດໃສ, ເຂັ້ມແຂງ, ໜັກແໜ້ນຮອບດ້ານ; ກໍ່ສ້າງອົງການປົກຄອງໃຫ້ມີຄວາມເຂັ້ມແຂງ ແລະ ຂະຫຍາຍຕົວຢ່າງບໍ່ຢຸດຢັ້ງ.

6. ບັນຫາທີ່ເປັນພື້ນຖານກວ່າໝູ່ແມ່ນພະນັກງານ, ສະມາຊິກພັກທຸກສະຫາຍ ຕ້ອງມີຄວາມຕັດສິນໃຈສູງໃນການຝຶກຝົນຫຼໍ່ຫຼອມຕົນເອງ ໂດຍເລີ່ມຈາກການຍົກສູງຄວາມຮັບຜິດຊອບຕໍ່ວຽກງານທີ່ໄດ້ຮັບມອບໝາຍ ແລະ ເຂັ້ມງວດຕໍ່ຕົນເອງ, ກ້າຫານຫັນປ່ຽນດ້ວຍຕົນເອງ, ຍິນດີຮັບເອົາຄໍາຕິຊົມຈາກຄົນອື່ນດ້ວຍຄວາມຈິງໃຈ ແລະ ເອົາໃຈໃສ່ຕ້ານລັດທິເອກະຊົນ, ແນວຄິດຂີ້ຄ້ານມັກງ່າຍ, ແນວຄິດຄັບແຄບ, ອວດອົງທະນົງຕົວ.

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ພັກປະຊາຊົນປະຕິວັດລາວ
ຄະນະໂຄສະນາອົບຮົມສູນກາງພັກ ເລກທີ____/ຄອສພ
ນະຄອນຫຼວງວຽງຈັນ, ວັນທີ ____/__/2018

# ບົດແນະນຳ
# ຂອງຄະນະໂຄສະນາອົບຮົມສູນກາງພັກ ກ່ຽວກັບ
# ການນຳໃຊ້ເອກະສານສຶກສາອົບຮົມການເມືອງ - ແນວຄິດ ເພື່ອກະກຽມ
# ດຳເນີນກອງປະຊຸມໃຫຍ່ຂອງພັກ 3 ຂັ້ນ ສຳລັບພະນັກງານທົ່ວໄປ ແລະ ປະຊາຊົນ

**ເຖິງ:** ຄະນະພັກບັນດາກະຊວງ, ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງ, ຄະນະພັກແຂວງ, ເມືອງ, ນະຄອນ ແລະ ຮາກຖານໃນຂອບເຂດທົ່ວປະເທດ.

**ເລື່ອງ:** ການນຳໃຊ້ເອກະສານ ແລະ ຈັດຕັ້ງສຶກສາອົບຮົມການເມືອງ - ແນວຄິດ ໃຫ້ພະນັກງານທົ່ວໄປ ແລະ ປະຊາຊົນ.

- ປະຕິບັດຕາມຄຳສັ່ງຂອງຄະນະເລຂາທິການສູນກາງພັກ ສະບັບເລກທີ 04/ຄລສພ, ລົງວັນທີ 07/05/2018 ວ່າດ້ວຍການກະກຽມດຳເນີນກອງປະຊຸມໃຫຍ່ ອົງຄະນະພັກກະຊວງ-ອົງການ, ແຂວງ, ນະຄອນຫຼວງ; ອົງຄະນະພັກເມືອງ-ນະຄອນ ແລະ ຮາກຖານພັກ ໃນຂອບເຂດທົ່ວປະເທດ ໄດ້ກຳນົດໄວ້ວ່າ ມອບໃຫ້ຄະນະໂຄສະນາອົບຮົມສູນກາງພັກ ກຳນົດເນື້ອໃນໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ແລະ ອອກບົດແນະນຳໃນການຈັດຕັ້ງເຜີຍແຜ່ຮ່ຳຮຽນເອກະສານສຳຄັນຕ່າງໆ. ຄະນະໂຄສະນາອົບຮົມສູນກາງພັກ ໄດ້ຄົ້ນຄວ້າຮຽບຮຽງເອກະສານໂຄສະນາສຶກສາອົບຮົມການເມືອງ-ແນວຄິດ ໃຫ້ສະມາຊິກພັກ-ພະນັກງານຫຼັກແຫຼ່ງຢູ່ບັນດາກະຊວງ-ອົງການທຽບເທົ່າ, ແນວລາວສ້າງຊາດ, ອົງການຈັດຕັ້ງມະຫາຊົນທັງຢູ່ຂັ້ນສູນກາງ ແລະ ທ້ອງຖິ່ນຮາກຖານ ໃຫ້ສອດຄ່ອງກັບເນື້ອໃນຂອງຄຳສັ່ງແນະນຳດັ່ງກ່າວ. ສະນັ້ນ, ເພື່ອເຮັດໃຫ້ການຈັດຕັ້ງປະຕິບັດໄດ້ຮັບຜົນດີ, ຄະນະໂຄສະນາອົບຮົມສູນກາງພັກ ແນະນຳບາງບັນຫາ ດັ່ງນີ້:

**I. ຈຸດປະສົງ-ລະດັບຄາດໝາຍ.**

- ແນໃສ່ຍົກລະດັບຄວາມຮັບຮູ້-ເຂົ້າໃຈ ຂອງສະມາຊິກພັກກ່ຽວກັບເນື້ອໃນມະຕິກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໃຫ້ເລິກເຊິ່ງກວ່າເກົ່າ ໂດຍສະເພາະແມ່ນການເສີມຂະຫຍາຍມູນເຊື້ອຂອງຊາດ, ຂອງຄົນລາວ; ຄວາມສາມັກຄີປອງດອງແມ່ນບໍ່ເກີດແຫ່ງກຳລັງແຮງຂອງການປົກປັກຮັກສາ ແລະ ພັດທະນາປະເທດຊາດ; ການແກ້ໄຂຄວາມທຸກຍາກ.

- ບົນພື້ນຖານຄວາມຮັບຮູ້-ເຂົ້າໃຈດັ່ງກ່າວນັ້ນ ເຮັດໃຫ້ພະນັກງານ, ປະຊາຊົນລາວບັນດາເຜົ່າມີຄວາມເອກອ້າງທະນົງໃຈຕໍ່ຄວາມເປັນລາວ; ພ້ອມກັນປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອອັນດີງາມຂອງຊາດລາວ, ຂອງຄົນລາວ ແລະ ເສີມສ້າງຄວາມສາມັກຄີເປັນປຶກແຜ່ນຂອງຄົນພາຍໃນຊາດໃຫ້ກາຍເປັນກຳລັງແຮງອັນແຂງແກ່ນແໜ້ນໜ້າ ເພື່ອພັດທະນາປະເທດຊາດ ໃຫ້ຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາ ຕາມແນວທາງຂອງພັກວາງອອກ.

**II. ເປົ້າໝາຍສຶກສາອົບຮົມ.**

- ພະນັກງານ-ລັດຖະກອນ ທີ່ເຮັດວຽກຢູ່ບັນດາກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ, ນະຄອນຫຼວງ, ແຂວງ, ເມືອງ, ນະຄອນ, ລັດວິສາຫະກິດ, ກົມກອງການຜະລິດ.

- ປະຊາຊົນບັນດາເຜົ່າທົ່ວປະເທດ (ເປົ້າໝາຍຕົ້ນຕໍແມ່ນຜູ້ເປັນຫົວໜ້າຄອບຄົວ).

III. **ເນື້ອໃນ.**

1). ເສີມຂະຫຍາຍມູນເຊື້ອຂອງຊາດ, ຂອງຄົນລາວ.

2). ສັງຄົມສາມັກຄີປອງດອງແມ່ນບໍ່ເກີດແຫ່ງກຳລັງແຮງຂອງການປົກປັກຮັກສາ ແລະ ພັດທະນາປະເທດຊາດ.

3). ການແກ້ໄຂຄວາມທຸກຍາກ.

IV. **ວິທີຈັດຕັ້ງປະຕິບັດ.**

- ໃຫ້ຄະນະພັກກະຊວງ, ອົງການທຽບເທົ່າອ້ອມຂ້າງສູນກາງ, ຄະນະພັກນະຄອນຫຼວງ, ແຂວງ, ເມືອງ, ນະຄອນ ແລະ ຄະນະພັກຮາກຖານແຕ່ລະບ່ອນເອົາເອກະສານນີ້ ຈັດຕັ້ງສຶກສາອົບຮົມພະນັກງານ-ລັດຖະກອນ ແລະ ປະຊາຊົນ ຢູ່ໃນຄວາມຮັບຜິດຊອບຂອງຕົນຢ່າງທົ່ວເຖິງ ແລະ ເລິກເຊິ່ງ ໂດຍອີງໃສ່ສະພາບຕົວຈິງຂອງແຕ່ລະບ່ອນ. ບ່ອນໃດມີພະນັກງານ-ລັດຖະກອນຫຼາຍ, ບ້ານໃດມີພົນລະເມືອງຫຼາຍອາດຈັດຕັ້ງສຶກສາອົບຮົມເປັນຫຼາຍຊຸດຕາມຄວາມເໝາະສົມຂອງແຕ່ລະບ່ອນ ແລະ ແຕ່ລະບ້ານ (ສຳລັບຂັ້ນບ້ານອາດຈະເຊີນເອົາແຕ່ຫົວໜ້າຄອບຄົວມາສຶກສາອົບຮົມກໍໄດ້).

- ກຳນົດເວລາຮຽນເອກະສານ 1 ວັນ.

- ພາຍຫຼັງຈັດຕັ້ງຮຽນສຳເລັດ ລາຍງານໃຫ້ຄະນະໂຄສະນາອົບຮົມສູນກາງພັກ ຮັບຊາບ.

ດັ່ງນັ້ນ, ຈຶ່ງແນະນຳມາເພື່ອຊາບ ແລະ ຈັດຕັ້ງປະຕິບັດໃຫ້ໄດ້ຮັບຜົນດີ.

**ຫົວໜ້າຄະນະໂຄສະນາອົບຮົມສູນກາງພັກ**

# ເອກະສານ
# ສຶກສາອົບຮົມ ການເມືອງ-ແນວຄິດເພື່ອກະກຽມດຳເນີນກອງ ປະຊຸມໃຫຍ່ຂອງພັກ 3 ຂັ້ນ ສຳລັບພະນັກງານທົ່ວໄປ ແລະ ປະຊາຊົນ

## ບົດທີ 1
## ເສີມຂະຫຍາຍມູນເຊື້ອຂອງຊາດລາວ, ຄົນລາວ

### I. ປະຫວັດຫຍໍ້ຂອງຊາດລາວ.

- ຊາດລາວເຮົາມີປະຫວັດສາດອັນຍາວນານເປັນພັນໆປີ.

- ຜູ້ນຳພາທ້ອນໂຮມປະເທດລາວຂຶ້ນທຳອິດແມ່ນ **ເຈົ້າຟ້າງຸ່ມ ຫຼື ພະຍາຟ້າງຸ່ມ**, ໂດຍໄດ້ເຄື່ອນທັບຕີເອົາຫົວເມືອງ ແລະ ແຄວ້ນຕ່າງໆ ແລ້ວໂຮມເຂົ້າກັນເປັນ 'ອານາຈັກລາວລ້ານຊ້າງ'' ຫຼື 'ປະເທດລ້ານຊ້າງ'ຊຶ່ງມີເຂດແດນອັນກວ້າງຂວາງ ແລະ ມີປະຊາກອນຫຼວງຫຼາຍ.

**- ເຈົ້າຟ້າງຸ່ມ** ໄດ້ຂຶ້ນຄອງລາດໃນປີ 1353 ຈົນເຖິງປີ 1373 ຊຶ່ງໄດ້ເຮັດໃຫ້ອານາຈັກລາວລ້ານຊ້າງເປັນອານາຈັກທີ່ເຂັ້ມແຂງໃນແຫຼມອິນດູຈີນ, ທັງມີຄວາມຈະເລີນຮຸ່ງເຮືອງທາງດ້ານສິລະປະວັດທະນະທຳ. **ເຈົ້າຟ້າງຸ່ມ** ເປັນກະສັດອົງທຳອິດທີ່ຈັດວາງລະບຽບການປົກຄອງ ຫຼື ລະບົບການບໍລິຫານອານາຈັກລາວລ້ານຊ້າງເອກະພາບ.

- ພາຍຫຼັງສະໄໝຂອງ **ເຈົ້າຟ້າງຸ່ມ** ອານາຈັກລາວລ້ານຊ້າງໄດ້ສືບຕໍ່ຂະຫຍາຍຕົວ ແລະ ໄດ້ຮັບການສ້າງສາພັດທະນາໃຫ້ມີຄວາມຈະເລີນຮຸ່ງເຮືອງໃນທຸກໆດ້ານ. ພິເສດແມ່ນສະໄໝຂອງ**ເຈົ້າໄຊເຊດຖາທິລາດ** ຊຶ່ງເປັນຜູ້ລິເລີ່ມສ້າງ**ເມືອງວຽງຈັນເປັນນະຄອນຫຼວງ** ໃນປີ 1560 ພ້ອມກັນນັ້ນຍັງໄດ້ສ້າງອາຄານຫໍໂຮງ ແລະ ວັດວາອາຮາມຫຼາຍແຫ່ງ ທີ່ມີຄວາມງົດງາມອັນເປັນເອກະລັກຂອງຊາດ ເຊັ່ນ: ວັດວິຊຸນ, ວັດຊຽງທອງຢູ່ຫຼວງພະບາງ, ຫໍພະແກ້ວ ແລະ ພະທາດຫຼວງຢູ່ນະຄອນຫຼວງວຽງຈັນ ແລະ ອື່ນໆ.

- ຕໍ່ມາໃນສະໄໝຂອງ **ເຈົ້າສຸລິຍະວົງສາ** (1638-1695) ອານາຈັກລາວລ້ານຊ້າງຍິ່ງໄດ້ຮັບການສ້າງສາໃຫ້ອຸດົມຮັ່ງມີ ແລະ ເຂັ້ມແຂງ ຈົນເປັນທີ່ເກງຂາມຍອມຮັບຂອງບັນດາອານາຈັກໃກ້ຄຽງ ແລະ ຊາວຕາເວັນຕົກ. **ເຈົ້າສຸລິຍະວົງສາ** ໄດ້ປົກຄອງ ແລະ ສ້າງສາປະເທດລາວ ໃຫ້ມີຄວາມເຂັ້ມແຂງທາງດ້ານການທະຫານ, ການປົກຄອງ, ເສດຖະກິດ-ການຄ້າ, ວັດທະນະທຳ ແລະ ການທູດ ຊຶ່ງເຮັດໃຫ້ບ້ານ, ເມືອງຢູ່ເຢັນເປັນສຸກ ແລະ ຈະເລີນຮຸ່ງເຮືອງເປັນເວລາຍາວນານເຖິງ 57 ປີ.

ພາຍຫຼັງການສິ້ນພະຊົນ (ເສຍຊີວິດ) ຂອງ **ເຈົ້າສຸລິຍະວົງສາ**, ອານາຈັກລາວລ້ານຊ້າງໄດ້ເກີດຄວາມຂັດແຍ່ງວຸ້ນວາຍຕໍ່ສູ້ກັນພາຍໃນ ລະຫວ່າງເຈົ້າຄອງຫົວເມືອງຕ່າງໆ ແລະ ພາຍໃນລາຊະວົງດ້ວຍກັນຈຶ່ງເຮັດໃຫ້ອານາຈັກລາວລ້ານຊ້າງອ່ອນເພຍ, ຂາດຄວາມສາມັກຄີ ຊຶ່ງເປັນໂອກາດໃຫ້ແກ່ສັກດີນາສະຫຍາມ (ໄທ) ເຂົ້າມາຢຶດເອົາເປັນເມືອງສ່ວຍ ແລະ ເມືອງຂຶ້ນແກ່ຍາວເຖິງ 114 ປີ ແຕ່ປີ (1779-1893).

- ພາຍໃຕ້ການປົກຄອງຂອງພວກສະຫຍາມມາເຖິງປີ 1804 **(ເຈົ້າອະນຸວົງ**ໄດ້ຂຶ້ນເປັນເຈົ້າແຜ່ນດິນອານາຈັກລາວລ້ານຊ້າງວຽງຈັນ, ເພິ່ນໄດ້ພະຍາຍາມຫາໂອກາດ ແລະ ໃຊ້ທຸກວິທີເພື່ອປົດປ່ອຍຊາດອອກຈາກການຄອບຄອງ ແລະ ການກົດຂີ່ຂົ່ມເຫັງຂອງພວກສັກດີນາສະຫຍາມ. **ເຈົ້າອະນຸວົງ** ເປັນກະສັດລາວທີ່ມີ

ຄວາມອົງອາດກ້າຫານ, ມີຄວາມສະຫຼຽວສະຫຼາດ ແລະ ຄວາມເກັ່ງກ້າສາມາດ ເພິ່ນໄດ້ນໍາພາປະຊາຊົນຕໍ່ສູ້ດ້ວຍຄວາມເດັດຂາດບໍ່ຍອມຈໍານົນ ແລະ ດ້ວຍນໍ້າໃຈຮັກຊາດອັນສູງສົ່ງຕ້ານກັບພວກສັກດີນາ ແລະ ກອງທັບສະຫຍາມ. ເນື່ອງຈາກມີກໍາລັງພົນໜ້ອຍກວ່າ ແລະ ບໍ່ມີອາວຸດທີ່ທັນສະໄໝຄືພວກສະຫຍາມ, ຂະບວນການຕໍ່ສູ້ຂອງເພິ່ນຈຶ່ງບໍ່ໄດ້ຮັບໄຊຊະນະ; **ເຈົ້າອະນຸວົງ** ໄດ້ຖືກພວກສັກດີນາສະຫຍາມຈັບໄປທໍລະມານ ແລະ ປະຫານຊີວິດຢ່າງໂຫດຮ້າຍປ່າເຖື່ອນເໝືອນສັດເດຍລະສານ.

- ພາຍຫຼັງການເສຍຊີວິດຂອງ **ເຈົ້າອະນຸວົງ** ພວກສັກດີນາສະຫຍາມໄດ້ທໍາລາຍເຜົ້າຜານເມືອງວຽງຈັນ, ກວາດຕ້ອນເອົາຄົນລາວໄປເປັນທາດຮັບໃຊ້ ຫຼື ເປັນຂ້ອຍຂ້າ, ທັງປຸ້ນສະດົມເອົາຊັບສິນອັນມີຄ່າຂອງປະເທດເຮົາໄປປະເທດເຂົາເປັນຈໍານວນຫຼວງຫຼາຍ. ຍິ່ງໄປກວ່ານັ້ນ ພວກເຂົາຍັງສົມຮູ້ຮ່ວມຄິດກັບພວກລ່າເມືອງຂຶ້ນຝຣັ່ງເຊັນສັນຍາໃນ ວັນທີ 3 ຕຸລາ 1893 ເພື່ອແບ່ງດິນແດນຂອງອານາຈັກລາວລ້ານຊ້າງ; ຕັ້ງແຕ່ນັ້ນມາຜືນແຜ່ນດິນລາວຈຶ່ງຖືກຕັດແບ່ງ ແລະ ພວກລ່າເມືອງຂຶ້ນຝຣັ່ງໄດ້ເຂົ້າມາປົກຄອງລາວ ເປັນເວລາ 61 ປີ ແຕ່ປີ (1893-1954; ເປັນຫົວເມືອງຂຶ້ນແບບໃໝ່ຂອງຈັກກະພັດອາເມລິກາເປັນເວລາ 20 ປີ ແຕ່ປີ (1955-1975).

ຕັ້ງແຕ່ທໍາອິດທີ່ພວກລ່າເມືອງຂຶ້ນຝຣັ່ງ ແລະ ຈັກກະພັດອາເມລິກາໄດ້ເຂົ້າມາຢຶດຄອງປະເທດເຮົາກໍໄດ້ມີຂະບວນການຕໍ່ສູ້ເກີດຂຶ້ນຢ່າງຕໍ່ເນື່ອງ, ຍືດເຍື້ອຍາວນານ ແລະ ພິລະອາດຫານທີ່ສຸດ ເປັນຕົ້ນແມ່ນຂະບວນການຕໍ່ສູ້ຂອງ**ອົງແກ້ວ-ອົງກົມມະດໍາ** ຢູ່ພາກໃຕ້ ແຕ່ປີ 1901-1936; ຂະບວນການຕໍ່ສູ້ຂອງ **ພໍ່ກະດວດ** ຢູ່ພາກກາງ ແຕ່ປີ 1901-1903; ຂະບວນການຕໍ່ສູ້ຂອງ**ນາຍຄູຄໍາ** ຢູ່ວຽງຈັນ ໄດ້ນໍາພາປະຊາຊົນລຸກຂຶ້ນຕໍ່ສູ້ຕ້ານການຮຸກຮານຂອງພວກລ່າເມືອງຂຶ້ນຝຣັ່ງ ໃນປີ1920; ຂະບວນການຕໍ່ສູ້ຂອງ**ເຈົ້າຟ້າປັດໄຈ** ແຕ່ປີ 1918-1922 ແລະ ຜູ້ອື່ນໆ ຢູ່ທາງພາກເໜືອ. ເມື່ອມີພັກປະຊາຊົນປະຕິວັດລາວນໍາພາຂະບວນການຕໍ່ສູ້ຂອງປະຊາຊົນລາວເຜົ່າຕ່າງໆ ຍິ່ງເຕີບໃຫຍ່ຂະຫຍາຍຕົວເປັນກ້າວໆ ແລະ ໄດ້ຮັບໄຊຊະນະອັນເປັນປະຫວັດການ ໃນວັນທີ 2 ທັນວາ 1975.

## II. ມູນເຊື້ອຂອງຊາດລາວ, ຄົນລາວ.

### 1. ມູນເຊື້ອຮັກຊາດ.

ປະຊາຊົນລາວບັນດາເຜົ່າມີມູນເຊື້ອຕໍ່ສູ້ພິລະອາດຫານບໍ່ຍອມຈໍານົນນັບແຕ່ພວກສັກດີນາຕ່າງດ້າວ ແລະ ພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ ແລະ ແບບໃໝ່ເຂົ້າມາບຸກຢຶດ ແລະ ຮຸນຮານປະເທດເຮົາ, ໂດຍບໍ່ຍອມເປັນຂ້ອຍຂ້າ, ບໍ່ຍອມເສຍປະເທດຊາດ, ເຖິງວ່າສະໄໝກ່ອນບໍ່ທັນມີພັກນໍາພາ ແຕ່ປະຊາຊົນລາວບັນດາເຜົ່າ ກໍລ້ວນແຕ່ມີຂະບວນການຕໍ່ສູ້ຕ້ານການຮຸກຮານຂອງພວກສັດຕູ ຄື: ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານການຮຸກຮານຂອງສັກດີນາສະຫຍາມ, ຂະບວນການຕໍ່ສູ້ຂອງປະຊາຊົນລາວຕ້ານການຮຸກຮານ ແລະ ຄອບຄອງຂອງພວກລ່າເມືອງຂຶ້ນຝຣັ່ງພາຍໃຕ້ການນໍາພາຂອງພໍ່ກະດວດ, ອົງແກ້ວ-ອົງກົມມະດໍາ, ເຈົ້າຟ້າປັດໄຈ ແລະ ອື່ນໆ.

ເມື່ອມີພັກນໍາພາ, ປະຊາຊົນລາວບັນດາເຜົ່າໄດ້ສາມັກຄີກັນ ລຸກຂຶ້ນຕໍ່ສູ້ຕ້ານການຮຸກຮານຂອງພວກລ່າເມືອງຂຶ້ນແບບໃໝ່ຢ່າງພິລະອາດຫານ ເຮັດໃຫ້ສັດຕູຜູ້ຮຸກຮານຖືກປະລາໄຊ, ສາມາດກອບກູ້ເອົາຄວາມເປັນເອກະລາດ, ອໍານາດອະທິປະໄຕ ແລະ ຜືນແຜ່ນດິນອັນຄົບຖ້ວນຄືນມາ. ຄວາມຮັກຊາດຂອງປະຊາຊົນລາວບັນດາເຜົ່າໄດ້ກາຍເປັນມູນເຊື້ອຮັກຊາດ ຊຶ່ງປະຊາຊົນລາວບັນດາເຜົ່າຕ້ອງປົກປັກຮັກສາ ແລະ ເສີມຂະຫຍາຍໃຫ້ນັບມື້ສູງຂຶ້ນເລື້ອຍໆ.

### 2. ມູນເຊື້ອສາມັກຄີປອງດອງເປັນເອກະພາບກັນ.

ຄວາມສາມັກຄີປອງດອງ ເປັນມູນເຊື້ອອັນປະເສີດຂອງຊາດລາວເຮົາ, ເປັນທາດແທ້ອັນດີງາມທີ່ມີມາແຕ່

ໃດໆຂອງປະຊາຊົນລາວບັນດາເຜົ່າ. ເມື່ອຫວນຄືນເບິ່ງຂະບວນວິວັດແຫ່ງການຂະຫຍາຍຕົວຂອງຊາດລາວເຮົາ, ພວກເຮົາໄດ້ເຫັນແຈ້ງວ່າ ຄວາມສາມັກຄີປອງດອງເປັນປັດໄຈສຳຄັນກວ່າໝູ່ຂອງຄວາມເປັນເອກະລາດແຫ່ງຊາດ ຄວາມຮຸ່ງເຮືອງຂອງປະເທດຊາດ ແລະ ຄວາມຢູ່ເຢັນເປັນສຸກຂອງປະຊາຊົນລາວບັນດາເຜົ່າ. ແຕ່ດຶກດຳບັນມາ, ປະຊາຊົນລາວບັນດາເຜົ່າ ລ້ວນແຕ່ມີຄວາມສາມັກຄີປອງດອງກັນ ຮັກຫອມຕອມຕຸ້ມກັນບໍ່ເຄີຍບຽດຢຶດ ຫຼື ບຸກໂຈມຕີກັນ.

**+ ຄວາມສາມັກຄີປອງດອງຂອງປະຊາຊົນລາວບັນດາເຜົ່າໃນແຕ່ລະຍຸກສະໄໝສະແດງອອກ ດັ່ງນີ້:**

- ປະຊາຊົນລາວບັນດາເຜົ່າໄດ້ສາມັກຄີກັນເປັນປຶກແຜ່ນລຸກຂຶ້ນຕໍ່ສູ້ຕ້ານການຮຸກຮານຄອບຄອງ, ແບ່ງແຍກຂອງພວກສັກດີນາ ແລະ ພວກຈັກກະພັດລ່າເມືອງຂຶ້ນແບບເກົ່າ, ແບບໃໝ່ ເພື່ອປົກປັກຮັກສາຄວາມເປັນເອກະລາດແຫ່ງຊາດ.
- ປະຊາຊົນລາວບັນດາເຜົ່າ ໄດ້ສາມັກຄີກັນປົກປັກຮັກສາ ແລະ ສ້າງສາປະເທດຊາດ.
- ປະຊາຊົນລາວບັນດາເຜົ່າໃນທົ່ວປະເທດມີການດຳລົງຊີວິດຢູ່ສະຫຼັບສັບຫວ່າງກັນ, ເປັນແກ່ວ, ເປັນດອງກັນລະຫວ່າງຊົນເຜົ່ານີ້ກັບຊົນເຜົ່າອື່ນຢ່າງມີຄວາມສຸກ.
- ປະຊາຊົນເຜົ່າຕ່າງໆໃນທົ່ວປະເທດມີພື້ນຖານວັດທະນະທຳ-ສັງຄົມຮ່ວມກັນ, ເຖິງວ່າລະດັບການຂະຫຍາຍຕົວບໍ່ສະໝໍ່າສະເໝີກັນກໍຕາມ, ແຕ່ລະຊົນເຜົ່າລ້ວນແຕ່ມີພື້ນຖານວັດທະນະທຳລວມຂອງຊາດ ຊຶ່ງແມ່ນການປະສົມປະສານສິ່ງຍອດຍິ່ງທາງດ້ານວັດທະນະທຳຂອງທຸກຊົນເຜົ່າຢ່າງກົມກຽວ, ມີຕົວໜັງສື ແລະ ມີພາສາກາງຮ່ວມກັນ ແລະ ແຕ່ລະຊົນເຜົ່າ ກໍຍັງຮັກສາພາສາປາກເວົ້າ, ຮີດຄອງປະເພນີທີ່ເປັນເອກະລັກຂອງຊົນເຜົ່າຕ່າງໆຢູ່. ອັນນີ້, ໄດ້ສະແດງເຖິງຄວາມສະໜັກໃຈຜູກພັນກັນຢ່າງສະໜິດແໜ້ນ, ສາມັກຄີເອື້ອເຟື້ອເພື່ອແຜ່ຊ່ວຍເຫຼືອຊຶ່ງກັນ ແລະ ກັນ.

ກອງປະຊຸມໃຫຍ່ຄັ້ງທີ X ຂອງພັກ ໄດ້ຢັ້ງຢືນຢ່າງໜັກແໜ້ນວ່າ: ການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາຂອງທົ່ວປວງຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກເປັນມູນເຊື້ອ, ເປັນກຳລັງແຮງຊະນະເລີດ ແລະ ເປັນປັດໄຈພື້ນຖານໃຫ້ແກ່ການສ້າງ ແລະ ຮັກສາສະຖຽນລະພາບທາງການເມືອງ ແລະ ຄວາມສະຫງົບທາງສັງຄົມຢ່າງໜັກແໜ້ນ, ຮັບປະກັນໃຫ້ແກ່ການປົກປັກຮັກສາໝາກຜົນຂອງການປະຕິວັດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ຢ່າງໝັ້ນຄົງ ກໍຄື ການສ້າງສາພັດທະນາປະເທດຊາດໃຫ້ບັນລຸໄດ້ຕາມຈຸດໝາຍທີ່ກຳນົດໄວ້.

## 3. ມູນເຊື້ອດຸໝັ່ນຂະຫຍັນພຽນ.

ຄົນລາວເປັນຄົນດຸໝັ່ນຂະຫຍັນພຽນ ແລະ ມີຫົວຄິດປະດິດສ້າງໃນການອອກແຮງງານ ເພື່ອຕໍ່ສູ້ກັບທຳມະຊາດ ແລະ ດັດແປງທຳມະຊາດມາຮັບໃຊ້ຊີວິດການເປັນຢູ່ຂອງຕົນ. ແຕ່ບູຮານມາ, ບັນດາເຜົ່າລາວລ້ວນແຕ່ມີຄວາມດຸໝັ່ນຂະຫຍັນພຽນໃນການທຳມາຫາກິນປູກຝັງ-ລ້ຽງສັດ, ຜະລິດຫັດຖະກຳກຸ້ມຕົນເອງ. ຄຳວ່າ **ໄປຢຽບໝາມາຢຽບຂຽດ'**ແມ່ນຄຳເວົ້າທີ່ຍ້ອງຍໍສັນລະເສີນຄວາມດຸໝັ່ນຂະຫຍັນພຽນຂອງປະຊາຊົນບັນດາເຜົ່າ.

ຕະຫຼອດທຸກໄລຍະປະຫວັດສາດແຫ່ງການປົກປັກຮັກສາປະເທດຊາດ ນັບເປັນພັນໆປີຜ່ານມານັ້ນ ບັນພະບູລຸດລາວບັນດາເຜົ່າ, ປູ່ຍ່າ, ຕາຍາຍຂອງພວກເຮົາ ກໍໄດ້ສ້າງວິລະກຳໄວ້ຢ່າງຫຼວງຫຼາຍ ເພື່ອຖ່າຍທອດປົດຮຽນໄວ້ໃຫ້ແກ່ເຊັ່ນລູກ, ເຊັ່ນຫຼານຮຸ່ນຕໍ່ໆມາ. ມາໃນຍຸກສະໄໝມີພັກນຳພາ ພວກເຮົາຕ້ອງໄດ້ເສີມຂະຫຍາຍມູນເຊື້ອດຸໝັ່ນຂະຫຍັນພຽນດັ່ງກ່າວ ເພື່ອລຶບລ້າງຄວາມທຸກຍາກ, ຫຼ້າຫຼັງ, ພາປະເທດຊາດກ້າວຂຶ້ນສູ່ວັດທະນະ

ຖາວອນ.

**4. ມູນເຊື້ອປະດິດສ້າງທາງດ້ານສິລະປະ-ວັດທະນະທຳ.**

ຜ່ານເວລາເປັນພັນໆປີ, ຄົນລາວໄດ້ປະດິດຄິດສ້າງວັດທະນະທຳທາງວັດຖຸ ແລະ ຈິດໃຈ ອັນເປັນເອກະລັກທີ່ມີຄຸນຄ່າໄວ້ຢ່າງຫຼວງຫຼາຍ. ຄົນລາວແຕ່ລະເຜົ່າລ້ວນແຕ່ມີເອກະລັກທາງດ້ານສິລະປະ-ວັດທະນະທຳ ແລະ ຮີດຄອງຂອງຕົນ ຊຶ່ງແມ່ນໝາກຜົນຈາກການອອກແຮງງານ ແລະ ການດຳລົງຊີວິດຂອງເຂົາເຈົ້າ ເຊັ່ນ: ການຄວັດ, ການແກະສະຫຼັກ, ການຕ່ຳຫູກທໍ່ໄໝ, ການປັ້ນໝໍ້ຫຼໍ່ໄຫ... ຊຶ່ງແມ່ນສິ່ງປະດິດສ້າງທີ່ມີຄ່າທີ່ສຸດ ທີ່ພວກເຮົາຄົນລາວຕ້ອງມີຄວາມເອກອ້າງທະນົງໃຈຕໍ່ມູນເຊື້ອວັດທະນະທຳຂອງຕົນ, ພ້ອມກັນເປັນເຈົ້າການປົກປັກຮັກສາພັດທະນາເພື່ອສືບທອດຕໍ່ໆໄປບໍ່ໃຫ້ສູນຫາຍ. ບັນພະບູລຸດຂອງພວກເຮົາ ໄດ້ສອນໄວ້ວ່າ: **ເສຍວັດທະນະທຳແມ່ນເສຍຊາດ'ຫຼື ວັດທະນະທຳບອກຊາດ ມາລະຍາດບອກຕະກຸນ.**

**5. ມູນເຊື້ອຍິ້ມແຍ້ມແຈ່ມໃສ, ໂອບເອື້ອເພື່ອແຜ່, ສັດຊື່ ແລະ ກະຕັນຍູຮູ້ບຸນຄຸນ.**

ຄົນລາວເຮົາເປັນຄົນມັກຄວາມສະຫງົບສັນຕິ, ບໍ່ມັກໃຊ້ຄວາມຮຸນແຮງຕໍ່ຜູ້ອື່ນ ແລະ ຍິ້ມແຍ້ມແຈ່ມໃສທັງມີນິດໄສເອື້ອເຟື້ອເພື່ອແຜ່, ກວ້າງຂວາງ ແລະ ມີນ້ຳໃຈໄມຕີຕໍ່ເພື່ອນມິດ, ຕໍ່ແຂກທີ່ມາຢ້ຽມຢາມ. ພ້ອມກັນນັ້ນ, ຄົນລາວເຮົາຍັງເປັນຄົນສຸພາບຮຽບຮ້ອຍ, ນອບນ້ອມຖ່ອມຕົນ, ຮູ້ເຫັນໃຈ, ສັດຊື່, ຮັກຫອມຄວາມເປັນທຳຮູ້ສຳມາຄາລະວະ ແລະ ມີຄວາມກະຕັນຍູຮູ້ບຸນຄຸນ.

ທັງໝົດເຫຼົ່ານີ້ ແມ່ນຄຸນຄ່າຂອງຄົນລາວທີ່ໄດ້ຜ່ານການທົດສອບໃນສະຖານະການຕ່າງໆ ເປັນເວລາຫຼາຍຮ້ອຍຫຼາຍພັນປີມາແລ້ວ. ພວກເຮົາຈຶ່ງສືບທອດມູນເຊື້ອອັນດີງາມດັ່ງກ່າວໄວ້ໃຫ້ຄົງຢູ່ຄູ່ກັບຄົນລາວເຮົາຕະຫຼອດໄປ.

**III. ວິທີການເສີມຂະຫຍາຍມູນເຊື້ອຂອງຊາດລາວ, ຄົນລາວ.**

1. ຄະນະພັກ, ອົງການປົກຄອງທຸກຂັ້ນ ຕ້ອງເອົາໃຈໃສ່ເສີມຂະຫຍາຍຄວາມສາມັກຄີປອງດອງຂອງປະຊາຊົນບັນດາເຜົ່າ, ສ້າງທຸກເງື່ອນໄຂໃຫ້ແຕ່ລະຊົນເຜົ່າໄດ້ເຂົ້າຮ່ວມປົກປັກຮັກສາ ແລະ ສ້າງສາພັດທະນາເສດຖະກິດ-ສັງຄົມ ເພື່ອລຶບລ້າງຄວາມທຸກຍາກດ້ວຍການຫັນລົງຮາກຖານ, ລົງໃກ້ຊິດຕິດແທດປະຊາຊົນ ແລະ ສຶກສາອົບຮົມການເມືອງ-ແນວຄິດໃຫ້ປະຊາຊົນເຜົ່າຕ່າງໆຢ່າງເປັນປະຈຳ, ເນື່ອງນິດລຽນຕິດດ້ວຍເນື້ອໃນອຸດົມສົມບູນ ແລະ ຖືກຕ້ອງແທດເໝາະກັບແຕ່ລະຊົນເຜົ່າ.

2. ຕ້ອງໂຄສະນາອະທິບາຍໃຫ້ຊົນເຜົ່າຕ່າງໆ ເຫັນແຈ້ງກົນອຸບາຍຂອງພວກອິທິກຳລັງປໍລະປັກ ແລະ ພວກຄົນທີ່ບໍ່ຫວັງດີທີ່ຫວັງມ້າງເພຄວາມສາມັກຄີປອງດອງລະຫວ່າງເຜົ່າ. ເອົາໃຈໃສ່ສຶກສາອົບຮົມບັນດາເຜົ່າໃຫ້ມີຄວາມຮັກຫອມຕອມຕຸ້ມ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ໄປຄຽງຄູ່ກັບການຮັບປະກັນຄວາມສະເໝີພາບລະຫວ່າງຊົນເຜົ່າຕ່າງໆ.

3. ສົ່ງເສີມຄວາມຮູ້, ຄວາມສາມາດທີ່ບົ່ມຊ້ອນຂອງແຕ່ລະເຜົ່າດ້ານທຶນຮອນ, ສະຕິປັນຍາ ແລະ ປະສົບການເຂົ້າໃນການພັດທະນາເສດຖະກິດ-ສັງຄົມ ບົນພື້ນຖານຖືກຕ້ອງຕາມລະບຽບກົດໝາຍ ເພື່ອປັບປຸງຊີວິດການເປັນຢູ່ໃຫ້ດີຂຶ້ນເປັນກ້າວໆ.

4. ປຸກລະດົມໃຫ້ແຕ່ລະຊົນເຜົ່າເຂົ້າຮ່ວມໃນຂະບວນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເອົາໃຈໃສ່ສຶກສາອົບຮົມ ແລະ ແກ້ໄຂແນວຄິດຂັດຂ້ອງໝອງໃຈຂອງຊົນເຜົ່າ ທີ່ມີຕໍ່ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ, ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ ເພື່ອໃຫ້ເຂົາເຈົ້າມີຄວາມເພິ່ງພໍໃຈ, ເຫັນດີເຫັນພ້ອມ ແລະ ມີສ່ວນຮັບຜິດຊອບກັບພັກ-ລັດ.

5. ສຶກສາອົບຮົມໃຫ້ທຸກຊົນເຜົ່າຕ້ານການເຊື່ອຖືງົມງວາຍ, ສົ່ງເສີມຮີດຄອງປະເພນີ-ວັດທະນະທຳອັນກ້າວໜ້າ, ເພີ່ມທະວີຄວາມດຸໝັ່ນຂະຫຍັນພຽນ ແລະ ອົດທົນໃນການອອກແຮງງານທຳມາຫາກິນ, ຜ່ານຜ່າຄວາມທຸກຍາກ ແລະ ມີຈິດໃຈປະຢັດມັດທະຍັດ, ສາມັກຄີກັນສ້າງບ້ານຂອງຕົນ ໃຫ້ເປັນບ້ານແບບຢ່າງທາງດ້ານວັດທະນະທຳ, ບ້ານປອດຄະດີ, ປອດຢາເສບຕິດ, ເປັນບ້ານອະນາໄມສາມສະອາດ ແລະ ບ້ານແບບຢ່າງໃນການພັດທະນາ.

6. ປັບປຸງກົງຈັກການຈັດຕັ້ງ ທີ່ຮັບຜິດຊອບວຽກງານຊົນເຜົ່າໃນແຕ່ລະຂັ້ນ ນັບແຕ່ຂັ້ນສູນກາງລົງຮອດທ້ອງຖິ່ນໃຫ້ໜັກແໜ້ນ, ເຂັ້ມແຂງ ແລະ ສາມາດເຄື່ອນໄຫວໄດ້ເປັນຢ່າງດີ.

# ບົດທີ 2
# ສັງຄົມສາມັກຄີປອງດອງແມ່ນບໍ່ເກີດແຫ່ງກຳ ລັງແຮງຂອງການປົກປັກຮັກສາ ແລະ ພັດທະນາປະເທດຊາດ

## I. ຄວາມໝາຍ ແລະ ຄວາມສຳຄັນຂອງສັງຄົມສາມັກຄີປອງດອງ.

### 1. ຄວາມໝາຍກ່ຽວກັບສັງຄົມສາມັກຄີປອງດອງ.

- ສັງຄົມສາມັກຄີປອງດອງ ແມ່ນສັງຄົມທີ່ມີຄວາມສາມັກຄີເປັນປຶກແຜ່ນ ຫຼື ເປັນອັນໜຶ່ງ, ອັນດຽວກັນຂອງຄົນພາຍໃນຊາດ.
- ສັງຄົມສາມັກຄີປອງດອງ ແມ່ນມູນເຊື້ອອັນປະເສີດຂອງຊາດລາວ ເປັນບັນຫາສຳຄັນຕົ້ນຕໍໃນແນວທາງການເມືອງຂອງພັກປະຊາຊົນປະຕິວັດລາວ.

### 2. ຄວາມສຳຄັນຂອງສັງຄົມສາມັກຄີປອງດອງ.

- ສັງຄົມສາມັກຄີປອງດອງ ເປັນປັດໄຈສຳຄັນທີ່ສຸດ ໃນການເສີມສ້າງສະຖຽນລະພາບທາງການເມືອງ ແລະ ຄວາມສະຫງົບປອດໄພ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ.
- ບົດຮຽນປະຫວັດສາດຂອງຊາດລາວ ໄດ້ຊີ້ໃຫ້ເຫັນວ່າ ສັງຄົມສາມັກຄີປອງດອງ ເປັນພື້ນຖານແຫ່ງການຄົງຕົວ ແລະ ຂະຫຍາຍຕົວຂອງຊາດ, ເປັນກຳລັງແຮງທີ່ຊະນະເລີດຂອງການປະຕິວັດ ທັງເປັນກຳລັງແຮງໃນການປົກປັກຮັກສາ ແລະ ພັດທະນາປະເທດຊາດໄປສູ່ຈຸດໝາຍທີ່ພັກເຮົາໄດ້ກຳນົດໄວ້ໃຫ້ເປັນຈິງ. ສຸພາສິດບູຮານລາວເຄີຍເວົ້າວ່າ: ໄມ້ລຳດຽວລ້ອມຮົ້ວບໍ່ໄຂວ່, ໃຜ່ບໍ່ພ້ອມແປງບ້ານບໍ່ເຮືອງ.
- ໃນຄວາມເປັນຈິງແລ້ວ, ການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດໜຶ່ງໆ ແມ່ນກຳລັງແຮງພາຍໃນຊາດນັ້ນໆເປັນປັດໄຈຕັດສິນ. ສະນັ້ນ, ການສ້າງສັງຄົມສາມັກຄີປອງດອງ ເນື້ອແທ້ແມ່ນການເຕົ້າໂຮມກຳລັງແຮງຂອງບັນດາຊົນຊັ້ນ, ຊັ້ນຄົນ ແລະ ທຸກພາກສ່ວນເສດຖະກິດໃນອົງຄະນະຍາດແຫ່ງຊາດນັ້ນໆ. ໂດຍຍຶດໝັ້ນຄຳສຸພາສິດ ກໍຄືສັດຈະທຳດັ່ງກ່າວ, ພັກປະຊາຊົນປະຕິວັດລາວ ນັບແຕ່ມື້ກຳເນີດ, ຍາມໃດກໍຖືສຳຄັນ ແລະ ເອົາໃຈໃສ່ເປັນພິເສດຕໍ່ການເຕົ້າໂຮມຄວາມສາມັກຄີລະຫວ່າງປະຊາຊົນລາວບັນດາເຜົ່າ. ມະຕິກອງປະຊຸມໃຫຍ່ຂອງພັກໃນແຕ່ລະຄັ້ງ ກໍໄດ້ເນັ້ນໜັກບັນຫາດັ່ງກ່າວ, ໃນເອກະສານກອງປະຊຸມໃຫຍ່ ຄັ້ງທີ X ຂອງພັກ ໄດ້ເນັ້ນໜັກວ່າ: ການເພີ່ມທະວີຄວາມສາມັກຄີເປັນປຶກແຜ່ນແໜ້ນໜາຂອງທົ່ວປວງຊົນລາວບັນດາເຜົ່າ ພາຍໃຕ້ການນຳພາຂອງພັກເປັນມູນເຊື້ອ, ເປັນກຳລັງແຮງຊະນະເລີດ ແລະ ເປັນປັດໄຈພື້ນຖານໃຫ້ແກ່ການສ້າງ ແລະ ຮັກສາສະຖຽນລະພາບທາງການເມືອງ ແລະ ຄວາມສະຫງົບທາງສັງຄົມຢ່າງໜັກແໜ້ນ, ຮັບປະກັນໃຫ້ແກ່ການປົກປັກຮັກສາ ໝາກຜົນຂອງການປະຕິວັດ ແລະ ຜືນແຜ່ນດິນອັນຄົບຖ້ວນຂອງປະເທດຊາດໄວ້ຢ່າງໝັ້ນຄົງ ກໍຄືການສ້າງສາພັດທະນາປະເທດຊາດໃຫ້ບັນລຸໄດ້ຕາມຈຸດໝາຍທີ່ກຳນົດໄວ້.

## II. ເນື້ອໃນຕົ້ນຕໍເພື່ອສ້າງສັງຄົມສາມັກຄີປອງດອງ.

1. ເຄົາລົບສິດສະເໝີພາບລະຫວ່າງເຜົ່າ; ທຸກຊົນເຜົ່າມີຄວາມເປັນເອກະພາບ ກັບແນວທາງຂອງພັກ ແລະ ມີຄວາມສະເໝີພາບຕໍ່ໜ້າກົດໝາຍ.

2. ແຕ່ລະເຜົ່າຕ້ອງມີຄວາມເຄົາລົບນັບຖືຊຶ່ງກັນ ແລະ ກັນ, ມີຄວາມໄວ້ວາງໃຈກັນ ແລະ ມີຄວາມຈິງໃຈຕໍ່ກັນ, ບໍ່ມີການຈຳແນກຊົນເຜົ່າ ແລະ ພ້ອມກັນຈຳກັດທຸກການກະທຳທີ່ເປັນການທຳລາຍຄວາມສາມັກຄີປອງ

ດອງຂອງຄົນພາຍໃນຊາດ.

3. ແຕ່ລະຊົນເຜົ່າຕ້ອງຮັກຫອມຕອມຕຸ້ມກັນຄືກັບອ້າຍນ້ອງຄິງໃນຄອບຄົວດຽວກັນ, ຄົນລາວຈະແມ່ນຊົນເຜົ່າໃດ, ຢູ່ໃສກໍຕ້ອງຮັກແພງກັນ; ພ້ອມກັນເອົາໃຈໃສ່ຈໍາກັດແກ້ໄຂແນວຄິດທ້ອງຖິ່ນ, ພັກພວກ, ແນວຄິດຖືຕົວຕໍ່າ, ແນວຄິດອວດອົ່ງທະນົງຕົວ, ແນວຄິດດູໝິ່ນກັນ, ເອົາໃຈໃສ່ຕ້ານທຸກກົນອຸບາຍຂອງອິທິກໍາລັງປໍລະປັກທີ່ຫວັງທໍາລາຍຄວາມສາມັກຄີປອງດອງລະຫວ່າງເຜົ່າ.

4. ແຕ່ລະຊົນເຜົ່າ ຕ້ອງມີຄວາມຕື່ນຕົວເປັນເຈົ້າການພັດທະນາຕົນເອງ ໃຫ້ຫຼຸດພົ້ນອອກຈາກຄວາມທຸກຍາກ ແລະ ສ້າງຄວາມຮັ່ງມີຜາສຸກໃຫ້ແກ່ຄອບຄົວ ແລະ ພ້ອມກັນສ້າງຄວາມມັ່ງຄັ່ງເຂັ້ມແຂງໃຫ້ແກ່ປະເທດຊາດ. ຢາກເຮັດໄດ້ແນວນັ້ນ, ບັນຫາສໍາຄັນແມ່ນແຕ່ລະຊົນເຜົ່າ ຕ້ອງເອົາໃຈໃສ່ຍົກສູງຈິດໃຈເອື້ອເຟື້ອເພື່ອແຜ່, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ເພື່ອພ້ອມກັນກ້າວໜ້າ.

## III. ທິດທາງລວມ, ວິທີການ ແລະ ມາດຕະການຕົ້ນຕໍໃນການສ້າງສັງຄົມສາມັກຄີປອງດອງ.

### 1. ທິດທາງລວມໃນການສ້າງສັງຄົມສາມັກຄີປອງດອງ.

①. ເຄົາລົບ ແລະ ປະຕິບັດສິດສະເໝີພາບລະຫວ່າງເຜົ່າ; ໂດຍສ້າງເງື່ອນໄຂໃຫ້ທຸກຊົນເຜົ່າໄດ້ເຂົ້າຮ່ວມໃນພາລະກິດປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດ, ສ້າງເງື່ອນໄຂໃຫ້ທຸກຊົນເຜົ່າໄດ້ສືບທອດ, ປົກປັກຮັກສາ ແລະ ເສີມຂະຫຍາຍມູນເຊື້ອວັດທະນະທໍາອັນເປັນມູນເຊື້ອຂອງເຜົ່າຕົນ; ເອົາໃຈໃສ່ລົບລ້າງຄວາມຫຼຸດໂຕນກັນໃນດ້ານລະດັບການຂະຫຍາຍຕົວຂອງເຜົ່າຕ່າງໆເປັນກ້າວໆ; ສ້າງເງື່ອນໄຂໃຫ້ລູກ, ຫຼານຂອງແຕ່ລະຊົນເຜົ່າໄດ້ຮັບການສຶກສາຮໍ່າຮຽນ, ປັບປຸງ ແລະ ຍົກລະດັບຊີວິດການເປັນຢູ່ຂອງແຕ່ລະເຜົ່າໃຫ້ດີຂຶ້ນ; ແກ້ໄຂແນວຄິດ ແລະ ຮີດຄອງປະເພນີອັນຫຼ້າຫຼັງ; ສ້າງເງື່ອນໄຂໃຫ້ທຸກຊົນເຜົ່າຢູ່ກິນຖືກຫຼັກສຸຂະອະນາໄມ.

②. ສຶກສາອົບຮົມປະຊາຊົນເຜົ່າຕ່າງໆ ໃຫ້ປະລະແນວຄິດຊົນເຜົ່າຄັບແຄບ, ແນວຄິດ ແລະ ການກະທໍາທີ່ເປັນການໝິ່ນປະໝາດເຜົ່າອື່ນ ຫຼື ຕີຕົວຕໍ່າ, ບໍ່ຕັ້ງໜ້າບຸກບືນກ້າວຂຶ້ນໃຫ້ທຽມກັບເຜົ່າອື່ນ; ລົບລ້າງແນວຄິດຈໍາແນກຊົນເຜົ່າ, ແນວຄິດອາຄາດບາດໝາງລະຫວ່າງເຜົ່າໃນແຕ່ລະຊົນເຜົ່າ.

③. ສືບຕໍ່ປະຕິບັດນະໂຍບາຍຕໍ່ຊາວລາວຢູ່ຕ່າງປະເທດທີ່ມີຈິດໃຈຮັກຊາດ-ຮັກລະບອບໃໝ່, ຮັກບ້ານເກີດ, ເມືອງນອນ ດ້ວຍການສ້າງໂອກາດ ແລະ ເງື່ອນໄຂສະດວກໃຫ້ແກ່ເຂົາເຈົ້າໄດ້ກັບມາຢ້ຽມຢາມຍາດພີ່ນ້ອງຂອງຕົນມາສໍາຜັດກັບຄວາມເປັນຈິງຂອງປະເທດຊາດ. ສ້າງເງື່ອນໄຂສະດວກຕາມແນວທາງຂອງພັກ ແລະ ລະບຽບກົດໝາຍຂອງລັດ ສໍາລັບຜູ້ທີ່ມີທຶນຮອນ ແລະ ມີຄວາມປະສົງຢາກທໍາມາຫາກິນຮ່ວມກັບພີ່ນ້ອງຮ່ວມຊາດຢູ່ພາຍໃນປະເທດ.

### 2. ວິທີການຕົ້ນຕໍໃນການສ້າງສັງຄົມສາມັກຄີປອງດອງ.

①. ສືບຕໍ່ປັບປຸງພັນທະພາບກໍາມະກອນ, ຊາວກະສິກອນ, ນັກຮຽນຮູ້ປັນຍາຊົນໃນເງື່ອນໄຂໃໝ່ໃຫ້ໜັກແໜ້ນພາຍໃຕ້ການນໍາພາຂອງພັກ ແລະ ການຄຸ້ມຄອງຂອງລັດ.

②. ສົ່ງເສີມຄວາມສະເໝີພາບ ແລະ ຄວາມສາມັກຄີບັນດາເຜົ່າ ບົນຈິດໃຈຮ່ວມກັນດ້ວຍຄວາມສາມັກຄີປອງດອງ, ຊ່ວຍເຫຼືອຊຶ່ງກັນ ແລະ ກັນ.

③. ເອົາໃຈໃສ່ຕີຖອຍ ແລະ ລຶບລ້າງແນວຄິດແບ່ງແຍກເຜົ່າໃຫ້ໝົດໄປ ໂດຍສະເພາະແມ່ນແນວຄິດຖືເຜົ່ານີ້ສູງ, ເຜົ່ານັ້ນຕໍ່າ, ແນວຄິດດູຖູກໝິ່ນປະໝາດເຜົ່າອື່ນ, ຈໍາກັດ ແລະ ແກ້ໄຂແນວຄິດຄັບແຄບ.

④. ຕັ້ງໜ້າຕອບຕ້ານກົນອຸບາຍ ຂອງອິທິກໍາລັງປໍລະປັກ ທີ່ຫວັງທໍາລາຍຄວາມສາມັກຄີປອງດອງລະ

ຫວ່າງປະຊາຊົນບັນດາເຜົ່າ.

⑤. ເພີ່ມທະວີການນຳພາຂອງພັກຕໍ່ວຽກງານຊົນເຜົ່າໃຫ້ແຂງແຮງກວ່າເກົ່າ, ໃນນັ້ນ ຄະນະພັກ ແລະ ອົງການປົກຄອງທຸກຂັ້ນ ຕ້ອງເອົາໃຈໃສ່ນຳພາປະຊາຊົນເຜົ່າຕ່າງໆ ປັບປຸງ ແລະ ເພີ່ມທະວີຄວາມສາມັກຄີປອງດອງລະຫວ່າງເຜົ່າ; ເປັນເຈົ້າການໂຄສະນາສຶກສາອົບຮົມປະຊາຊົນບັນດາເຜົ່າເຊື່ອມຊຶມ ແລະ ພ້ອມກັນຈັດຕັ້ງປະຕິບັດແນວທາງນະໂຍບາຍສາມັກຄີປອງດອງພາຍໃນຊາດໃຫ້ເປັນຈິງ.

## 3. ມາດຕະການຕົ້ນຕໍເພື່ອສ້າງສັງຄົມສາມັກຄີປອງດອງ.

①. ຫັນລົງສູ່ຮາກຖານປະຊາຊົນ, ເອົາໃຈໃສ່ສຶກສາອົບຮົມແນວຄິດ-ການເມືອງໃຫ້ປະຊາຊົນບັນດາເຜົ່າເປັນປະຈຳ, ເນື່ອງນິດລຽນຕິດ ດ້ວຍເນື້ອໃນທີ່ອຸດົມສົມບູນ, ແທດເໝາະກັບແຕ່ລະເປົ້າໝາຍ, ເປັນຕົ້ນແມ່ນມູນເຊື້ອຂອງຊາດ, ມູນເຊື້ອຂອງເຜົ່າ, ແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍ ແລະ ແຜນພັດທະນາເສດຖະກິດ-ສັງຄົມຂອງລັດ.

②. ກຳແໜ້ນຜູ້ເປັນຫຼັກແຫຼ່ງມີບົດບາດສຳຄັນຂອງແຕ່ລະຊົນເຜົ່າ, ແຕ່ລະຊັ້ນຄົນ; ເອົາໃຈໃສ່ເຕົ້າໂຮມຄວາມສາມັກຄີທຸກຊົນເຜົ່າ, ຊັ້ນຄົນ, ສາສະໜາ ແລະ ເພດໄວ ບົນພື້ນຖານຄວາມເປັນເອກະພາບກັບແນວທາງຂອງພັກ; ສ້າງໃຫ້ເກີດກຳລັງແຮງໃນການແກ້ໄຂຄວາມທຸກຍາກ, ໃນການປັບປຸງຊີວິດການເປັນຢູ່ທາງດ້ານວັດຖຸແລະ ຈິດໃຈ ໃນການຮັກສາຄວາມສະຫງົບ ກໍຄື ໃນພາລະກິດປົກປັກຮັກສາ ແລະ ພັດທະນາປະເທດຊາດ.

③. ໂຄສະນາ, ອະທິບາຍໃຫ້ປະຊາຊົນບັນດາເຜົ່າ ເຫັນແຈ້ງກົນອຸບາຍຂອງອິທິກຳລັງປໍລະປັກ ທີ່ຫວັງມ້າງເພທຳລາຍຄວາມສາມັກຄີປອງດອງລະຫວ່າງເຜົ່າ; ເອົາໃຈໃສ່ສຶກສາອົບຮົມປະຊົນບັນດາເຜົ່າ ໃຫ້ມີຄວາມຮັກຫອມຕອມຕຸ້ມ ແລະ ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ພ້ອມກັນກ້າວໜ້າ.

④. ປະຕິບັດນະໂຍບາຍສົ່ງເສີມໃຫ້ແຕ່ລະຊັ້ນຄົນ ແລະ ບັນດາອົງການຈັດຕັ້ງສັງຄົມ ຂຸດຄົ້ນຄວາມອາດສາມາດບົ່ມຊ້ອນຂອງເຂົາເຈົ້າດ້ານທຶນຮອນ, ສະຕິປັນຍາ ແລະ ປະສົບການອັນກ້າວໜ້າເຂົ້າໃນການພັດ ທະນາເສດຖະກິດ-ສັງຄົມ, ຊຸກຍູ້ການປະຕິບັດສິດ ແລະ ພັນທະຕາມກົດໝາຍ ເປັນຕົ້ນແມ່ນປະຕິບັດພັນທະອາກອນໃຫ້ລັດ.

⑤. ປະຕິບັດນະໂຍບາຍສາສະໜາຢ່າງສະເໝີຕົ້ນສະເໝີປາຍ ແນໃສ່ເຕົ້າໂຮມຄວາມສາມັກຄີ ແລະ ປະຕິບັດສິດເສລີພາບໃນການເຊື່ອຖື ຫຼື ບໍ່ເຊື່ອຖືສາສະໜາຢ່າງຖືກຕ້ອງ.

⑥. ສຶກສາອົບຮົມ ແລະ ປຸກລະດົມໃຫ້ທຸກເຜົ່າ ແລະ ສາສະໜາເຂົ້າຮ່ວມໃນຂະບວນການປ້ອງກັນຊາດ-ປ້ອງກັນຄວາມສະຫງົບຢ່າງເປັນເຈົ້າການ.

⑦. ສຶກສາອົບຮົມປະຊາຊົນບັນດາເຜົ່າໃຫ້ມີຄວາມຫ້າວຫັນ, ດຸໝັ່ນ ແລະ ອົດທົນທຳມາຫາກິນ, ຜ່ານຜ່າຄວາມຫຍຸ້ງຍາກ ແລະ ມີຈິດໃຈປະຢັດມັດທະຍັດ, ສາມັກຄີກັນສ້າງບ້ານຂອງຕົນໃຫ້ເປັນບ້ານວັດທະນະທຳ, ບ້ານປອດຄະດີ, ບ້ານແບບຢ່າງດ້ານສາທາລະນະສຸກ...

⑧. ຄຸ້ມຄອງ ແລະ ປົກປ້ອງການເຄື່ອນໄຫວ ແລະ ການເຊື່ອຖືສາສະໜາຂອງປະຊາຊົນບັນດາເຜົ່າໃຫ້ຖືກຕ້ອງຕາມແນວທາງຂອງພັກ, ກົດໝາຍຂອງລັດ; ສະກັດກັ້ນບໍ່ໃຫ້ມີການສວຍໃຊ້ສາສະໜາ ເພື່ອກໍ່ໃຫ້ເກີດບັນຫາເຜົ່າ ແລະ ທຳລາຍຄວາມສາມັກຄີລະຫວ່າງເຜົ່າ ທີ່ຖືສາສະໜາຕ່າງກັນ.

⑨. ປຸກລະດົມໃຫ້ປະຊາຊົນບັນດາເຜົ່າ ເປັນເຈົ້າການປົດປ່ອຍຕົນເອງອອກຈາກຄວາມທຸກຍາກຫຼ້າຫຼັງ ແລະ ເອົາໃຈໃສ່ປະຕິບັດນະໂຍບາຍຊ່ວຍໜູນດ້ານທຶນຮອນ, ວິຊາການ ແລະ ຕະຫຼາດຈຳໜ່າຍຜົນຜະລິດແກ່ເຂົາ ເຈົ້າ ເພື່ອສົ່ງເສີມການສ້າງເສດຖະກິດຄອບຄົວ ແລະ ການຜະລິດເປັນສິນຄ້າ.

໑໐. ສ້າງພື້ນຖານໂຄງລ່າງເສດຖະກິດ ແລະ ວັດທະນະທຳ-ສັງຄົມຢູ່ຊົນນະບົດ, ເຂດພູດອຍຫ່າງໄກສອກຫຼີກເຊັ່ນ: ຫົນທາງ, ຊົນລະປະທານ, ໄຟຟ້າ, ໂຮງຮຽນ, ໂຮງໝໍ, ຕະຫຼາດຊົນນະບົດ, ສູນສົ່ງເສີມກະສິກຳ... ສ້າງກຸ່ມບ້ານພັດທະນາໃຫ້ຄ່ອຍໆກາຍເປັນໃຈກາງທາງດ້ານເສດຖະກິດ ແລະ ວັດທະນະທຳ.

**ສະຫຼຸບ:** ສັງຄົມສາມັກຄີປອງດອງ ເປັນປັດໄຈທີ່ສຳຄັນທີ່ສຸດ ໃນການເສີມສ້າງສະຖຽນລະພາບທາງການເມືອງ ແລະ ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍໃນສັງຄົມ; ຖ້າສັງຄົມມີຄວາມສາມັກຄີເປັນປຶກແຜ່ນພາຍໃນຊາດກໍຈະກາຍເປັນກຳລັງແຮງສັງລວມຂອງຊາດ ເຂົ້າໃນການປົກປັກຮັກສາ ແລະ ສ້າງສາພັດທະນາປະເທດຊາດໃຫ້ມີຄວາມໝັ້ນຄົງ ແລະ ຈະເລີນກ້າວໜ້າ.

# ບົດທີ 3
# ການແກ້ໄຂຄວາມທຸກຍາກ

## I. ຄວາມໝາຍ, ສາເຫດ ແລະ ໄພອັນຕະລາຍຂອງຄວາມທຸກຍາກ.

### 1. ຄວາມໝາຍຂອງຄວາມທຸກຍາກ.

ຄວາມທຸກຍາກແມ່ນການຂາດເຂີນປັດໄຈພື້ນຖານໃນການດໍາລົງຊີວິດປະຈໍາວັນ ຄື: ຂາດເຂີນສະບຽງອາຫານທີ່ບໍ່ສາມາດຕອບສະໜອງພະລັງງານໄດ້ 2.100 ກິໂລກະລໍຣີຕໍ່ຄົນຕໍ່ມື້, ບໍ່ມີທີ່ຢູ່ອາໄສໝັ້ນຄົງ-ຖາວອນ, ຂາດເຄື່ອງນຸ່ງຫົ່ມ ແລະ ເຄື່ອງໃຊ້ປະຈໍາວັນພາຍໃນຄອບຄົວ, ບໍ່ສາມາດໃຊ້ຈ່າຍໃນການປິ່ນປົວພະຍາດ ໃນຍາມເຈັບເປັນ, ບໍ່ສາມາດໃຊ້ຈ່າຍເຂົ້າໃນການສຶກສາ ຫຼື ບໍ່ສາມາດໄດ້ຮັບການສຶກສາຂັ້ນພື້ນຖານ, ບໍ່ມີເງື່ອນໄຂເຂົ້າເຖິງຕາໜ່າງການບໍລິການດ້ານພື້ນຖານໂຄງລ່າງທີ່ຈໍາເປັນຂອງສັງຄົມ.

**✱ ຫົວໜ່ວຍຄິດໄລ່ມາດຖານຂອງຄວາມທຸກຍາກ.**

ຕາມດໍາລັດ ເລກທີ 201/ລບ, ລົງວັນທີ 25/4/2012, ຫົວໜ່ວຍຄິດໄລ່ມາດຖານຄວາມທຸກຍາກແມ່ນຖືເອົາລາຍຮັບສະເລ່ຍຄິດໄລ່ເປັນເງິນຕໍ່ຄົນຕໍ່ເດືອນເປັນພື້ນຖານ ໂດຍບໍ່ຈໍາແນກເພດໄວ, ອາຍຸ ແລະ ຖືເອົາເງິນກີບເປັນຫຼັກ ດັ່ງນີ້:

①. ສະເລ່ຍທົ່ວປະເທດ ແມ່ນ 192.000 ກີບ/ຄົນ/ເດືອນ.

②. ສໍາລັບຢູ່ເຂດຊົນນະບົດ ແມ່ນ 180.000 ກີບ/ຄົນ/ເດືອນ.

③. ສໍາລັບຢູ່ເຂດຕົວເມືອງ ແມ່ນ 240.000 ກີບ/ຄົນ/ເດືອນ.

ຖ້າຜູ້ໃດມີລາຍໄດ້ເທົ່າກັບ ຫຼື ໜ້ອຍກວ່າມາດຕະຖານ ທີ່ກໍານົດໄວ້ຖືວ່າຜູ້ນັ້ນຍັງທຸກຍາກ.

### 2. ສາເຫດຂອງຄວາມທຸກຍາກ.

ຄວາມທຸກຍາກເກີດຈາກຫຼາຍສາເຫດ, ແຕ່ສາເຫດຕົ້ນຕໍມີດັ່ງນີ້:

①. ບໍ່ມີດິນສໍາລັບເປັນບ່ອນທໍາມາຫາກິນ ຫຼື ມີດິນ, ແຕ່ເຮັດການຜະລິດໄດ້ຮັບຜົນຜະລິດໜ້ອຍ ບໍ່ພຽງພໍກັບຄວາມຕ້ອງການພາຍໃນຄອບຄົວ ຍ້ອນຂາດຄວາມຮັບຮູ້ໃນການທໍາມາຫາກິນ.

②. ບໍ່ມີທຶນ, ບໍ່ມີພາຫະນະ ແລະ ອຸປະກອນຮັບໃຊ້ການຜະລິດ, ບໍ່ມີວິຊາຊີບ ແລະ ບໍ່ມີວຽກເຮັດງານທໍາທີ່ໝັ້ນຄົງ.

③. ບໍ່ມີການຈັດຕັ້ງຊ່ວຍເຫຼືອ ແລະ ສົ່ງເສີມດ້ານການທໍາມາຫາກິນໃຫ້ໄດ້ຮັບໝາກຜົນດີ.

④. ຂີ້ຄ້ານ, ຂາດຄວາມອົດທົນສູ້ຊົນໃນການເຮັດວຽກ, ບໍ່ຮຽນຮູ້ວິທີການຜະລິດແບບໃໝ່ທີ່ມີປະສິດທິຜົນ.

⑤. ເກີດໄພພິບັດທາງທໍາມະຊາດ (ນໍ້າຖ້ວມ, ແຫ້ງແລ້ງ...).

⑥. ບໍ່ປະຢັດ, ໃຊ້ຈ່າຍຟຸມເຟືອຍ.

⑦. ເຈັບປ່ວຍ, ອອກແຮງງານບໍ່ໄດ້ ແລະ ອື່ນໆ.

### 3. ໄພອັນຕະລາຍຂອງຄວາມທຸກຍາກ.

ຄວາມທຸກຍາກຂອງປະຊາຊົນ ແມ່ນພື້ນຖານຄວາມດ້ອຍພັດທະນາຂອງປະເທດຊາດ. ສະນັ້ນ, ຄວາມທຸກຍາກ ຈຶ່ງເປັນໄພອັນຕະລາຍອັນໃຫຍ່ຫຼວງ ດັ່ງນີ້:

*** ຕໍ່ບຸກຄົນ ແລະ ຄອບຄົວ.**

①. ຄວາມທຸກຍາກພາໃຫ້ຄົນຂາດຄວາມກະຕືລືລົ້ນ, ບໍ່ຢາກບຸກບືນສູ້ຊີນທຳມາຫາກິນ, ຖ້າເຮັດແມ່ນເຮັດພໍແລ້ວມື້ແລ້ວວັນ ຍ້ອນເຂົາຄິດວ່າເຮັດ ຫຼື ບໍ່ເຮັດກໍຍັງທຸກຄືເກົ່າ.

②. ຄວາມທຸກຍາກພາໃຫ້ຄົນເຊື່ອຖືງົມງວາຍ, ບໍ່ເຊື່ອໝັ້ນຕໍ່ຕົນເອງ, ເຂົາຄິດແຕ່ວ່າ ທຸກຍາກແມ່ນຍ້ອນບໍ່ມີບຸນວາສະໜາຄືຜູ້ອື່ນ ແລະ ມັກເອື່ອຍອີງໃສ່ຜູ້ທີ່ພັດທະນາແລ້ວ.

③. ຄົນທຸກຍາກມັກແຍກຕົວຫ່າງອອກຈາກຜູ້ອື່ນ, ຄິດລະແວງສົງໄສວ່າຜູ້ອື່ນຈະລັງກຽດຕົນຢູ່ຕະຫຼອດເວລາ.

④. ໃນບາງກໍລະນີຄວາມທຸກຍາກຍັງເຮັດໃຫ້ຄົນກະທຳໃນສິ່ງທີ່ສັງຄົມບໍ່ເພິ່ງປາຖະໜາເຊັ່ນ: ເປັນໂສເພນີ, ເສບຢາເສບຕິດ, ເປັນນັກເລງອັນທະພານ, ຂີ້ລັກງັດແງະ, ປຸ້ນຈີ້ເອົາເຄື່ອງຂອງ ຫຼື ທຳຮ້າຍຜູ້ອື່ນກໍເປັນໄດ້.

*** ຕໍ່ປະເທດຊາດ.**

①. ຄວາມທຸກຍາກເປັນສາເຫດຂອງຄວາມດ້ອຍພັດທະນາ, ເປັນສິ່ງກີດໜ່ວງຄວາມຈະເລີນກ້າວໜ້າຂອງປະເທດຊາດ.

②. ຄວາມທຸກຍາກເປັນສາເຫດຂອງຄວາມບໍ່ໝັ້ນຄົງທາງການເມືອງ; ປະເທດທີ່ມີປະຊາຊົນທຸກຍາກຫຼາຍ ມັກຈະເກີດຄວາມວຸ້ນວາຍທາງການເມືອງ ຈາລະຈົນເຮັດໃຫ້ການພັດທະນາເສດຖະກິດ-ສັງຄົມບໍ່ປະສົບຜົນສຳເລັດ.

③. ຄວາມທຸກຍາກ ຍັງເປັນສາເຫດຂອງຄວາມຂັດແຍ່ງ-ແຕກແຍກພາຍໃນໝູ່ປະຊາຊົນຊັ້ນຄົນຕ່າງໆ, ເຜົ່າຕ່າງໆ.

## II. ທັດສະນະຂອງພັກ, ທິດທາງ ແລະ ມາດຕະການເພື່ອແກ້ໄຂຄວາມທຸກຍາກ.

### 1. ທັດສະນະຂອງພັກ ກ່ຽວກັບການແກ້ໄຂຄວາມທຸກຍາກ.

ການແກ້ໄຂຄວາມທຸກຍາກຂອງປະຊາຊົນເປັນພາລະກຳຂອງພັກ, ເປັນໜ້າທີ່ບູລິມະສິດຂອງລັດ ແລະ ເປັນຄວາມຮັບຜິດຊອບທົ່ວປວງຊົນ; ຖ້າວ່າຄວາມທຸກຍາກຂອງປະຊາຊົນບໍ່ໄດ້ຮັບການແກ້ໄຂປະເທດເຮົາກໍຈະບໍ່ສາມາດຫຼຸດພົ້ນອອກຈາກສະຖານະພາບດ້ອຍພັດທະນາໄດ້ ໃນປີ 2020.

ໃນເອກະສານກອງປະຊຸມໃຫຍ່ຄັ້ງທີ X ຂອງພັກເຮົາໄດ້ກຳນົດໄວ້ວ່າ: ສືບຕໍ່ແກ້ໄຂຄວາມທຸກຍາກຂອງປະຊາຊົນບັນດາເຜົ່າໃນຂອບເຂດທົ່ວປະເທດ ໂດຍການປັບປຸງ ແລະ ສ້າງຮາກຖານການເມືອງໃຫ້ມີຄວາມໜັກແໜ້ນ ແລະ ພັດທະນາຊົນນະບົດຢ່າງຮອບດ້ານ ຕິດພັນກັບການສ້າງບ້ານພັດທະນາຕາມ 4 ເນື້ອໃນ 4 ຄາດໝາຍຄື: ພັດທະນາເສດຖະກິດເປັນໃຈກາງໄປຄຽງຄູ່ກັບການພັດທະນາດ້ານສັງຄົມ-ວັດທະນະທຳ ແລະ ການປົກປັກຮັກສາສິ່ງແວດລ້ອມ, ການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ; ຈັດສັນພູມລຳເນົາ ແລະ ອາຊີບຄົງທີ່ໃຫ້ແກ່ປະຊາຊົນຢ່າງມີຈຸດສຸມ; ສ້າງບ້ານໃຫຍ່ໃຫ້ກາຍເປັນຕົວເມືອງນ້ອຍໃນຊົນນະບົດຕິດພັນກັບການຈັດວາງກຳລັງການຜະລິດຕາມເຂດແຄວ້ນ; ເອົາໃຈໃສ່ແກ້ໄຂບັນຫາລູກລະເບີດບໍ່ທັນແຕກໃນເຂດພື້ນທີ່ໂຄງການພັດທະນາ ແລະ ຊ່ວຍເຫຼືອຜູ້ທີ່ໄດ້ຮັບຜົນກະທົບຈາກລູກລະເບີດທີ່ບໍ່ທັນແຕກຢ່າງເໝາະສົມ.

### 2. ທິດທາງໃນການແກ້ໄຂຄວາມທຸກຍາກ.

①. ຄະນະພັກ, ອົງການປົກຄອງທ້ອງຖິ່ນເປັນຜູ້ຂຶ້ນແຜນການ, ໂຄງການແກ້ໄຂຄວາມທຸກຍາກ ໂດຍເລີ່ມຈາກແຕ່ລະບ້ານຂຶ້ນມາ; ຕ້ອງກຳແໜ້ນຈຳນວນຄອບຄົວທຸກຍາກໃນແຕ່ລະບ້ານ, ແຕ່ລະເມືອງ, ແຕ່ລະແຂວງ. ອັນສຳຄັນຕ້ອງກຳໃຫ້ໄດ້ສາເຫດຂອງຄວາມທຸກຍາກຂອງແຕ່ລະຄົນ, ແຕ່ລະຄອບຄົວຢູ່ແຕ່ລະບ້ານ, ແຕ່

ລະຣາກຖານ ຈາກນັ້ນຈຶ່ງຂຶ້ນແຜນການ ແລະ ວາງຄາດໝາຍສູ້ຊົນແກ້ໄຂແຕ່ລະເປົ້າໝາຍຄອບຄົວຕາມເງື່ອນໄຂຂອງແຕ່ລະບ້ານ, ແຕ່ລະຣາກຖານ.

②. ສຶກສາອົບຮົມປຸກລະດົມ, ອະທິບາຍຊີ້ແຈງໃຫ້ແຕ່ລະຄອບຄົວ, ຜູ້ທຸກຍາກເຂົ້າໃຈ ແລະ ມີຄວາມຕື່ນຕົວເປັນເຈົ້າການແກ້ໄຂຄວາມທຸກຍາກພາຍໃນຄອບຄົວຂອງຕົນ ບົນພື້ນຖານການສະໜັບສະໜູນຊ່ວຍເຫຼືອອົງການປົກຄອງບ້ານ, ຂອງບັນດາໜ່ວຍງານທີ່ກ່ຽວຂ້ອງ.

③. ລັດເປັນຜູ້ສ້າງເງື່ອນໄຂອັນຈຳເປັນ ເພື່ອໃຫ້ປະຊາຊົນແກ້ໄຂຄວາມທຸກຍາກຂອງຕົນໄດ້ດ້ວຍຕົນເອງ ເປັນຕົ້ນແມ່ນນຳເອົາຄວາມຮູ້ໄປໃຫ້ປະຊາຊົນໂດຍເລີ່ມຈາກການສອນໃຫ້ຮູ້ອ່ານ, ຮູ້ຂຽນ, ຮູ້ອະນາໄມກັນພະຍາດ, ຮູ້ບຳລຸງຮັກສາສຸຂະພາບ, ຄວາມຮູ້ເພື່ອປະກອບອາຊີບທຳການຜະລິດເປັນສິນຄ້າ ຫຼື ເຮັດບໍລິການສ້າງລາຍໄດ້, ເຮັດການປູກຝັງ-ລ້ຽງສັດ ແລະ ຄວາມຮູ້ອື່ນໆເພື່ອເຮັດໃຫ້ຜູ້ທຸກຍາກມີຢູ່, ມີກິນພຽງພໍຂຶ້ນເປັນກ້າວໆ.

④. ສ້າງພື້ນຖານໂຄງລ່າງຮັບໃຊ້ການຜະລິດ, ຊີວິດການເປັນຢູ່ຂອງປະຊາຊົນເຊັ່ນ: ຫົນທາງ, ຊົນລະປະທານ, ໄຟຟ້າ, ບຸກເບີກເນື້ອທີ່, ຕະຫຼາດຈຳໜ່າຍຜົນຜະລິດ, ທຶນຮອນ, ເຄື່ອງມືຮັບໃຊ້ການຜະລິດ, ແນວພັນດ້ວຍການຂຸດຄົ້ນນຳໃຊ້ທ່າແຮງບົ່ມຊ້ອນກັບທີ່ຂອງປະຊາຊົນໃນແຕ່ລະບໍລິເວນ.

⑤. ສົ່ງເສີມໃຫ້ປະຊາຊົນມີການຈັດຕັ້ງຜະລິດ ແລະ ການບໍລິການສ້າງລາຍໄດ້ເຂົ້າຄອບຄົວບົນພື້ນຖານການນຳໃຊ້ທ່າແຮງກັບທີ່, ມີການລົງທຶນຢ່າງເໝາະສົມ ແລະ ມີການຊີ້ນຳ, ແນະນຳຈາກພະນັກງານຢ່າງໃກ້ຊິດ.

⑥. ຕ້ອງມີການຈັດຕັ້ງຊີ້ນຳແຕ່ສູນກາງຮອດຣາກຖານ ແລະ ມີການກຳນົດເຂດຈຸດສຸມພັດທະນາແກ້ໄຂຄວາມທຸກຍາກ ເປັນຕົ້ນແມ່ນເຂດທີ່ໝັ້ນການປະຕິວັດ, ເຂດຈຸດສຸມດ້ານການປ້ອງກັນຊາດ-ປ້ອງກັນຄວາມສະຫງົບ, ເຂດສະຫງວນຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ, ເຂດຈັດສັນພູມລຳເນົາ ແລະ ບ່ອນທຳມາຫາກິນຄົງທີ່; ສ້າງກອງທຶນພັດທະນາແກ້ໄຂຄວາມທຸກຍາກ ໂດຍແມ່ນປະຊາຊົນພາຍໃນບ້ານເປັນຜູ້ປະກອບສ່ວນ ແລະ ບໍລິຫານກອງທຶນດ້ວຍຕົນເອງ. ສຳລັບທົ່ວປະເທດນັ້ນ, ລັດຖະບານຕ້ອງສ້າງກອງທຶນ ເພື່ອແກ້ໄຂຄວາມທຸກຍາກຂຶ້ນ ຊຶ່ງລວມເອົາທຶນຈາກງົບປະມານຂອງລັດ, ຈາກການບໍລິການຂອງສັງຄົມ, ຈາກການກູ້ຢືມຈາກທະນາຄານ ແລະ ຈາກພາກສ່ວນເສດຖະກິດອື່ນໆ ລວມທັງການຊ່ວຍເຫຼືອຈາກຕ່າງປະເທດ ແລະ ອົງການສາກົນຕ່າງໆ.

⑦. ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການສົ່ງເສີມເປັນພິເສດຕໍ່ການລົງທຶນທັງພາຍໃນ ແລະ ຕ່າງປະເທດເຂົ້າໃນໂຄງການຕ່າງໆ ໂດຍສະເພາະແມ່ນໂຄງການປູກຝັງ-ລ້ຽງສັດ, ປຸງແຕ່ງຢູ່ພາຍໃນເຂດທຸກຍາກ ເປັນຕົ້ນແມ່ນນະໂຍບາຍຫຼຸດຜ່ອນ ຫຼື ຍົກເວັ້ນການເສຍພັນທະອາກອນ (ກຳນົດປີ) ໃຫ້ແກ່ບໍລິສັດ, ນິຕິບຸກຄົນທີ່ໄປລົງທຶນເຮັດການຜະລິດ-ທຸລະກິດ ທີ່ຕິດພັນກັບການແກ້ໄຂຄວາມທຸກຍາກຂອງປະຊາຊົນ. ພ້ອມກັນນັ້ນ ກໍຕ້ອງອອກແຮງຍາດແຍ່ງເອົາການຊ່ວຍເຫຼືອດ້ານທຶນຮອນ, ວັດຖຸອຸປະກອນ ແລະ ການຮ່ວມມືຈາກບຸກຄົນ ແລະ ອົງການຈັດຕັ້ງຕ່າງໆ ເພື່ອແກ້ໄຂຄວາມທຸກຍາກໃຫ້ບັນລຸຕາມລະດັບຄາດໝາຍ.

### 3. ມາດຕະການລວມ ເພື່ອແກ້ໄຂຄວາມທຸກຍາກ.

#### ①. ມາດຕະການດ້ານການສຶກສາອົບຮົມ.

1). ສຶກສາອົບຮົມໃຫ້ປະຊາຊົນລາວບັນດາເຜົ່າເຂົ້າໃຈມະຕິກອງປະຊຸມໃຫຍ່ຄັ້ງທີ X ຂອງພັກຖືກຕ້ອງຄື: ໃນຊຸມປີສະເພາະໜ້ານີ້ແມ່ນສຸມໃສ່ແກ້ໄຂຄວາມທຸກຍາກ, ບໍ່ທັນແມ່ນແກ້ໄຂບ້ານທຸກຍາກ, ເມືອງທຸກຍາກ.

2). ສຶກສາອົບຮົມໃຫ້ປະຊາຊົນລາວບັນດາເຜົ່າເຂົ້າໃຈວ່າ ຄົນທຸກຍາກ ແລະ ຄອບຄົວທຸກຍາກແມ່ນແນວໃດ ແລະ ຄວາມທຸກຍາກເປັນໄພອັນຕະລາຍແນວໃດ; ປຸກລະດົມໃຫ້ທົ່ວປວງຊົນມີຄວາມຕື່ນຕົວປະກອບ

ສ່ວນເຂົ້າໃນການແກ້ໄຂຄວາມທຸກຍາກ, ເຮັດໃຫ້ວຽກນີ້ກາຍເປັນໜ້າທີ່ລວມຂອງທົ່ວປວງຊົນ.

3). ສຶກສາອົບຮົມຄົນທຸກຍາກ, ຄອບຄົວທຸກຍາກຮູ້ເຖິງສາເຫດທີ່ພາໃຫ້ຕົນ, ຄອບຄົວທຸກຍາກ ແລະ ຕ້ອງແກ້ໄຂຄວາມທຸກຍາກຂອງຕົນ, ຂອງຄອບຄົວດ້ວຍຕົນເອງເປັນຕົ້ນຕໍ ເພາະວ່າຖ້າເຂົາເຈົ້າບໍ່ເປັນເຈົ້າການແກ້ໄຂດ້ວຍຕົນເອງແລ້ວ ການຊ່ວຍເຫຼືອຂອງລັດ, ຂອງສັງຄົມກໍຈະບໍ່ໄດ້ຮັບຜົນດີ.

**②. ມາດຕະການທາງດ້ານເສດຖະກິດ ແລະ ການສົ່ງເສີມ.**

1). ສ້າງເປັນແຜນງານ, ໂຄງການກ່ຽວກັບການລຶບລ້າງຄວາມທຸກຍາກຢ່າງລະອຽດ ໂດຍເລີ່ມຈາກທ້ອງຖິ່ນຮາກຖານຂຶ້ນມາ; ຈັດລະດັບແຜນງານ ແລະ ໂຄງການໃຫ້ຈະແຈ້ງ; ໂຄງການໃດ, ຢູ່ໃສ, ແມ່ນໃຜ, ຂັ້ນໃດ, ອົງການໃດຮັບຜິດຊອບ; ທຶນຮອນ, ພະນັກງານເອົາມາຈາກໃສ ແລະ ໃຫ້ບູລິມະສິດຄືແນວໃດ?.

2). ສ້າງກອງທຶນເພື່ອແກ້ໄຂຄວາມທຸກຍາກ ໂດຍອີງໃສ່ແຫຼ່ງທຶນຕ່າງໆ ເຊັ່ນ: ຈາກງົບປະມານຂອງລັດ, ຈາກເງິນຝາກຂອງທະນາຄານ (ມີການລະດົມສະເພາະ ແລະ ດ້ວຍວິທີຖົມຊຸມດອກເບ້ຍ), ຈາກການປຸກລະດົມການປະກອບສ່ວນຂອງສັງຄົມ, ຈາກການກູ້ຢືມ ແລະ ຊ່ວຍເຫຼືອຂອງຕ່າງປະເທດ ແລະ ອົງການສາກົນຕ່າງໆ.

**③. ມາດຕະການດ້ານການບໍລິຫານ ແລະ ຄຸ້ມຄອງ.**

1). ກຳນົດພາລະບົດບາດຂອງອົງການ ຫຼື ພາກສ່ວນທີ່ຄຸ້ມຄອງວຽກນີ້ໃຫ້ຈະແຈ້ງ, ສ້າງກົນໄກ ແລະ ລະບຽບການປະສານງານລະຫວ່າງສູນກາງກັບທ້ອງຖິ່ນ ແລະ ລະຫວ່າງພາກສ່ວນຕ່າງໆຂອງສູນກາງໃຫ້ໂລ່ງລ່ຽນ.

2). ວາງລະບຽບການຄຸ້ມຄອງ ແລະ ບໍລິຫານໂຄງການຕ່າງໆໃຫ້ເປັນລະບົບ, ຮັບປະກັນຄວາມໂປ່ງໃສ ແລະ ປະສິດທິຜົນ, ຫັນໂຄງການໄປໃຫ້ທ້ອງຖິ່ນເປັນຜູ້ຮັບຜິດຊອບຢ່າງຂາດຕົວ, ສ່ວນຂະແໜງການສູນກາງຕ້ອງສະໜັບສະໜູນຊ່ວຍເຫຼືອ.

3). ກໍ່ສ້າງພະນັກງານວິຊາການໃຫ້ພຽງພໍສຳລັບການດຳເນີນແຜນງານ ແລະ ໂຄງການຕ່າງໆ, ຮູ້ເຮັດວຽກງານປຸກລະດົມຂົນຂວາຍປະຊາຊົນ ແລະ ມີນ້ຳໃຈອົດທົນ, ຮັກແພງ ແລະ ຈິງໃຈຊ່ວຍເຫຼືອປະຊາຊົນດ້ວຍຄວາມຕື່ນຕົວຫ້າວຫັນ.

ໃນຍຸກປັດຈຸບັນນີ້, ຊາດລາວ, ຄົນລາວຢາກດຳລົງຊີວິດຮ່ວມກັບບັນດາປະຊາຄົມໂລກຢ່າງມີກຽດ, ມີສັກສີໄດ້ກໍຕໍ່ເມື່ອຄວາມທຸກຍາກຂອງປະຊາຊົນໄດ້ຮັບການແກ້ໄຂ. ເນື່ອງຈາກວ່າການແກ້ໄຂຄວາມທຸກຍາກແມ່ນໜ້າທີ່ຂອງທົ່ວປວງຊົນ. ສະນັ້ນ, ເພື່ອບັນລຸຄາດໝາຍສູ້ຊົນໃນການແກ້ໄຂຄວາມທຸກຍາກຂອງປະຊາຊົນທີ່ກຳນົດໄວ້, ຄົນລາວທຸກຄົນຕ້ອງມີຄວາມຕັດສິນໃຈສູງ, ຕື່ນຕົວເປັນເຈົ້າການປະຕິບັດບັນດາທິດທາງ ແລະ ມາດຕະການທີ່ກ່າວມາຂ້າງເທິງນັ້ນໃຫ້ເປັນຈິງ.